ກະຊວງ ກະສິກຳ ແລະ ປ່າໄມ້

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້

# ການສົ່ງເສີມ ປູກຖົ່ວເຫຼືອງ ເພື່ອເປັນສິນຄ້າ:

## ຕົວກຳນົດຄວາມສຳເລັດຜົນ ແລະ ຜົນກະທົບ ທີ່ອາດເກີດຂື້ນໃນຕໍ່ໜ້າ







ການຮ່ວມມື ສຶກສາຊ່ວງໄລຍະສັ້ນໂດຍ
ໂຄງການຍ່ອຍ ການສົ່ງເສີມ/ການຄົ້ນຄວ້າ ລະບົບການປູກຝັງ
ແລະ ໂຄງການຍ່ອຍ ເສດຖະກິດ-ສັງຄົມ

ໂຄງການ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ-ຊູແອດ
ກັນຍາ 2005

ກະຊວງ ກະສິກຳ ແລະ ປ່າໄມ້

# ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້

ບົດລາຍງານ ພາກສະໜາມ ຂອງ (ຄກ ກປຂ ລຊ) ເລກທີ. 2005/09

# ການສົ່ງເສີມ ປູກກົ່ວເຫຼືອງ ເພື່ອເປັນສິນຄ້າ: ຕົວກຳນົດຄວາມສຳເລັດຜົນ ແລະ ຜົນກະທົບ ທີ່ອາດເກີດຂື້ນໃນຕໍ່ໜ້າ

ການຮ່ວມມື ສຶກສາ ຊ່ວງໄລຍະສັ້ນ ໂດຍ:
ໂຄງການຍ່ອຍການສົ່ງເສີມ/ການຄົ້ນຄວ້າ ລະບົບການປູກຝັງ
ແລະ ໂຄງການຍ່ອຍ ເສດຖະກິດ-ສັງຄົມ

ເດືອນ ກັນຍາ 2005

ໂຄງການ ຄົ້ນຄວ້າກະສິກຳ ແລະ ປ່າໄມ້ ເຂດພູດອຍ
ຮ່ວມມື ລາວ-ຊູແອດ (ຄກ ກປຂ ລຊ)

## ຄຳຂອບໃຈ

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ຢ່າງຈິງໃຈ ມາຍັງ ບັນດາທ່ານ ທີ່ໄດ້ໃຫ້ການຊ່ວຍເຫຼືອ ຊີ້ນຳ-ນຳພາ ການສຶກສາ ໃນຄັ້ງນີ້ ເຊັ່ນ:

ພະນັກງານຂັ້ນນໍາ ແລະ ພະນັກງານ ຂອງຫ້ອງການ ກະສິກໍາ-ປ່າໄມ້ ເມືອງ ແລະ ຫ້ອງການ ການຄ້າ ເມືອງຊຽງເງິນ ທີ່ໄດ້ສະລະເວລາ ແລະ ສະໜອງ ໃຫ້ຂໍ້ມູນ ຂ່າວສານຕ່າງໆ.

ຊາວກະສິກອນ ບ້ານຫ້ວຍໂຄດ ແລະ ບ້ານໂພນສະຫວ່າງ ທີ່ໄດ້ໃຫ້ການແລກປ່ຽນປະສົບການ ໃນການປູກກົ່ວເຫຼືອງ.

ທ່ານເພັດ ຣາມາ - ຜູ້ຈັດການ ບໍລິສັດ ວິໄລກຸນສາກົນ ຂາອອກ-ຂາເຂົ້າ ຈໍາກັດ

ພະນັກງານຂັ້ນນໍາ ແລະ ພະນັກງານ ຂອງ ສູນຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ພາກເໜືອ (NAFReC) ສໍາລັບ ການກະກຽມ ແລະ ຕິດຕາມ ພວກຂ້າພະເຈົ້າ ລົງຢ້ຽມຢາມ ພາກສະໜາມ ແລະ ດໍາເນີນການ ສໍາພາດ ຕ່າງໆ.

ມານະໂອກາດນີ້, ພິເສດ ຂໍສະແດງ ຄວາມຂອບອົກ ຂອບໃຈມາຍັງ ນາງ ກອງມີ, ນາງ ພອນສະໝິດ, ທ່ານ ສົມພັນ, ທ່ານ ບົວວັນ ແລະ ທ່ານ ອຸໄທ. ພວກຂ້າພະເຈົ້າ ມີຄວາມປິ້ມປິຕິຍິນດີ ນໍາການແປພາສາ ພາກສະໜາມ ໂດຍ ທ່ານ ໄຊຊະນະ ແລະ ທ່ານ ທັນສະໄໝ ໃນຊ່ວງເວລາດໍາເນີນການສໍາພາດ.

ຜົນໄດ້ຮັບຈາກການສຶກສາຄັ້ງນີ້ ໄດ້ນໍາສະເໜີທີ່ກອງປະຊຸມ ແລກປ່ຽນບົດຮຽນ ກ່ຽວກັບ ຂໍ້ມູນຂ່າວສານ ການ ຕະຫຼາດ (MIS) ທີ່ ແຂວງຫຼວງພະບາງ ໃນ ວັນທີ 5-6/07/2005 ໃນຫົວຂໍ້ "ການສົ່ງເສີມ ປູກກົ່ວເຫຼືອງ ເປັນສິນ ຄ້າ: ລະບົບຂໍ້ມູນຂ່າວສານການຕະຫຼາດ ແມ່ນພຽງພໍ ຫຼື ບໍ່?". ກອງປະຊຸມຄັ້ງນີ້ ໄດ້ຈັດຕັ້ງຂຶ້ນ ໂດຍ ການອຸບປະ ກໍາ ສະໜັບສະໜູນ ຂອງ ສະຖາບັນ ຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ (NAFRI), ອົງການ ອາສາສະໝັກ SNV, ໂຄງການຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ-ຊູແອດ (LSUAFRP), ອົງການ FAO, ແລະ ອົງການ ລູກຊໍາບວກ ເພື່ອການພັດທະນາ. ພວກຂ້າພະເຈົ້າມີຄວາມຊື່ນຊົມ ຕໍ່ການຈັດຕັ້ງທຸກຂັ້ນ ທີ່ໄດ້ໃຫ້ ໂອກາດ ແກ່ພວກຂ້າພະເຈົ້າ.

ທ່ານ Blesilda M. Calub
ທີ່ປຶກສາດ້ານການສົ່ງເສີມ/ຄົ້ນຄວ້າ ລະບົບການປູກຝັງ

ທ່ານ Daniel Talje
ຜູ້ຊ່ວຍຊ່ຽວຊານ ດ້ານເສດຖະກິດ-ສັງຄົມ

ທ່ານ ຄໍາພູ ພູຍຍາວົງ
ນັກຄົ້ນຄວ້າ ດ້ານເສດຖະກິດ-ສັງຄົມ

# ສັງລວມ

ກໍລະນີສຶກສາຄັ້ງນີ້ ໄດ້ດໍາເນີນຮ່ວມກັບ ໂດຍ ໂຄງການຍ່ອຍ ດ້ານການສົ່ງເສີມ / ການຄົ້ນຄວ້າ ລະບົບການປູກ ຝັງ ແລະ ໂຄງການຍ່ອຍ ເສດຖະກິດ-ສັງຄົມ ເພື່ອສ້າງເປັນເອກະສານ, ຕີລາຄາ ແລະ ກອດກອນບົດຮຽນ ຈາກປະສົບການ ກ່ຽວກັບການສົ່ງເສີມ ປູກກົ່ວເຫຼືອງ ເພື່ອເປັນສິນຄ້າ ໃນເມືອງຊຽງເງິນ, ແຂວງຫຼວງພະ ບາງ. ບົດຮຽນທີ່ ກອດກອນມາໄດ້ ຈະໄດ້ນໍາເອົາໄປ ທົດລອງ ສຶກສາ-ປຽບທຽບ ຢູ່ໃນພາກສະໜາມ ໂດຍ ໂຄງ ການ ຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ-ຊູແອດ ໃນຮູບແບບການປູກ ແບບປະສົມ-ປະ ສານກັບສາລີ ແລະ ກົ່ວເຫຼືອງ.

ການຜະລິດກົ່ວເຫຼືອງເປັນສິນຄ້າ ແມ່ນແຫຼ່ງທ່າແຮງດ້ານນຶ່ງ ທີ່ເປັນລາຍຮັບໃຫ້ແກ່ຊາວກະສິກອນ, ຊາວຄ້າ ຂາຍ ແລະ ລັດຖະບານ. ຜູ້ມີສ່ວນກ່ຽວຂ້ອງ, ປັດໃຈທາງດ້ານຕະຫຼາດ ແລະ ໂຄງສ້າງ ດ້ານການປະຊາສໍາພັນ ໄດ້ກາຍເປັນຕົວກໍານົດຕົ້ນຕໍ ຈໍານວນນຶ່ງ ເພື່ອບັນລຸຜົນສໍາເລັດ ດ້ານການສົ່ງເສີມ ປູກກົ່ວເຫຼືອງ ເພື່ອເປັນສິນ ຄ້າ ຢູ່ໃນ ພາກເໜືອ ຂອງ ລາວ.

ເຖິງຢ່າງໃດກໍ່ຕາມ, ຍ້ອນເປັນພືດສິນຄ້າອັນໃໝ່ ການຜະລິດ ກົ່ວເຫຼືອງ ຈຶ່ງປະເຊີນກັບ ການທ້າທາຍຫຼາຍດ້ານ. ການສົ່ງເສີມ ປູກພືດແບບຊະນິດດຽວ ໃນເນື້ອທີ່ ອັນກວ້າງຂວາງ ແລະ ເກີດຂື້ນຢ່າງວ່ອງໄວນັ້ນ, ຈະຕ້ອງໄດ້ ເຮັດດ້ວຍຄວາມລະມັດລະວັງ. ທິດນໍາ ແລະ ນະໂຍບາຍ ທີ່ເປັນການກະຕຸກຊຸກຍູ້ ລະບົບການປູກຝັງແບບປະສົມ ປະສານ ບວກກັບຂໍ້ມູນຂ່າວສານທີ່ຮັບປະກັນນັ້ນ ຊ່ວຍສົ່ງເສີມການຜະລິດ ກົ່ວເຫຼືອງແບບຍືນຍົງໄດ້. ທໍານອງ ດຽວກັນນີ້, ການທົບທວນນະໂຍບາຍຕ່າງໆ ດ້ານການຄ້າ ທີ່ມີຢູ່ໃນປັດຈຸບັນ ຈໍາເປັນຕ້ອງໄດ້ເຮັດ ເພື່ອກະຕຸ້ນໃຫ້ ຊາວກະສິກອນ ແລະ ຊາວຄ້າຂາຍ ໄດ້ສືບຕໍ່ຜະລິດ ກົ່ວເຫຼືອງ.

ຄວາມພະຍາຍາມຮ່ວມກັນ ຂອງລັດຖະບານ, ຂະແໜງການຕ່າງໆ ຂອງເອກະຊົນ, ອົງກອນ ຜູ້ໃຫ້ທຶນຕ່າງໆ ແລະ ຊາວກະສິກອນ ຈະເຮັດໃຫ້ຜົນກະທົບເປັນໄປໃນທາງບວກຫຼາຍຂື້ນ ຈາກທັດສະນະທາງດ້ານນິເວດການກະເສດ, ເສດຖະກິດ, ວັດທະນະທໍາ-ສັງຄົມ ຫຼື ທາງສະຖາບັນ-ນະໂຍບາຍ. ໂດຍການຮັບຮູ້ຜົນກະທົບ ທີ່ອາດຈະເກີດໃນຕໍ່ ໜ້າ, ພາກສ່ວນທີ່ກ່ຽວຂ້ອງ ສາມາດກຽມພ້ອມປ້ອງກັນໄດ້ດີກວ່າ ເພື່ອປ້ອງກັນໄພອັນຕະລາຍ ຈາກຜົນກະທົບ ດັ່ງກ່າວ.

ປະສົບການ ທີ່ໄດ້ມາຈາກ ການສຶກໃນຄັ້ງນີ້ ສະແດງໃຫ້ເຫັນວ່າ ການສະໜອງຄວາມຮູ້ດ້ານວິຊາການຢ່າງພຽງພໍ ໃຫ້ແກ່ຊາວກະສິກອນ ແລະ ພະນັກງານ ຂອງຫ້ອງການສົ່ງເສີມ ກະສິກໍາ-ປ່າໄມ້ເມືອງ ໃນການປູກພືດ ເພື່ອເປັນ ສິນຄ້າ ຈະເຮັດໃຫ້ຜະລິດຕະພາບການຜະລິດ ດີຂື້ນແນ່ນອນ. ການສ້າງຕັ້ງລະບົບການຕິດຕາມ-ກວດກາ ແລະ ລາຍງານກັນ ສາມາດສະໜອງ ການສະໜັບ-ສະໜູນ ແລະ ແກ້ໄຂໄດ້ບັນຫາ ຂອງການຜະລິດ ໃນພື້ນທີ່ໄດ້ທັນກັບ ສະພາບການ. ມັນເປັນເລື້ອງທີ່ສໍາຄັນ ທີ່ໂຄງການຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ-ຊູ ແອດ ຈະລິເລີ້ມຈັດຕັ້ງ ລະບົບ ຂໍ້ມູນ-ຂ່າວສານ ການຕະຫຼາດ ທີ່ເຊື່ອມໂຍງກັບຜູ້ຜະລິດ ຕິດພັນກັບການຕະຫຼາດ ແລະ ຂະແໜງການຕ່າງໆ ຂອງເອກະຊົນ ແຕ່ຕ້ອງຮັກສາຄວາມດຸນດ່ຽງ ດ້ານຜົນປະໂຫຍດ ຂອງພາກສ່ວນທີ່ ກ່ຽວຂ້ອງ.
ການດໍາເນີນການຕິດຕໍ່ສື່ສານ ພາຍໃນພາກສ່ວນທີ່ກ່ຽວຂ້ອງ ຄວນຈະໄດ້ຮັບການສົ່ງເສີມ. ຮູບ ແບບການຄົ້ນຄວ້າ, ປະຍຸກ, ການສ້າງເອກະສານ ກ່ຽວກັບ ຂະບວນການ ທີ່ໄດ້ລົງມືເຮັດ ໂດຍ ໂຄງການ

ເພື່ອ ສົ່ງເສີມການປູກກົ່ວເຫຼືອງ ເປັນພືດສ້າງລາຍຮັບ ເຫັນວ່າ ມີຄວາມຈຳເປັນ.
ບັນຫາດ້ານວັດທະນະທຳ-ສັງຄົມ ທີ່ກ່ຽວພັນກັບພຶດຕິກຳ ທີ່ຍອມຮັບເອົາໄດ້ ຂອງຊາວກະສິກອນ ແມ່ນຄວາມຕ້ອງການ ຂອງການສຶກສາ ແລະ ສ້າງເປັນເອກະສານ.

# ສາລະບານ


ຄຳຂອບໃຈ ..... 2
ສັງລວມ ..... 4
1. ພາກສະເໜີ ..... 8
2. ຈຸດປະສົງ ..... 8
3. ແບບແຜນ ວິທີການເຮັດວຽກ ..... 8
4. ຄວາມເປັນມາ ໂດຍຫຍໍ້ ..... 9
5. ຂໍ້ມູນຄວາມເປັນຈິງ ກ່ຽວກັບກົ່ວເຫຼືອງ ..... 10
6. ຍຸດທະສາດ ສຳລັບການສົ່ງເສີມ ປູກກົ່ວເຫືອງ ເປັນພືດສ້າງລາຍຮັບ ..... 11
  6.1 ຄາດໝາຍ ການຜະລິດ ..... 11
  6.2 ການແບ່ງເຂດ ການຜະລິດ ..... 12
  6.3 ການປູກ ພາຍໃຕ້ສັນຍາ ..... 13
  6.4 ການສະໜັບ-ສະໜູນ ທາງດ້ານວິຊາການ ..... 14
7. ສະພາບການປູກກົ່ວເຫຼືອງ ໃນທ້າຍລະດູການຜະລິດ ປີ 2004. ..... 14
8. ຕົວກຳນົດ ເພື່ອບັນລຸຜົນສຳເລັດ ໃນການປູກກົ່ວເຫຼືອງ ..... 15
  8.1 ພາກສ່ວນ ທີ່ກ່ຽວຂ້ອງ ..... 15
  8.2 ໂຄງຮ່າງ ການຕະຫຼາດ ..... 19
  8.3 ກົດລະບຽບ ການຕະຫຼາດ ..... 19
    8.3.1 ລະບົບການອອກໃບອານຸຍາດ (ໃບທະບຽນ) ..... 19
  8.4 ການແຂ່ງຂັນ ການຕະຫຼາດ ແລະ ປະສິດຕິພາບ ..... 21
  8.5 ບໍລິມາດ ການຜະລິດ ແລະ ການຄ້າ-ຂາຍ ແບບບໍ່ເປັນທາງການ. ..... 23
  8.6 ໂຄງຮ່າງ ດ້ານການປະຊາສຳພັນ ..... 24
    8.6.1 ການສະໜອງ ຄວາມຮູ້ກ່ຽວກັບເຕັກໂນໂລຍີ ..... 24
    8.6.2 ການສະໜອງ ຂໍ້ມູນຂ່າວສານ ການຕະຫຼາດ ..... 26
    8.6.3 ການຊີ້ນຳ-ກວດກາ ຕິດຕາມ ແລະ ການລາຍງານ ..... 27
9. ຜົນກະທົບ ທີ່ເປັນໄປໄດ້ ກ່ຽວກັບການຜະລິດ ກົ່ວເຫຼືອງ ..... 29
    9.1 ຜົນກະທົບ ນິເວດທາງດ້ານການກະເສດ. ..... 29
    9.2 ຜົນກະທົບ ທາງດ້ານເສດຖະກິດ ..... 30
    9.3 ຜົນກະທົບ ທາງດ້ານວັດທະນະທຳ-ສັງຄົມ ..... 31
    9.4 ຜົນກະທົບ ທາງດ້ານນະໂຍບາຍ ຂອງສະຖາບັນ ..... 32
    9.5 ເລື້ອງພິເສດ ກ່ຽວກັບການເກີດເຊື້ອລາ-ທາດເບື່ອ ..... 33
10. ສະຫຼູບ ..... 34
11. ເອກກະສານອ້າງອີງ ..... 35

## ລາຍການ ຕາຕະລາງ

ຕາຕະລາງ 1 ການວິເຄາະພາກສ່ວນທີ່ກ່ຽວຂ້ອງ ກັບການຜະລິດກົ່ວເຫຼືອງ ທີ່ເມືອງຊຽງເງິນ ປີ 2004

## ລາຍການ ຮູບສະແດງ

ຮູບສະແດງ 1 ການແບ່ງເຂດ ຜະລິດການກະເສດ ຢູ່ ເມືອງຊຽງເງິນ ແຂວງຫຼວງພະບາງ ປີ 2004
ຮູບສະແດງ 2 ໂຄງຮ່າງ ການຕະຫຼາດ ກ່ຽວກັບ ກົ່ວເຫຼືອງ ຢູ່ ເມືອງຊຽງເງິນ
ຮູບສະແດງ 3 ສະພາວະການ ການພັດທະນາດ້ານການຕະຫຼາດ ຜົນຜະລິດທາງການກະເສດ ຈາກການຕະຫຼາດທີ່ບໍ່ມີການແຂ່ງຂັນ ກ້າວໄປສູ່ການຕະຫຼາດທີ່ມີການແຂ່ງຂັນສົມບູນແບບ
ຮູບສະແດງ 4 ກະແສການໄຫຼວຽນ ຂອງຂໍ້ມູນຂ່າວສານກ່ຽວກັບເຕັກໂນໂລຢີ ໄປສູ່ຊາວກະສິກອນ
ຮູບສະແດງ 5 ລະບົບການຊີ້ນຳ-ຕິດຕາມ ພາຍໃນໝູ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຜະລິດກົ່ວເຫຼືອງ ຢູ່ເມືອງຊຽງເງິນ
ຮູບສະແດງ 6 ກະແສການໄຫຼວຽນ ດ້ານການລາຍງານສະທ້ອນຄືນ ພາຍໃນໝູ່ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການຜະລິດ ກົ່ວເຫຼືອງ ຢູ່ ເມືອງຊຽງເງິນ

## 1. ພາກສະເໜີ

ນຶ່ງໃນບັນດາ ຈຸດປະສົງຕົ້ນຕໍ ຂອງໂຄງການ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ-ຊູ ແອດ (ຄກປຂ ລຊ) ແມ່ນການພັດທະນາທາງເລືອກ ທາງດ້ານເຕັກໂນໂລຍີ ໂດຍອີງຕາມການຮັບຮູ້ ແບບດັ່ງເດີມ ແລະ ການຮັບຮູ້ໃໝ່ ທີ່ປັບປຸງຄວາມຍືນຍົງ ແລະ ຜະລິດຕະພາບ ຂອງລະບົບການຜະລິດກະສິ ກຳ ທີ່ມີຢູ່ໃຫ້ດີຂຶ້ນ. ເພື່ອບັນລຸຕາມຈຸດປະສົງດັ່ງກ່າວ ໂຄງການ ຄກປຂ ລຊ ໂດຍ ຜ່ານໂຄງການຍ່ອຍ ການ ສົ່ງເສີມ/ການຄົ້ນຄວ້າ ລະບົບການປູກຝັງ ໄດ້ດຳເນີນການທົດລອງຢູ່ພື້ນທີ່ຂອງຊາວກະສິກອນ ຊຶ່ງສູມໃສ່ 12 ທາງເລືອກ ທີ່ເປັນເຕັກໂນໂລຢີ ໃນລະບົບການຜະລິດກະສິກຳ.

ນຶ່ງໃນບັນດາ ທາງເລືອກດັ່ງກ່າວ ແມ່ນລະບົບການປູກພືດສະຫຼັບ ສາລີ + ພືດກະຕຸນກົ່ວ (ກົ່ວເຫຼືອງ ຫຼື ກົ່ວ ດິນ). ອີງຕາມການປະເມີນຜົນເບື້ອງຕົ້ນ ຂອງຊາວກະສິກອນ ກ່ຽວກັບການທົດລອງ ສຶກສາ ປຽບທຽບ ມີ ຊາວກະສິກອນ ຫຼາຍຄົນ ໃຫ້ຄວາມສົນໃຈ ທີ່ຈະປູກມັນ (ກົ່ວເຫຼືອງ) ເຂົ້າຢູ່ໃນໄຮ່ຂອງຕົນ. ການລາຍງານ ຜົນເປັນແງ່ບວກ ດັ່ງກ່າວ ກະຕຸກຊຸກຍູ້ ຂະຫຍາຍ ບ່ອນທີ່ໃຊ້ໃນການທົດລອງ ໃຫ້ລວມມີ ຊາວກະສິກອນ ຫຼາຍຂຶ້ນ ແລະ ມີເນື້ອທີ່ ຂະໜາດກວ້າງໃຫຍ່ໄພສານ. ຈຸດປະສົງຂອງການສຶກສາ ຄົ້ນຄວ້າ ແມ່ນເພື່ອຄົ້ນ ພົບຜົນທີ່ສະແດງອອກ ຂອງການນຳໃຊ້ ເຕັກໂນໂລຍີ ດັ່ງກ່າວ ພາຍໃຕ້ສະພາບເງື່ອນໄຂ ທີ່ແຕກຕ່າງກັນ.  ຈຸດປະສົງອີກດ້ານນຶ່ງ ແມ່ນການສ້າງເອກກະສານໃຫ້ແກ່ຊາວກະສິກອນ ໃຫ້ມີທ່າທີ ທີ່ຍອມຮັບເອົາໄດ້ ແລະ ການດັດແປງແກ້ໄຂວິທີການ ຂອງພວກເຂົາເຈົ້າ ກ່ຽວກັບເຕັກໂນໂລຍີ ເພື່ອຕອບສະໜອງສະເພາະຄວາມ ຕ້ອງການ ຂອງພວກເຂົາເຈົ້າ ແລະ ສະພາບເງື່ອນໄຂຕ່າງໆ ບ່ອນທີ່ໃຊ້ທຳການຜະລິດ.

ແຕ່ວ່າ ກ່ອນທີ່ໂຄງການ ຄກປຂ ລຊ (LSUAFRP) ຈະສົ່ງເສີມການປູກກົ່ວເຫຼືອງ ໃນເນື້ອທີ່ ທີ່ກວ້າງ ຂວາງ ມັນເປັນເລື້ອງທີ່ດີ ທີ່ຈະກວດສອບປະສົບການ ຂອງຊາວກະສິກອນ ໃນພື້ນທີ່ບ່ອນອື່ນ ບ່ອນທີ່ການ ປູກກົ່ວເຫຼືອງ ໄດ້ຖືກສົ່ງເສີມ. ຈຸດຈຳນົງ ແມ່ນຮຽນນຳປະສົບການ ໃນຮູບການຂອງຕົວກຳນົດ ຕໍ່ກັບ ການສົ່ງເສີມປູກກົ່ວເຫຼືອງ. ປັດໃຈ ທີ່ພາໃຫ້ເກີດຜົນສຳເລັດ ຊຶ່ງພວກເຮົາຈະຕ້ອງໄດ້ເອົາຈິງ-ເອົາຈັງ ເພື່ອຮັບປະກັນຜົນຮັບທີ່ດີ. ເຖິງຢ່າງໃດກໍ່ຕາມ, ຄວາມຫຍຸ້ງຍາກ ແລະ ຄວາມທ້າທາຍຕ່າງໆ ຈະເຕືອນ ໃຫ້ແກ່ພວກເຮົາ ມີການກະກຽມ ທີ່ດີຂຶ້ນ ເພື່ອປະເຊີນກັບການທ້າທາຍຫຼາຍໆ ເທົ່ານັ້ນ. ມັນເປັນເລື້ອງທີ່ ສຳຄັນອີກດ້ານນຶ່ງ ທີ່ຈະກວດສອບຜົນກະທົບ ທີ່ເປັນໄປໄດ້ ໃນການສົ່ງເສີມປູກກົ່ວເຫຼືອງ ເປັນພືດສ້າງ ລາຍຮັບ. ແນວຄວາມຄິດ ທີ່ຈະຊອກໄດ້ວ່າ ຈະເຮັດແນວໃດ ເພື່ອສະໜັບສະໜູນ ຜົນກະທົບ ໃນແງ່ບວກ ໃນຂະນະດຽວກັນນັ້ນ ກໍ່ເພື່ອຫຼີກເວັ້ນຜົນຮັບທີ່ຈະເກີດຂຶ້ນ ເປັນແງ່ລົບຕາມພາຍຫຼັງ.

## 2. ຈຸດປະສົງ

ຈຸດປະສົງ ຂອງການສຶກສາ ຄັ້ງນີ້  ແມ່ນ:

1. ເພື່ອສ້າງເອກກະສານ ແລະ ຕີລາຄາ ຕົວກຳນົດຄວາມສຳເລັດຜົນ ຂອງການສົ່ງເສີມ ປູກ ກົ່ວເຫຼືອງ ເປັນສິນຄ້າ ຢູ່ທີ່ເມືອງຊຽງເງິນ, ແຂວງຫຼວງພະບາງ.
2. ເພື່ອວິເຄາະ ຜົນກະທົບ ທີ່ອາດເກີດຂຶ້ນ ຈາກການສົ່ງເສີມ ປູກກົ່ວເຫຼືອງ ເພື່ອເປັນສິນຄ້າ.
3. ເພື່ອກອດກອນບົດຮຽນ ທີ່ມີສ່ວນພົວພັນເຖິງການສົ່ງເສີມ ການປູກກົ່ວເຫຼືອງ ໃນພື້ນທີ່ ຂອງ ໂຄງການ ຄກປຂ ລຊ.

## 3. ແບບແຜນ ວິທີການເຮັດວຽກ

ການສຳພາດ ທີ່ນຳໃຊ້ແບບສອບຖາມ, ສົນທະທະນາກຸ່ມເປົ້າໝາຍ ແລະ ຢ້ຽມຢາມພື້ນທີ່ການພະລິດ ໄດ້ຈັດ ຕັ້ງ ຢູ່ໃນ 2 ບ້ານ: ບ້ານຫວ້ຍໂຄດ ແລະ ບ້ານໂພນສະຫວັນ ທີ່ເມືອງຊຽງເງິນ ແຂວງຫຼວງພະບາງ. ການປູກ ກົ່ວເຫຼືອງ ເພື່ອເປັນສິນຄ້າ ຫາກໍ່ໄດ້ນຳເຂົ້າມາປູກ ໃນປີ 2004. ບຸກຄົນທີ່ໃຫ້ຂໍ້ມູນກ່ຽວກັບການສົ່ງເສີມປູກ ກົ່ວເຫຼືອງ ລວມມີ: ຫົວໜ້າ ແລະ ພະນັກງານ ຫ້ອງການ ກະສິກຳ-ປ່າໄມ້ເມືອງ (DAFO), ຫົວໜ້າຫ້ອງການ ການຄ້າເມືອງ, ຊາວກະສິກອນ ຈາກບ້ານທີ່ມີການສຶກສາ ແລະ ຫົວໜ້າບໍລິສັດ ເອກະຊົນ ວີໂລຄູນ ແຂວງ ຫຼວງພະບາງ.

ການສຳພາດ ແລະ ການໂອ້ລົມ ໄດ້ດຳເນີນໄປ ໂດຍ ຜ່ານການແປພາສາ ຂອງພະນັກງານ ສູນຄົ້ນຄວ້າກະ ສິກຳ ແລະ ປ່າໄມ້ ພາກເໜືອ (NAFReC). ການສຶກສາຄັ້ງນີ້ ຍັງມີບາງຄຳຖາມ ຄ້າງຄາ ທີ່ບໍ່ມີຄຳຕອບ ອາດເປັນຍ້ອນພາສາ, ບັນຫາຮີດຄອງປະເພນີ ແລະ ຂໍ້ຈຳກັດ ທາງດ້ານເວລາ, ມັນເປັນເລື້ອງຍາກ ທີ່ຈະ ກວດສອບ ຂໍ້ມູນຂ່າວສານ ທີ່ໄດ້ມາຈາກ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ. ການໂອ້ລົມ ລົງເລິກ ລະອຽດ ແມ່ນ ມີຄວາມຫຍຸ້ງຍາກ ຕໍ່ການຕິດຕາມ. ບາງຄັ້ງ ມີຄຳຕອບ ທີ່ແຕກຕ່າງກັນ ຊຶ່ງບໍ່ອາດສົມທຽບ ຂໍ້ມູນຂ່າວສານ ໄດ້. ມຸມມອງ 3 ດ້ານ ໄດ້ຖືກເຮັດເພື່ອກວດສອບຊໍ້າຄືນ ຂ່າວສານທີ່ໄດ້ຈາກຫຼາຍແຫ່ງ. ພົບຮັບ ຈາກການ ສຶກສາ ຄົ້ນຄວ້າ ຄັ້ງນີ້, ໂດຍລວມແລ້ວ ແມ່ນເລື້ອງຈິງ ທີ່ແມ່ນສະພາບການໃນເຂດພາກເໜືອ ຂອງລາວ. ມັນອາດຈະນຳເອົາໄປໃຊ້ ໄດ້ ສຳລັບພາກສ່ວນອື່ນໆ ອາດຈະມີຄວາມຈຳເປັນ ທີ່ຈະຕ້ອງໄດ້ສຶກສາ-ຄົ້ນຄວ້າ.

## 4. ຄວາມເປັນມາໂດຍຫຍໍ້

ໃນປີ 2004, ມີບໍລິສັດ ເອກະຊົນ ທີ່ຊື່ວ່າ ບໍລິສັດ ສາກົນ ຂາອອກ-ຂາເຂົ້າ ວີໂລຄູນ ຈຳກັດ ໄດ້ລິເລີ່ມ ໂຄງ ການສັນຍາ ຜູກພັນ-ການປູກ ສຳລັບການພະລິດກົ່ວເຫຼືອງ ໃນເມືອງຊຽງເງິນ. ສັນຍາ ໄດ້ສ້າງຂື້ນ ລະ ຫວ່າງ ບໍລິສັດ ແລະ ຊາວກະສິກອນ ເຊັ່ນແນວພັນກົ່ວເຫຼືອງ ສະໜອງໂດຍບໍລິສັດ ໃນລາຄາ 1 ກິໂລ = 8.100 ກີບ; ສານໄຮໂຊບຽມ ໄດ້ສະໜອງໃຫ້ແກ່ຊາວກະສິກອນ ແບບບໍ່ບັງຄັບ ທຽບຄ່າ 1 ກິໂລ = 8.100 ກີບ/1 ຫໍ່ 200 ກຼາມ; ຊາວກະສິກອນ ສະໜອງຕົ້ນທຶນການພະລິດ ເຊັ່ນ: ດິນ ແລະ ແຮງງານ. ໃນເວລາ ເກັບກ່ຽວ ຊາວກະສິກອນ ມີພັນທະ ທີ່ຈະຕ້ອງຂາຍ ກົ່ວເຫຼືອງທັງໝົດ ທີ່ພະລິດມານັ້ນ ໃຫ້ແກ່ ບ/ສ ວີໂລຄູນ ແຕ່ຜູ້ດຽວ. ບ/ສ ໄດ້ເກັບຊື້ ຕາມລາຄາ ປະກັນໄວ້ ແຕ່ 1.500 - 2.000 ກີບ ຕໍ່ 1 ກິໂລ ໂດຍອີງຕາມ ຄຸນນະ ພາບ ຂອງເມັດກົ່ວເຫຼືອງ. ຄ່າແນວພັນ ທີ່ໄດ້ສະໜອງໃຫ້ ແຕ່ຕອນຕົ້ນ ໄດ້ລົບອອກກ່ອນ ແລະ ສ່ວນທີ່ເຫຼືອ ແມ່ນຈະຈ່າຍໃຫ້ແກ່ ຊາວກະສິກອນ. ມັນສາມາດ ເຮັດໄດ້ກໍ່ຈາກຊາວກະສິກອນຈະໃຊ້ແທນຄືນ ຕາມອັດ ຕາສ່ວນ 4 ກິໂລ ຕໍ່ 1 ກິໂລ ແນວພັນ ທີ່ກູ້ຢືມ ໃຫ້ແກ່ບໍລິສັດ.

ເຊັ່ນດຽວກັນກັບອົງກອນ ທີ່ບໍ່ຂື້ນກັບລັດຖະບານ, ອົງການ ສຸພານິມິດ ໄດ້ສົ່ງເສີມການປູກກົ່ວເຫຼືອງ ໃນ ເມືອງຊຽງເງິນ. ໄດ້ມີການສະໜອງການອົບຮົມ ແລະ ແນວພັນ ໃຫ້ແກ່ຊາວກະສິກອນ ແຕ່ບໍ່ມີສັນຍາເກັບຊື້ ຄືນພົນເກັບກ່ຽວ. ຊາວກະສິກອນ ແມ່ນມີສິດ-ເສລີ ທີ່ຈະຂາຍໃຫ້ໃຜກໍ່ໄດ້ ຜູ້ທີ່ຕ້ອງການຊື້. ອົງການສຸພານິ ມິດ ມີແຕ່ຮຽກຮ້ອງໃຫ້ຊາວກະສິກອນ ສົ່ງຄືນແນວພັນທີ່ເຂົາເຈົ້າໄດ້ກູ້ຢືມມາເທົ່ານັ້ນ.

ການປູກກົ່ວເຫຼືອງເປັນສິນຄ້າ ເປັນເລື້ອງໃໝ່ ສຳລັບຊາວກະສິກອນສ່ວນໃຫຍ່ໃນເຂດນີ້. ໃນໄລຍະຜ່ານມາ, ມີ ຊາວກະສິກອນ ຈຳນວນນຶ່ງ ເຄີຍປູກກົ່ວເຫຼືອງມາແລ້ວ ແຕ່ຢູ່ໃນພື້ນໄຮ່ທີ່ຈຳກັດ ດ້ວຍການນຳໃຊ້ແນວພັນ ພື້ນເມືອງ. ສຳລັບຊາວກະສິກອນສ່ວນໃຫຍ່ ແມ່ນເປັນຄັ້ງທຳອິດທີ່ປູກກົ່ວເຫຼືອງ ໂດຍໃຊ້ແນວພັນໃໝ່ ທີ່ແນະ ນຳໂດຍ ບໍລິສັດ ວີໂລຄູນ ຫຼື ອົງການສຸພານິມິດ.

ການວິເຄາະ ຈາກຂໍ້ມູນຂ່າວສານ ທີ່ສະໜອງໃຫ້ ໂດຍຊາວກະສິກອນ ແລະ ວີໂລຄູນ ວ່າ ການປູກກົ່ວເຫຼືອງ ປີ 2004 ນັ້ນ ບໍ່ຕອບສະໜອງ ກັບຄວາມຄາດຫວັງ. ມີຊາວກະສິກອນ ຫຼາຍໆຄົນ ໄດ້ເວົ້າວ່າ ພວກເຂົາເກັບກູ້ ໄດ້ພຽງສົ່ງແນວພັນຄືນໃຫ້ບໍລິສັດ ເທົ່ານັ້ນ. ບາງພວກໄດ້ເວົ້າວ່າ: ຍັງບໍ່ທັນ ໄດ້ຮອດເກັບກ່ຽວ ແລະ ເປັນ ເຫດໃຫ້ຄ້າງໜີ້ ກັບບໍລິສັດ, ມີ ຊາວກະສິກອນບາງຄົນ ອ້າງວ່າເຂົາເຈົ້າເກັບກ່ຽວໄດ້ໜ້ອຍນຶ່ງ.

ແຕ່ເຖິງຢ່າງໃດກໍ່ຕາມ, ຫ້ອງການສົ່ງເສີມ ກະສິກຳ-ປ່າໄມ້ ອ້າງວ່າ ໄດ້ຮັບຜົນ 60% ຂອງເນື້ອທີ່ປູກຖົ່ວ ເຫຼືອງ ທັງໝົດ 900 ຮຕ. ແຕ່ຍ້ອນສາຍເຫດໃດບໍ່ໄດ້ອະທິບາຍ. ຄາດຄະເນຜະລິດຕະພາບ 0,8-1,2 ຕ/ຮຕ, ເນື້ອທີ່ 900 ຮຕ ຈະໃຫ້ຜົນຜະລິດຖົ່ວເຫຼືອງ 720-1.080 ໂຕນ. ໃນຄວາມສາມາດຜະລິດໄດ້ 60% ໝາຍ ຄວາມວ່າ ຖົ່ວເຫຼືອງຜະລິດໄດ້ 432-640 ໂຕນ. ແຕ່ເຖິງຢ່າງໃດກໍ່ຕາມ, ບ/ສ ວີເລຄູນ ອ້າງວ່າ ສາມາດ ເກັບຊື້ ຖົ່ວເຫຼືອງທີ່ມີຄຸນນະພາບຕໍ່າ ໄດ້ພຽງ 200 ໂຕນ ໃນລະດູການປູກພືດ ປີ 2004 ທີ່ເມືອງຊຽງເງິນ. ສາຍເຫດເປັນຍ້ອນຄຸນນະພາບ ແລະ ປະລິມານຕໍ່າ ບ/ສ ວີເລຄູນ ບໍ່ສາມາດສົ່ງອອກ ໄປຂາຍຕ່າງປະເທດ ໄດ້. ບ/ສ ວີເລຄູນ ສາມາດ ຂາຍຖົ່ວເຫຼືອງອອກໄດ້ ໃນຕະຫຼາດ ພາຍໃນປະເທດເທົ່ານັ້ນ.

ສົມມຸດວ່າ ຄວາມສາມາດຂອງການຜະລິດໄດ້ 60%  ແມ່ນຖືກຕ້ອງ, ຈຳນວນຖົ່ວເຫຼືອງຍັງເຫຼືອ 232-440 ໂຕນ ແມ່ນເກັບຮັກສາໄວ້ຍ້ອນສາຍເຫດ ດັ່ງຕໍ່ໄປນີ້: (1) ເກັບຮັກສາໄວ້ເຮັດແນວພັນ ເພື່ອປູກໃນລະດູການ ໜ້າ, (2) ເກັບເອົາໄວ້ ເພື່ອການບໍລິໂພກ ພາຍໃນຄອບຄົວ, (3) ແບ່ງປັນໃຫ້ຊາວກະສິກອນຜູ້ອື່ນທົດລອງ ປູກ, (4) ເກັບຮັກສາໄວ້ຂາຍ ເມື່ອລາຄາດີຂຶ້ນ ແລະ (5) ຂາຍອອກໃຫ້ພໍ່ຄ້າ ຄົນອື່ນໆ .

## 5. ຂໍ້ມູນຄວາມເປັນຈິງ ກ່ຽວກັບຖົ່ວເຫຼືອງ

ຖົ່ວເຫຼືອງ (ຫຼື ເອີ້ນຊື່ວິທະຍາສາດວ່າ Glycine max l) ເປັນພືດຊະນິດນຶ່ງ ທີ່ມີຄຸນຄ່າສູງ ມັນເປັນແຫຼ່ງທີ່ ສຳຄັນ ຂອງສິ່ງທີ່ເໜືອກວ່າໝູ່ອັນນຶ່ງ ທີ່ມີທາດໂປຼຕີນບໍ່ແພງ ແລະ ໃຫ້ນ້ຳມັນພືດ ເພື່ອການບໍລິໂພກ ຂອງ ມະນຸດ. ສິ່ງເສດເຫຼືອຈາກການຜະລິດເອົານ້ຳມັນ ເປັນສ່ວນປະກອບອາຫານສັດທີ່ສຳຄັນ ມີທາດໂປຼຕີນສູງ. ຍ້ອນເປັນພືດຕະກຸນຖົ່ວ, ການສຳພັນຂອງຖົ່ວເຫຼືອງ ກັບແບັກເຕີເຣຍ rhizobium ສາມາດປະກອບສ້າງ ຕ່ອມສັງເຄາະ ບ່ອນທີ່ ໄນໂຕຣເຈນຖືກເກາະຕິດ ໂດຍດູດເອົາມາຈາກບັນຍາກາດ. ບັນຫານີ້ ຊ່ວຍປັບປຸງ ຄວາມອຸດົມສົມບູນ ຂອງດິນຂຶ້ນຕື່ມ.

ຖົ່ວເຫຼືອງ ເຄີຍໄດ້ປູກ ແລະ ໄດ້ບໍລິໂພກ ມາແລ້ວ ຢູ່ໃນປະເທດຈີນ ກວ່າ 5.000 ປີ.  ປັດຈຸບັນ ປະເທດສະ ຫະລັດອາເມລິກາ (USA) ເປັນປະເທດນຳໜ້າ ໃນນາມເປັນປະເທດ ຜູ້ຜະລິດລາຍໃຫຍ່ທີ່ສຸດ. ແຕ່ເຖິງປານ ນັ້ນ, ປະເທດບຣາຊິນ ກໍ່ວ່າ ເປັນປະເທດກຸ່ມຜູ້ຜະລິດ ຢ່າງກວ້າງຂວາງ. ແຕ່ນີ້ ຮອດປີ 2010 (ຂໍ້ມູນເກັບໄດ້ 2003). ຖົ່ວເຫຼືອງ ເປັນພືດທີ່ເກີດຢູ່ໃນເຂດ ອົບອຸ່ນ ແຕ່ແນວພັນຕ່າງໆ ໄດ້ຖືກພັດທະນາການ ໃຫ້ແທດ ເໝາະກັບສະພາບເງື່ອນໄຂ ຂອງການປູກ ຢູ່ເຂດຮ້ອນ. ໃນປະເທດ USA ແລະ ປະເທດ ເອີລົບ ຕາເວັນຕົກ ຖົ່ວເຫຼືອງ ໄດ້ປູກເປັນບໍລິເວນກວ້າງໃຫຍ່ໄພສານ ໂດຍການນຳໃຊ້ລະບົບກົນຈັກ. ສະມັດຕະພາບ ສະເລ່ຍ ໃນ USA ແມ່ນ 2,6 ໂຕນ/ຮຕ ແລະ ຢູ່ໃນບັນດາປະເທດເອີລົບຕາເວັນຕົກ ແມ່ນ 3,5 ໂຕນ/ຮຕ (IITA 2000).

ໃນປະເທດບຣາຊິນ ການປູກຖົ່ວເຫຼືອງ ໄດ້ກາຍເປັນສ່ວນນຶ່ງ  ຂອງລະບົບການປູກພືດໝູນວຽນ ເຊັ່ນ: ລະບົບ ການປູກພືດໝູນວຽນ ຖົ່ວເຫຼືອງ-ສາລີ-ເຂົ້າ ມີເມັດ ຫຼື ຖົ່ວເຫຼືອງ-ພືດຖົ່ວກິນໄດ້-ເຂົ້າ. ສະມັດຕະພາບ ສະ ເລ່ຍ ໃນປີ 2003 ແມ່ນ 3,4 ໂຕນ/ຮຕ ແຕ່ວ່າ ພວກເຂົາ ມີຄວາມມຸ້ງໝາຍ ຈະຍົກສະມັດຕະພາບ ຂອງຖົ່ວ ເຫຼືອງຂຶ້ນ ໃນຕໍ່ໜ້າໃຫ້ໄດ້ 4 ໂຕນ/ຮຕ (Truels 2003).

ຫຼາຍປະເທດ ໃນທະວີບອາຟຼິກກາ ປູກຖົ່ວເຫຼືອງເປັນພືດຕົ້ນຕໍ ຢູ່ໃນຟາມຂະໜາດນ້ອຍຂອງຕົນ ແບບຄອບ ຄົວ ເປັນພືດສຳລັບຂາຍ ຫຼື ຂາຍປົນກັບພືດຊະນິດອື່ນ ເຊັ່ນ: ສາລີ ຫຼື ມັນຕົ້ນ. ຕົ້ນທຶນການຜະລິດຕໍ່າ ແລະ ໜ້າວຽກປະຕິບັດຢູ່ພື້ນທີ່ ບົກກະຕິເຮັດດ້ວຍມື ໂດຍຜະລິດຕະພາບ ສະເລ່ຍ 0,9 ໂຕນ/ຮຕ.

ນອກຈາກປະເທດຈີນ ແລະ ບັນດາ ປະເທດ ອາຊີ ອື່ນໆ ທີ່ມີປະຫວັດ ອັນຍາວນານ ຂອງການປູກກົ່ວເຫຼືອງ ແລ້ວ ຍັງມີປະເທດ ຍີ່ປຸ່ນ, ເກົາຫຼີ, ອິນໂດເນເຊຍ, ແລະ ອິນເດຍ (Shurleff ແລະ Aoyagi 2004). ຢູ່ໃນ ສປປ ລາວ ການປູກກົ່ວ ໄດ້ຖືກນຳສະເໜີ ເປັນເລື້ອງໃໝ່ອ່ຽມ.

ແຕກຕ່າງຈາກພືດທ້ອງຖິ່ນຕ່າງໆ ໃນ ສປປ ລາວ ເຊັ່ນ: ເຂົ້າໄຮ່, ສາລີ, ໝາກງາ ຫຼື ໝາກເດືອຍ. ພວກມັນ ເຫຼົ່ານີ້ ແມ່ນປູກງ່າຍ ໃນຫຼາຍໆ ພື້ນທີ່. ກົ່ວເຫຼືອງ ເປັນພືດທີ່ຮັບອິດທິພົນ ຕໍ່ກັບສະພາບແວດລ້ອມໄດ້ງ່າຍ (ອ່ອນໄຫວງ່າຍ). ກົ່ວເຫຼືອງ ຮອງຮັບເອົາສິ່ງທີ່ເກີດຂຶ້ນ ກະທົບໃສ່ສະພາບຂອງມັນ ເຊັ່ນ: ຄວາມງອກ, ການເຕີບໂຕ, ການອອກດອກ, ການພັດທະນາການຂອງຝັກ (ເປັນແກ່ນ) ແລະ ສະມັດຕະພາບ ຂອງມັນ ກວ່າໝູ່ ແມ່ນແນວພັນ, ຕຸ່ມຂອງຮາກ, ຄວາມອຸດົມສົມບູນຂອງດິນ ແລະ ຄວາມຊຸ່ມຊື່ນ, ດິນຟ້າອາກາດ ແລະ ການຈັດສັນການປູກພືດ. ເປັນທີ່ຮູ້ນຳກັນແລ້ວວ່າ ສິ່ງທີ່ເຮັດໃຫ້ສະມັດຕະພາບຫຼຸດລົງ ແມ່ນວັດຊະພືດ, ການທຳລາຍຂອງສັດຕູພືດ ແລະ ພະຍາດພືດ (Pandey 1987). ດັ່ງນັ້ນ, ສິ່ງທີ່ອາດສາມາດເຮັດໃຫ້ມີທ່າ ແຮງສ້າງໃຫ້ສະມັດຕະພາບ ຂອງກົ່ວເຫຼືອງ ສູງສຸດນັ້ນ, ຊາວກະສິກອນ ຄວນຮັບຮູ້ສະພາບທີ່ເປັນຈິງຕ່າງໆ ຊຶ່ງກະທົບໃສ່ກັບການປູກກົ່ວເຫຼືອງ ໃນແຕ່ລະວິກິດການແຫ່ງການເຕີບໂຕ. ມັນຈຶ່ງເປັນເລື້ອງສຳຄັນສຳລັບ ພວກເຂົາເຈົ້າ (ຊາວກະສິກອນ) ທີ່ຈະຕ້ອງຮັບຮູ້ວ່າ ຈະເຮັດແນວໃດ ເພື່ອປ້ອງກັນການກົດດັນ (ສິ່ງກະຕຸ້ນ) ຂອງແຕ່ລະພາວະການເຕີບໃຫຍ່ ຂອງພືດ.

## 6. ຍຸດທະສາດ ສຳລັບການສົ່ງເສີມ ປູກກົ່ວເຫຼືອງ ເປັນພືດສ້າງລາຍຮັບ

ດ້ວຍຈຸດມຸ່ງໝາຍ ເພີ້ມຂື້ນ ແລະ ສ້າງຄວາມຫຼາກຫຼາຍ ຂອງແຫຼ່ງລາຍຮັບ ໃຫ້ແກ່ຊາວກະສິກອນ ແລະ ສະໜອງທາງເລືອກ ແບບກົງໄປ- ກົງມາ ຕໍ່ກັບການເຮັດໄຮ່ ແບບເລື່ອນລອຍ. ລັດຖະບານ ໄດ້ເອົາໃຈໃສ່ ສົ່ງເສີມການຜະລິດພືດເປັນສິນຄ້າ ສ່ວນໃຫຍ່ ໃນປະຈຸບັນນີ້ ແມ່ນກົ່ວເຫຼືອງ. ການປະສົມ-ປະສານ ປູກກົ່ວ ເຫຼືອງ ໃນໄຮ່ ຫຼື ນາ ຕາມລະບົບການຈັດທຳຟາມ ໃນ ສປປ ລາວ ຈະຊ່ວຍເຮັດໃຫ້ ມີ ຜົນປະໂຫຍດ ແກ່ມະ ນຸດ ແລະ ທັງເປັນການໂພສະນາການ ໃຫ້ແກ່ສັດ ພ້ອມນັ້ນ ກໍ່ຍັງ ແມ່ນການປັບປຸງ ສະພາບ ຂອງດິນອີກ ດ້ວຍ. ຍ້ອນຄວາມຮຽກຮ້ອງຕ້ອງການ ອັນມະຫາສານ ທັງພາຍໃນ ກໍ່ຄື ສາກົນ, ກົ່ວເຫຼືອງ ປັດຈຸບັນ ຖືກ ຈັບຕາວ່າ ເປັນພືດສ້າງລາຍຮັບ ຊຶ່ງກາຍເປັນທ່າແຮງອັນສູງສົ່ງ ໃນການເພີ້ມພູນລາຍຮັບ ໃຫ້ແກ່ຊາວ ກະສິກອນ.

ປະເທດໄທ ໄດ້ກາຍເປັນຕະຫຼາດສຳຄັນ ເພື່ອການສົ່ງອອກກົ່ວເຫຼືອງ. ເຖິງຢ່າງໃດກໍ່ຕາມ, ຊາວກະສິກອນ ລາວເຮົາຈະຕ້ອງໄດ້ຜະລິດກົ່ວເຫຼືອງ ດ້ວຍວິທີການທີ່ເປັນໄປໄດ້ ຄືຕົ້ນທຶນທີ່ຖືກກວ່າ ເພື່ອແຂ່ງຂັນກັບ ຄວາມຕ້ອງການແບບເປັນຕົວເລກ ທີ່ມະຫາສານ ມາຈາກປະເທດ ບຣາຊິນ ສູ່ປະເທດໄທ. ຕາມການບອກ ກ່າວ ຂອງ ບ/ສ ວີເລຄູນ ຄວາມຕ້ອງການ ຂອງຕະຫຼາດພາຍໃນ ປະເມີນໄດ້ ໃນປີນຶ່ງ 1.000 ໂຕນ. ຕົວເລກ ດັ່ງກ່າວ ແມ່ນພໍຮັບພຽງແຕ່ 50% ຂອງປະລິມານກົ່ວເຫຼືອງ ທີ່ຜະລິດ ຢູ່ທ້ອງຖິ່ນ. ບັນຫາດັ່ງກ່າວ ມີຄວາມ ໝາຍ ສ່ວນທີ່ເຫຼືອ ແມ່ນທ່າແຮງຕະຫຼາດ ຂະໜາດໃຫຍ່ ທີ່ອາດຈະດູດຊຶມເອົາປະລິມານໃດນຶ່ງ ຂອງກົ່ວ ເຫຼືອງ ທີ່ໄດ້ຜະລິດມາ.

ການຜະລິດ ກົ່ວເຫຼືອງ ເປັນວົງຂະໜາດກວ້າງ ໄດ້ຖືກສົ່ງເສີມໃຫ້ເປັນພືດສ້າງລາຍຮັບ ໃນເມືອງຊຽງເງິນ ໂດຍຜ່ານຍຸດທະສາດ ດັ່ງຕໍ່ໄປນີ້:

### *6.1. ຄາດໝາຍການຜະລິດ*

ຢູ່ລະດັບ ຂັ້ນເມືອງ ບັນດາຄາດໝາຍ ຂອງການຜະລິດ ແມ່ນສ້າງແຜນການຂື້ນ ໃນແຕ່ລະປີ ໃນຮູບແບບ ຄິດໄລ່ ເປັນຈຳນວນ ຮຕ ທີ່ໄດ້ປູກ ໂດຍສະເພາະ ການປູກພືດ ແລະ ຈຳນວນ ໂຕນ ທີ່ຜະລິດ ໃນແຕ່ລະ ລະດູ ການ. ໃນເມືອງຊຽງເງິນ ຄາດໝາຍການຜະລິດ ກົ່ວເຫຼືອງ ໃນປີ 2003 ແມ່ນໄດ້ຕັ້ງໄວ້ ລະດັບ 180 ຮຕ. ໃນປີ 2004 ແມ່ນ 900 ຮຕ ແລະ ສຳລັບ ປີ 2005 ເນື້ອທີ່ຄາດໝາຍ ແມ່ນ 2.000 ຮຕ. ແນວໃດກໍ່ຕາມ, ເມື່ອເວລາ ພ/ງ

ສົ່ງເສີມ ຂອງຫ້ອງການ ກະສິກຳ-ປ່າໄມ້ ເມືອງ (DAFEO) ໄດ້ລົງກວດກາ ຮ່ວມກັບ ຊາວກະສິກອນ ມີພຽງ 1.534 ຮຕ ທີ່ອາດເວົ້າໄດ້ວ່າ ແມ່ນເນື້ອທີ່ປູກກົ່ວເຫຼືອງ. ກ້າວຫາກຄາດຫວັງສະມັດ ຕະພາບ ຈາກເນື້ອທີ່ ຂອງພວກມັນ ທີ່ປະເມີນໄວ້ ຢູ່ໃນຂອບເຂດ 0,8 ຫາ 1,2 ໂຕນ/ ຮຕ ເມືອງ ສາມາດ ຈະໄດ້ພົນພະລິດ ປະມານ 1.200 ຫາ 1.800 ໂຕນ ຂອງກົ່ວເຫຼືອງ ຢູ່ໃນຊ່ວງທ້າຍ ລະດູການ ຂອງ ປີ 2005.

ຈາກບ່ອນທີ່ມີ ຄາດໝາຍການພະລິດ, ເມືອງ ສາມາດວາງແຜນ ແລະ ສະໜອງຂໍ້ມູນພື້ນຖານ ໃຫ້ ບ/ສ ວີເລ ຄຸນ ແລະ ອົງການສຸພານິມິດ ເພື່ອວາງແຜນສະໜອງຕົ້ນທຶນການພະລິດທີ່ຈຳເປັນ, ຕົ້ນຕໍ ແມ່ນແນວ ພັນ. ການເຮັດແນວນີ້ ແມ່ນຮັບປະກັນການສະໜອງຕົ້ນທຶນການພະລິດໃຫ້ພຽງພໍ ກັບເນື້ອທີ່ຄາດໝາຍ ທີ່ວາງ ໄວ້. ເພື່ອຕອບສະໜອງໄດ້ ໃນປີ 2004 ທີ່ມີເນື້ອທີ່ຄາດໝາຍການພະລິດ 900 ຮຕ, ບ/ສ ວີເລຄຸນ ໄດ້ສະ ໜອງແນວພັນທີ່ພຽງພໍ ໃຫ້ແກ່ການປູກ ໃນ 810 ຮຕ. ອົງການສຸພານິມິດ ໄດ້ສະໜອງແນວພັນກົ່ວເຫຼືອງ 1,8 ໂຕນ ທີ່ສາມາດປູກໄດ້ 90 ຮຕ.

ນອກຈາກນັ້ນ, ຄາດໝາຍການພະລິດ ເຮັດໃຫ້ເມືອງ ເຫັນໄດ້ວ່າ ບໍລິມາດການຂາຍ ແລະ ລາຍຮັບ ທີ່ຄາດ ກະໄວ້ ໃນຮູບການ ທີ່ເປັນອາກອນລາຍຮັບ ທີ່ ບ/ສ ວີເລຄຸນ ທີ່ຈະຕ້ອງໄດ້ຈ່າຍ. ໃນປີ 2004, ໄດ້ຄິດໄລ່ 2% ຂອງມູນຄ່າທັງໝົດ ຂອງກົ່ວເຫຼືອງ ທີ່ຊື້ ໂດຍບໍລິສັດ ຈາກຊາວກະສິກອນພາຍໃນເມືອງ.

## *6.2 ການແບ່ງເຂດການພະລິດ*

ເມືອງຊຽງເງິນ ມີ ທັງໝົດ 74 ໝູ່ບ້ານ. ໃນປີ 2004 ໄດ້ມອບໝາຍ ໃຫ້ 12 ໝູ່ບ້ານ ເປັນເຂດພະລິດ ກົ່ວ ເຫຼືອງ. ໝູ່ບ້ານອື່ນໆ ແມ່ນມອບໝາຍ ໃຫ້ເປັນພື້ນທີ່ການພະລິດກະສິກຳ ເຊັ່ນ: ສາລີ, ໝາກງາ, ໝາກ ເດືອຍ ພືດອື່ນໆ (ເຄື່ອງປ່າ ຂອງດົງ NTFPs) ແລະ ລ້ຽງສັດ. (ດັ່ງສະແດງ ໃນຮູບ 1)




ຮູບສະແດງ 1: ການແບ່ງເຂດການພະລິດ ທາງດ້ານກະສິກຳ ຢູ່ເມືອງຊຽງເງິນ, ແຂວງຫຼວງພະບາງ

ການແບ່ງເຂດ ແມ່ນໄດ້ອະນຸມັດ ໂດຍ ພະນັກງານ ຫ້ອງການສົ່ງເສີມກະສິກຳ-ປ່າໄມ້ເມືອງ ໂດຍອີງໃສ່ບັນ ຫາຕົ້ນຕໍ ຄື: (1) ທີ່ເໝາະສົມກັບຄວາມຕ້ອງການ

ທາງດ້ານວັດຖຸ-ຊີວະສາດ ຂອງພືດ ຫຼື ກິດຈະກຳທາງ ການກະເສດ ເໝາະສົມກັບສະພາບເງື່ອນໄຂ ທີ່ໄດ້ພົບທາງດ້ານວັດຖຸ ຊີວະສາດ ຢູ່ພາຍໃນບ້ານ. (2) ຄວາມ ສົນໃຈ ຂອງຊາວກະສິກອນ ທີ່ຢາກປູກພືດ ແລະ ລ້ຽງສັດ ແລະ (3) ການຫຍັບເຂົ້າໃກ້ ຫົນທາງ ແລະ ເກີງ ຈຸດບ່ອນທີ່ຈະຂາຍ. ແນວຄິດ ທີ່ເປັນມາດການຫຼ້າສຸດ ທີ່ພໍຈະເຂົ້າເກີງຫົນທາງ ສຳລັບການເກັບກູ້ ເພື່ອຫຼຸດ ຜ່ອນຄວາມຫຍຸ້ງຍາກ ທາງດ້ານການຂົນສົ່ງ ແລະ ຄ່າໃຊ້ຈ່າຍຕ່າງໆ .

## 6.3 ການປູກ ພາຍໃຕ້ສັນຍາ

ມັນຂື້ນຢູ່ກັບການຕົກລົງ ການປູກພາຍໃຕ້ສັນຍາແບບຜູກພັນ. ຜູ້ລົງທືນ ໂດຍປົກກະຕິ ຮັບພາລະຄ່າວັດຖຸ ອຸ ປະກອນ ແລະ ສິ່ງນຳເຂົ້າ (Inputs) ທີ່ເປັນເຕັກນິກ. ສ່ວນຊາວກະສິກອນເປັນຜູ້ປູກ ດ້ວຍການສະໜອງ ແຮງງານ ແລະ ດິນ ເພື່ອປູກພືດ. ຜົນເກັບກ່ຽວທັງໝົດ ແມ່ນຂາຍໃຫ້ແກ່ຜູ້ລົງທືນແຕ່ຜູ້ດຽວ ຕາມລາຄາ ທີ່ໄດ້ຕົກລົງນຳກັນໄວ້ ກ່ອນທີ່ຈະເລີ້ມປະຕິບັດງານ.

ການປູກ ພາຍໃຕ້ສັນຍາ ແມ່ນເພື່ອປ້ອງກັນການລົງທືນ ຂອງບໍລິສັດ. ໃນສັນຍາ ຂອງ ບ/ສ ວິໄລຄູນ ຊາວ ກະສິກອນ ແມ່ນກີກຜູກພັນ ທີ່ຈະຕ້ອງຂາຍຜົນຜະລິດຂອງຕົນ ໃຫແກ່ ບ/ສ ແຕ່ຜູ້ດຽວ. ການຂາຍ ໃຫ້ແກ່ ພໍ່ ຄ້າ-ແມ່ຄ້າ ຄົນອື່ນໆ ແມ່ນກືວ່າຜິດກົດໝາຍ. ອີກອັນນື່ງ ຊາວກະສິກອນ ມີພັນທະຜູກພັນ ຈະຕ້ອງຂາຍ ໃຫ້ ແກ່ ບ/ສ ຕາມລະດູການເກັບກ່ຽວ ແລະ ຕາກໃຫ້ແຫ້ງ. ການກັກຕຸນຜົນຜະລິດ ຂອງພວກເຂົາເຈົ້າ ແມ່ນກື ວ່າຜິດກົດໝາຍ. ຫາກສືບໄດ້ ພວກເຂົາເຈົ້າຈະຕ້ອງກືກປັບໃໝ 10 ເທົ່າ ຂອງມູນຄ່າ ທີ່ໄດ້ກັກຕູນໄວ້ໃນ ສາງ.

ກ້າຫາກ ຜົນຜະລິດ ສູນເສຍຍ້ອນໄພທຳມະຊາດ ເປັນຕົ້ນ: ນ້ຳກ້ວມ, ແຫ້ງແລ້ງ, ກືກທຳລາຍ ຍ້ອນສັດຕູ ຫຼື ພະຍາດພືດ ຫຼື ເມັດບໍ່ມີຄວາມງອກ ບັນຫາເຫຼົ່ານີ້ຄວນຈະລາຍງານຢ່າງທັນການ ໃຫ້ພະນັກງານສົ່ງເສີມ ຂອງຫ້ອງການ ກະສິກຳ-ປ່າໄມ້ເມືອງ ຊາບ. ບໍ່ດັ່ງນັ້ນ, ທາງຝ່າຍ ບ/ສ ຈະບໍ່ຮັບຜິດຊອບນຳ. ຊາວກະສິ ກອນ ຈະຕ້ອງຊຳລະວັດຖຸ ທີ່ເປັນສິ່ງນຳເຂົ້າ (Inputs) ທີ່ໄດ້ກູ້ມາຄືນໃຫ້ແກ່ ບ/ສ. ນອກຈາກນັ້ນ, ກ້າຫາກ ຜົນຜະລິດເສຍຫາຍ ດ້ວຍສາຍເຫດ ທີ່ຊາວກະສິກອນ ບໍ່ປະຕິບັດຕາມເຕັກ ທີ່ໄດ້ແນະນຳໃຫ້ນັ້ນ, ຊາວກະສິ ກອນ ຈະກືກປັບໃໝ 5 ເທົ່າ ຂອງມູນຄ່າ ທີ່ພວກເຂົາໄດ້ຊື້ມານັ້ນ.

ຢູ່ໃນສັນຍາສະບັບດຽວກັນນີ້ ລະບຸໄວ້ວ່າ ບ/ສ ຈະຊື້ຕາມລາຄາ 1.500 ກີບ/ກິໂລ ສຳລັບ ກົ່ວເຫຼືອງເມັດ ນ້ອຍ ແລະ 2.000 ກີບ/ກິໂລ ສຳລັບເມັດໃຫຍ່. ສັນຍາໄດ້ລະບຸວ່າ ຊາວກະສິກອນ ຈະຕ້ອງຕາກໃຫ້ແຫ້ງດີ ຢ່າງໜ້ອຍ 4 ວັນ ເພື່ອເຮັດໃຫ້ການບັນຈຸຄວາມຊຸ່ມຂອງເມັດກົ່ວເຫຼືອງ 12-14%. ທາງ ບ/ສ ອາດຈະປະ ຕິເສດເກັບຊື້ ກ້າຫາກເມັດເປັນໂໝກ, ກືກຊຶມເຊື້ອລາ ແລະ ເປັນແກ່ນທີ່ມີຄຸນນະພາບຕ່ຳຫຼາຍ. ມັນບໍ່ເປັນ ທີ່ແຈ່ມແຈ້ງປານໃດ ສິ່ງທີ່ວ່າຊາວກະສິກອນໄດ້ເຮັດເພື່ອໃຫ້ເຂົ້າໃຈວ່າ ມາດຕະການດ້ານຄຸນນະ ພາບຈຳ ນວນນື່ງ ທີ່ຈະສົ່ງຜົນສະທ້ອນໃຫ້ກັບລາຄາຂອງກົ່ວເຫຼືອງ ທີ່ເຂົາເຈົ້າໄດ້ເກັບກູ້ມາ.

ສິ່ງທີ່ໄດ້ປຽບອັນນື່ງ ຂອງໂຄງການປູກ ພາຍໃຕ້ສັນຍາ ແມ່ນມີການຄ້ຳປະກັນລາຄາ ແລະ ເກັບຊື້ຜົນເກັບ ກ່ຽວ. ການຄ້ຳປະກັນລາຄາ ໝາຍເກີງກ້າຫາກລາຄາປາກສາງ ສ່ວນໃຫຍ່ຫາກຕ່ຳກວ່າທີ່ໄດ້ຕົກລົງນຳກັນ ໄວ້, ຜູ້ລົງທືນ ກໍ່ຍັງຈະເກັບຊື້ຕາມທີ່ ໄດ້ຕົກລົງນຳກັນດ້ານລາຄາໃນສັນຍາ. ດັ່ງທີ່ໄດ້ລະບຸໄວ້ ໃນພາກທີ V ຂອງສັນຍາ ທີ່ເຮັດນຳກັນ ລະຫວ່າງ ບ/ສ ວິໄລຄູນ ແລະ ຊາວກະສິກອນ ບ/ສ ຈະກືກປັບໃໝ 10 ເທົ່າ ຂອງ ມູນຄ່າກົ່ວເຫຼືອງທີ່ໄດ້ຜະລິດຂື້ນ ໂດຍຊາວກະສິກອນ; ກ້າຫາກ ບ/ສ ວິໄລຄູນ ຫາກປະຕິເສດບໍ່ຊື້ຕາມລາຄາ ຂອງສັນຍາ - ກ້າບັນຫານີ້ ໄດ້ກືກປະຕິບັດຢ່າງເຂັ້ມງວດ, ຍິ່ງຈະເປັນເລື້ອງດີ ໃຫ້ແກ່ຊາວກະສິກອນ. ບັນ ຫານື່ງ ທີ່ຄວນໄດ້ເຕ່ຕອງ ຄື ຈະເຮັດແນວໃດ ເພື່ອກຳນົດລາຄາຂອງສັນຍາ ແລະ ໃຜເປັນຜູ້ກຳນົດ ຫຼື ຊາວ ກະສິກອນ ບໍ່ສາມາດເຈລະຈາລາຄາສັນຍາ ປີ 2004 ມັນບໍ່ແຈ່ມແຈ້ງ. ກ້າຫາກຊາວກະສິກອນ ຕ້ອງການ ຢາກຮ່ວມ

ເຂົາເຈົ້າກໍ່ເຊັນສັນຍາ ໂດຍສອດຄ່ອງກັບລາຄາທີ່ໄດ້ລະບຸໄວ້ ຢູ່ບ່ອນນັ້ນ. ກ້ອງຫາກບໍ່ເປັນທີ່ຕົກ ລົງກັນໄດ້ ພວກເຂົາກໍ່ບໍ່ມາຮ່ວມ, ໝາຍຄວາມວ່າ ເຂົາເຈົ້າບໍ່ສາມາດເອົາແນວພັນ ແລະ ບໍ່ເອົາສິນເຊື່ອ ຊຶ່ງເປັນສິ່ງນຳເຂົ້າ (Inputs).

### *6.4 ການສະໜັບສະໜູນ ທາງດ້ານວິຊາການ*

ໃນປີ 2004, ມີ 12 ບ້ານ ໄດ້ຖືກມອບໝາຍໃຫ້ຜະລິດກົ່ວເຫຼືອງ, ມີພຽງແຕ່ 7 ບ້ານ ທີ່ໄດ້ປູກກົ່ວເຫຼືອງເປັນ ພືດສ້າງລາຍຮັບ. ມີບ້ານຈຳນວນນຶ່ງ ທີ່ຂຶ້ນກັບເຂດກົ່ວກະຈຳ; ຍົກເວັ້ນ ບ້ານທີ່ກ່າວມາ, ສ່ວນໃຫຍ່ຊາວ ກະສິກອນ ຢູ່ໃນບ້ານອື່ນ ບ້ານທີ່ຖືກມອບໝາຍໃຫ້ຜະລິດກົ່ວເຫຼືອງນັ້ນ, ບໍ່ເຄີຍມີປະສົບການໃນການປູກກົ່ວ ເຫຼືອງມາກ່ອນ. ຄວາມຮັບຮູ້ ຂອງພວກເຂົາເຈົ້າທີ່ຈະຜະລິດກົ່ວເຫຼືອງ ແມ່ນມີຂອບເຂດຈຳກັດ.

ໃນທ່າມກາງ ໝູ່ ພ/ງ ສົ່ງເສີມ ຂອງຫ້ອງການກະສິກຳ-ປ່າໄມ້ເມືອງ (DAFEO), ມີຄວາມຮູ້ທາງດ້ານວິຊາ ການກ່ຽວກັບການຜະລິດກົ່ວເຫຼືອງ ຍັງຈຳກັດ. ເມື່ອເວົ້າເຖິງຂໍ້ຈຳກັດດັ່ງກ່າວ, ບ/ສ ວີໂລຄູນ ແລະ ອົງ ການສຸພານິມິດ ໄດ້ສະໜອງການອົບຮົມໃຫ້ແກ່ ພະນັກງານສົ່ງເສີມເມືອງ (DAFEO) ແລະ ຫົວໜ້າກຸ່ມ ຊາວກະສິກອນ ຜູ້ທຳການຜະລິດ ກ່ອຍສົ່ງຕໍ່ໄປຕາມລຳດັບໃຫ້ແກ່ຊາວກະສິກອນ ໃນໝູ່ບ້ານຂອງພວກເຂົາ ເຈົ້າ. ການໃຫ້ການສະໜັບສະໜູນດ້ານວິຊາການ ໃຫ້ແກ່ຊາວກະສິກອນຂັ້ນຕໍ່ໄປ ຈະໄດ້ຈັດຕັ້ງປະຕິບັດ ໃນ ຊ່ວງລະດູການຜະລິດ.

## 7. ສະພາບການປູກກົ່ວເຫຼືອງ ໃນທ້າຍລະດູການຜະລິດ ປີ 2004

ໃນປີ 2004 ແມ່ນລະດູການປີທຳອິດ ຂອງການປູກກົ່ວເຫຼືອງ ຢູ່ເມືອງຊຽງເງິນ, ຊາວກະສິກອນ ແລະ ບ/ສ ວີໂລຄູນ ໄດ້ຢືນຢັນວ່າ ຜະລິດຕະພາບປີນີ້ ຂ້ອນຂ້າງຕ່ຳ. ຄາດຄະເນຜະລິດຕະພາບ ຢູ່ໃນລະຫວ່າງ 0,8-1,2 ໂຕນ/ຮຕ ແຕ່ຜະລິດຕະພາບຕົວຈິງ ຂອງຊາວກະສິກອນສ່ວນໃຫຍ່ ແມ່ນຕ່ຳ 0,1-0,5 ໂຕນ/ຮຕ. ຊາວກະສິ ກອນຈຳນວນນຶ່ງ ໄດ້ຢືນຢັນວ່າ ຜະລິດຕະພາບທີ່ສູງກ່ວາໝູ່ ແມ່ນ 1,0 ໂຕນ/ຮຕ.

ອີງຕາມການສຳພາດ, ເຫດຜົນທີ່ພາໃຫ້ການປູກກົ່ວເຫຼືອງບໍ່ປະສົບຜົນສຳເລັດ ມີດັ່ງຕໍ່ລົງໄປນີ້:

1. ເວລາປູກ: ການປູກໃນຕົ້ນເດືອນເມສາ ພາໃຫ້ເບ້ຍກົ່ວເຫຼືອງຂາດນ້ຳ ເມື່ອຝົນບໍ່ຕົກ ໃນເວລາ ຕໍ່ມາ. ການປູກແຕ່ຫົວປີ ພາໃຫ້ໝາກສຸກແກ່ ໃນລະດູຝົນ. ບັນຫານີ້ ເຮັດໃຫ້ເມັດກົ່ວເຫຼືອງ ມີຄຸນນະ ພາບຕ່ຳ. ເມັດກົ່ວເຫຼືອງ ຈຳນວນນຶ່ງ ແຕກງອກແຕ່ຕອນຢູ່ໃນຝັກ.
2. ເບ້ຍກົ່ວເຫຼືອງ ຕາຍແຕ່ຕອນ ມີ 4-5 ໃບ, ຮາກຕາຍໄຊ. ການປູກ ຢູ່ໃນ ເດືອນ 6 ຊ່ວງຝົນຕົກ ແຮງ ເປັນຜົນເຮັດໃຫ້ຮາກທີ່ອອກມາໃໝ່ນັ້ນເປື່ອຍ.
3. ໃສ່ແກ່ນຫຼາຍໂພດໃນນຶ່ງຂຸມ ເປັນຜົນເຮັດໃຫ້ເກີດການຍາດຊີງແສງແດດ (ແສງ), ຄວາມຊຸ່ມຊື່ນ ໃນດິນ ແລະ ທາດອາຫານລະຫວ່າງຕົ້ນ. ຊາວກະສິກອນ ໃສ່ 10 ເມັດ ແທນທີ່ຈະແນະນຳໃຫ້ໃສ່ ພຽງ 3 ເມັດ ຕໍ່ ຂຸມ.
4. ໄລຍະຫ່າງລະຫ່ວາງຕົ້ນຕໍ່ຕົ້ນ ແມ່ນກິໂພດ ເປັນຜົນເຮັດໃຫ້ມີຫົ່ມຫຼາຍໂພດ ແລະ ເກີດມີການຍາດ ຊີງແສງສະຫວ່າງຕົ້ນດ້ວຍກັນ.
5. ບໍ່ມີ ຫຼື ມີຄວາມງອກ ຂອງເມັດໜ້ອຍ.
6. ການເຕີບໂຕ ຂອງກົ່ວເຫຼືອງ ບໍ່ສະໝ່ຳສະເໝີກັນ.

ຂ້າງລຸ່ມນີ້ ແມ່ນປະສົບການອື່ນໆ ຂອງຊາວກະສິກອນ:

1. ກົ່ວເຫຼືອງ ປູກໃສ່ດິນທີ່ມີຄວາມອຸດົມສົມບູນດີ ການເຕີບໂຕດີທີ່ສຸດ ແຕ່ບໍ່ເປັນຝັກ ໃນຂະນະດຽວ ກັນນັ້ນ, ພວກທີ່ປູກໃສ່ປ່າຫີນ ແມ່ນໃຫ້ຜົນຜະລິດດີ.
2. ການອອກດອກຂອງກົ່ວເຫຼືອງ ແມ່ນມີຄວາມສຳຄັນຫຼາຍ. ການເສຍຫຍ້າໃນຊ່ວງໄລຍະອອກດອກ ແມ່ນຊ້າໂພດ ເປັນພົນເຮັດໃຫ້ຜົນຜະລິດຕໍ່າ. ກ້າຫາກພົບຕົກພັກ ພ້ອມກັບການອອກດອກ ເປັນ ພົນເຮັດໃຫ້ການພັດທະນາການຂອງຝັກຕໍ່າ.
3. ກົ່ວເຫຼືອງ ທີ່ໄດ້ປູກໃນບ່ອນແພ້ວທາງໃໝ່ ເຊັ່ນ: ປ່າສັກ ແມ່ນເຕີບໃຫຍ່ຊ້າ ແລະ ມີຫຼາຍໆ ຝັກ ບໍ່ເຕັມແກ່ນ. ມັນເປັນຝັກທີ່ຊຶມເຊື້ອລາ ຊ່ອງຝັກດຳ ເປັນພົນເຮັດໃຫ້ ຊາວກະສິກອນ ບໍ່ສາມາດ ເກັບກ່ຽວຜົນຜະລິດ ຂອງກົ່ວເຫຼືອງໄດ້.
4. ການປູກກົ່ວເຫຼືອງ ພາຍຫຼັງ ເກັບກູ້ເຂົ້າທີ່ມີການພວນດິນ ແລະ ປົກຄຸມໜ້າດິນດ້ວຍເຟືອງເຂົ້າ ແມ່ນເຮັດໃຫ້ຜົນຜະລິດ ແລະ ລາຍຮັບດີ ຍ້ອນວ່າການປົກຄຸມດ້ວຍເຟືອງເຂົ້າ ໄດ້ກົດດັນຄວາມ ເຕີບໂຕຂອງວັດຊະພືດ. ຊຶ່ງເຮັດໃຫ້ປະຫຍັດແຮງງານໃນການເສຍຫຍ້າ.
5. ມອດເຈາະແກ່ນ ແລະ ຊຶມເຊື້ອລາ ແມ່ນສັງເກດໄດ້ໃນກົ່ວເຫຼືອງທີ່ໄດ້ເກັບກູ້ມາ. ມີຊາວກະສິ ກອນຜູ້ນຶ່ງ ໄດ້ນຳໃຊ້ສານ rhizobium ທີ່ເຫຼືອໃຊ້ ໃສ່ໃນກົ່ວເຫຼືອງທີ່ເກັບກູ້ມານັ້ນ ແລະ ຄິດວ່າຈະ ໃຫ້ສັບພະຄຸນ ຄື ຢາປາບສັດຕູພືດ ຫຼື ໃຊ້ຂັບໄລ່ແມງໄມ້.
6. ມີຊາວກະສິກອນ ບາງຄົນ ເກັບກ່ຽວກົ່ວເຫຼືອງໄດ້ແກ່ນນ້ອຍຫຼາຍ. ບໍ່ຮູ້ເຫດຜົນວ່າ ບັນຫານີ້ເປັນ ຍ້ອນຫຍັງ ເປັນຍ້ອນແນວພັນ ຫຼື ການພັດທະນາການ ຂອງແກ່ນບໍ່ດີ, ຍ້ອນສາຍເຫດຂາດທາດ ໂປຕາຊຽມ (K) ຫຼື ທາດໂຟດຟໍລັດ (P).
7. ແນວພັນກົ່ວເຫຼືອງ ທີ່ໄດ້ມາຈາກກົ່ວກະຈໍາ ໃຫ້ຜົນຜະລິດດີກວ່າແນວພັນທີ່ສະໜອງໃຫ້ ໂດຍ ບ/ສ ວິໄລຄູນ.

# 8. ຕົວກຳນົດ ເພື່ອບັນລຸຜົນສຳເລັດ ໃນການປູກກົ່ວເຫຼືອງ

ມີຫຼາຍປັດໃຈ ກຳນົດການສົ່ງເສີມ ທີ່ສຳເລັດຜົນກ່ຽວກັບການປູກກົ່ວເຫຼືອງເປັນສິນຄ້າ ໃນເມືອງ ຊຽງເງິນ. ບາງປັດໃຈທີ່ສຳຄັນ ຈະໄດ້ສົນທະນາກັນ ດັ່ງຕໍ່ໄປນີ້:

## *8.1 ພາກສ່ວນ ທີ່ກ່ຽວຂ້ອງ*

ພາກສ່ວນທີ່ກ່ຽວຂ້ອງຕົ້ນຕໍ ສຳລັບການຜະລິດ ຢູ່ເມືອງຊຽງເງິນ ມີ: (1) ບ/ສ ວິໄລຄູນ, (2) ຫ້ອງການສົ່ງເສີມ ກະສິກຳ-ປ່າໄມ້ເມືອງ, (3) ຫ້ອງການການຄ້າເມືອງ, (4) ບັນດາ ຫົວໜ້າກຸ່ມຜະລິດ, (5) ຊາວກະສິກອນ, (6) ພໍ່ຄ້າ-ແມ່ຄ້າ ອື່ນໆ ແລະ (7) ອົງການສຸພາ ນິດມິດ. ພາລະບົດບາດຂອງເຂົາເຈົ້າເຫຼົ່ານີ້ ຄືສິ່ງທີ່ສະແດງອອກເຖິງການກະທຳທີ່ສັງເກດໄດ້ ໂດຍພາກສ່ວນທີ່ກ່ຽວຂ້ອງ ໄດ້ນຳສະເໜີໄວ້ ຂ້າງລຸ່ມນີ້:

ຕາຕະລາງ 1. ການວິເຄາະບັນຫາຂອງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຜະລິດກົ່ວເຫຼືອງ ຢູ່ເມືອງ ຊຽງເງິນ (ປີ 2004)

| ພາກສ່ວນທີ່ກ່ຽວຂ້ອງ | ພາລະບົດບາດ | ພຶດຕິກຳຕົວຈິງ ຕາມຄວາມເຂົ້າໃຈ ຂອງພາກສ່ວນທີ່ກ່ຽວຂ້ອງອື່ນໆ |
|---|---|---|
| ບ/ສ ວິໄລຄູນ | • ສະໜອງແນວພັນ ໃນເບື້ອງຕົ້ນ ແລະ ສານທີ່ຄຸ້ມກັນຮາກໃຕ້ດິນ.<br>• ສະໜອງ ຄຳປຶກສາດ້ານເຕັກນິກ. | ຕາມຄວາມເຂົ້າໃຈຂອງຊາວກະສິກອນ:<br>• ລາຄາ ເກັບຊື້ ບ/ສ ວິໄລຄູນ ແມ່ນ 2.000 ກີບ/ກລ ຕໍ່າກວ່າ ລາຄາລອຍຕົວ ຄື: 2.500 - 3.000 ກີບ/ກລ. ດັ່ງນັ້ນ, ພວກ |

| | | |
|---|---|---|
| | • ເກັບຊື້ ຜົນຜະລິດຄືນ ຈາກຊາວກະສິກອນ<br>• ໃຫ້ຄວາມຄໍ້າປະກັນ ທີ່ຈະເກັບຊື້ ຜົນເກັບກ່ຽວ ຕາມລາຄາສັນຍາ ທີ່ໄດ້ຕົກລົງນໍາກັນ; ເຖິງແມ່ນວ່າ ລາຄາທົ່ວໄປ ຢູ່ປາກສາງຈະສູງກໍ່ຕາມ. | ເຂົາມີຄວາມຮູ້ສຶກວ່າ ຖືກກົດຂີ່ຂູດຮີດ.<br>• ພວກເຂົາ ຍັງບໍ່ເຂົ້າໃຈແຈ້ງວ່າ ເປັນຫຍັງຈິ່ງຖືກພັກດັນ ໃຫ້ຂາຍຜົນເກັບກ່ຽວ ໃຫ້ແກ່ ບ/ສ ວີເລຄູນ ເທົ່ານັ້ນ. ເຖິງແມ່ນວ່າພວກເຂົາເຈົ້າ ບໍ່ໄດ້ມີຫຍັງ ກັບ ບ/ສ. ການທີ່ເຂົາເຈົ້າໄດ້ແນວພັນ ຈາກອົງການສຸພານິມິດ ຫຼື ກໍ່ເຂົາເຈົ້າ ໃຊ້ແນວພັນພື້ນເມືອງຂອງເຂົາເຈົ້າເອງ. ເຂົາເຈົ້າມີຄວາມຮູ້ສຶກວ່າ ຖືກກັບດັກຂອງລະບົບການນີ້.<br>• ບ/ສ ວີເລຄູນ ເອົາແນວພັນບໍ່ດີໃຫ້ເຂົາເຈົ້າປູກ. ກະເປົາບໍ່ມີຮອດສະຫຼາກ ທີ່ຂຽນບອກເຖິງຫຍັງ, ຊະນິດໃດ? ກ່ຽວກັບຄຸນນະພາບ.<br>• ຊາວກະສິກອນ ບໍ່ແນ່ໃຈວ່າ ບ/ສ ຈະຮັກສາຄໍາເວົ້າ (ສັດຈະ) ຂອງຕົນ ເພາະວ່າຊາວກະສິກອນ ເຄີຍມີປະສົບການບໍ່ດີມາແລ້ວ ກັບໝາກເດືອຍ ປີ 2000-2001 ກັບ ບ/ສ ອື່ນໆ ເມື່ອລາຄາຕົກ ບໍ່ມີໃຜມາເກັບຊື້. |
| | | ຕາມຄວາມເຂົ້າໃຈຂອງ DAFEO:<br>• ບ/ສ ວີເລຄູນ ໃຫ້ສັດຈະວ່າຈະເກັບຊື້ຜົນເກັບກ່ຽວທັງໝົດ (ເຖິງແມ່ນວ່າ ລາຄາຈະຕົກ) ເພື່ອປ້ອງກັນການລົງທຶນຂອງ ບ/ສ.<br>• ບ/ສ ວີເລຄູນ ເຂົ້າຫາຊາວກະສິກອນ ໂດຍກົງ ບໍ່ຜ່ານ ຫຼື ແຈ້ງໃຫ້ DAFEO ຮູ້ນໍາ. ດັ່ງນັ້ນ, DAFEO ບໍ່ສາມາດຊ່ວຍເຫຼືອຢ່າງເຕັມສ່ວນ ໃຫ້ແກ່ຊາວກະສິກອນ ໃນການຊີ້ນໍາ-ນໍາພາ-ຕິດຕາມຊາວກະສິກອນ |
| ຫ້ອງການສົ່ງເສີມກະສິກໍາ-ປ່າໄມ້ເມືອງ (DAFEO) | • ຊ່ວຍ ບ/ສ ວີເລຄູນ ເຮັດສັນຍາລະຫວ່າງ ບ/ສ ແລະ ຊາວກະສິກອນ<br>• ອົບຮົມ ຊາວກະສິກອນ ກ່ຽວກັບເຕັກນິກ ແລະ ແນະນໍາການປູກກົ່ວເຫຼືອງ<br>• ດໍາເນີນການກວດກາ ແລະ | ຕາມຄວາມເຂົ້າໃຈຂອງ ຊາວກະສິກອນ:<br>• ພ/ງ DAFEO ບໍ່ສາມາດເຮັດຫຍັງໄດ້ ເມື່ອຊາວກະສິກອນລາຍງານວ່າ ແນວພັນທີ່ໄດ້ຮັບ ແມ່ນແນວພັນບໍ່ດີ, ບໍ່ມີຄວາມງອກ (ບໍ່ອອກ).<br>• ການຝຶກອົບຮົມໃຫ້ແກ່ຊາວກະສິກອນ ໂດຍ ບ/ສ ຍັງບໍ່ທັນພຽງພໍ. |

| | | |
|---|---|---|
| | ລົງຢ້ຽມຢາມ ຊີ້ນຳ-ນຳພາ-ຕິດຕາມ ພາກສະໜາມ ໃນຊ່ວງລະດູການຜະລິດ ກົ່ວເຫຼືອງ<br>• ຊີ້ນຳ-ນຳພາ ຊາວກະສິກອນໃນການເກັບກູ້ພົນຜະລິດ.<br>• ຊີ້ນຳ-ນຳພາ ມູນຄ່າ ທັງໝົດຂອງກົ່ວເຫຼືອງ ທີ່ໄດ້ຊື້ ໂດຍ ບ/ສ ວີໄລຄູນ | ຕາມຄວາມເຂົ້າໃຈຂອງ ບ/ສ ວີໄລຄູນ:<br>• DAFEO ແລະ ການນຳ ຂັ້ນເມືອງ ກໍ່ຄືໝົດທຸກພາກສ່ວນກຳລັງຊ່ວຍເຫຼືອ ເພື່ອປ້ອງກັນການລົງທຶນ ຂອງ ບ/ສ ດ້ວຍການລະດົມໃຫ້ຊາວກະສິກອນຂາຍໃຫ້ແກ່ ບ/ສ ແຕ່ຜູ້ດຽວ ແລະ ສະໜອງການອົບຮົມ ໃຫ້ແກ່ຊາວກະສິກອນເຊັ່ນດຽວກັນ. |
| ຫ້ອງການການຄ້າເມືອງ (DCO) | ກຳນົດ ມູນຄ່າພາສີ ແລະ ອາກອນ ທີ່ ບ/ສ ວີໄລຄູນ ຈະຕ້ອງຈ່າຍໃຫ້ແກ່ເມືອງ | ຕາມຄວາມເຂົ້າໃຈຂອງ DAFEO ພ/ງ DCO ກຳລັງເຮັດວຽກວິຊາສະເພາະຂອງຕົນ ດັ່ງທີ່ຄາດຫັວງ ຂອງພວກເຂົາໄວ້ກ່ອນ |
| ຫົວໜ້າກຸ່ມ ຜູ້ທຳການຜະລິດ | • ກ່າຍສິ່ງຕໍ່ ການອົບຮົມ ທີ່ໄດ້ຮຽນມາໃຫ້ແກ່ຊາວກະສິກອນ<br>• ປະສານງານ ຮ່ວມກັບ DAFEO ເພື່ອສ້າງຄວາມສະດວກ ໃນການເຊັນສັນຍາ<br>• ລາຍງານ ໃຫ້ DAFEO ຊາບ ກ່ຽວກັບການຜະລິດ ທີ່ອ້ອມຕົວ ຂອງ ຊາວກະສິກອນ<br>• ປະສານງານ ເກັບກຳພົນເກັບກ່ຽວຈາກຊາວກະສິກອນ ພາຍໃນກຸ່ມຜະລິດຂອງຕົນ | ຂໍ້ມູນ ບໍ່ມີ |
| ຊາວກະສິກອນ | • ສະໜອງດິນ ແລະ ແຮງງານ<br>• ປະຕິບັດ ຕາມການແນະນຳ ຂອງ DAFEO & ວີໄລຄູນ ກ່ຽວກັບເຕັກນິກການປູກກົ່ວເຫຼືອງ<br>• ຂາຍພົນກັບກ່ຽວທັງໝົດ ໃຫ້ແກ່ ບ/ສ ວີໄລຄູນ<br>• ຊົດເຊີຍແນວພັນຄືນ ໃນຮູບການ (ຕາມອັດຕາ 4 ກລ/1 ກລ ທີ່ກູ້ມາ) ຫຼື ມູນຄ່າແນວພັນ ທີ່ກູ້ຢືມ 1 ກລ = 8.100 ກີບ ຄິດໄລ່ຕາມຈຳນວນກູ້ຢືມ ເພື່ອລົບອອກກ່ອນ<br>• ລາຍງານ ໃຫ້ DAFEO ຊາບ ກ່ຽວກັບບັນຫາໃດນຶ່ງ ຈາກການປູກກົ່ວເຫຼືອງ | ຕາມຄວາມເຂົ້າໃຈຂອງ ບ/ສ ວີໄລຄູນ<br>• ຊາວກະສິກອນ ໄດ້ຮຽນຮູ້ການປູກກົ່ວເຫຼືອງ ຈາກປີ 2004. ດັ່ງນັ້ນ, ພວກເຂົາຄາດວ່າ ຈະກະເຮັດດີກວ່ານີ້ ໃນປີ 2005<br>• ຊາວກະສິກອນ ໄດ້ຮຽນຈາກຄວາມຜິດພາດ ແລະ ດຽວນີ້ ກຳລັງປະຕິບັດຕາມການແນະນຳ ທີ່ດີກວ່າເກົ່າ.<br>• ຊາວກະສິກອນ ຂາຍພົນເກັບກ່ຽວ ຂອງເຂົາເຈົ້າ ໃຫ້ພໍ່ຄ້າຄົນອື່ນ. ດັ່ງນັ້ນ, ພວກເຂົາກຳລັງລະເມີດສັນຍາ<br>- ຂາຍໃຫ້ພໍ່ຄ້າຄົນອື່ນ ແມ່ນຜິດກົດໝາຍ |
| | • ຊື້ພົນເກັບກ່ຽວ ກົ່ວເຫຼືອງ ອີງຕາມລາຄາລອຍຕົວ ທີ່ | ຕາມຄວາມເຂົ້າໃຈຂອງ ບ/ສ ວີໄລຄູນ ແລະ DAFEO<br>• ຊາວກະສິກອນ ບໍ່ປະຕິບັດຕາມຄຳແນະນຳ |

| | | |
|---|---|---|
| | ເກີດຂື້ນ ຢູ່ປາກສາງພານ (ໂດຍປົກກະຕິ ຈະສູງກວ່າ ລາຄາ ທີ່ ບ/ສ ໄດ້ໃຫ້ໄວ້. | ດັ່ງທີ່ໄດ້ໃຫ້ໄວ້ແກ່ພວກເຂົາເຈົ້າ ກ່ຽວກັບ ເຕັກນິກທີ່ແທ້ຈິງ ສໍາລັບການປູກກົ່ວເຫຼືອງ: ອີງຕາມວິໄລຄູນ ມັນເປັນປະເພນີ ຢູ່ແລ້ວ ທີ່ຊາວກະສິກອນທ້ອງຖິ່ນບໍ່ປະຕິບັດ ຕາມຄໍາແນະນໍາ. |
| ພໍ່ຄ້າອື່ນໆ | • ຊື້ພືນເກັບກ່ຽວ ກົ່ວເຫຼືອງ ອີງຕາມ ລາຄາລອຍຕົວ (ໂດຍ ປົກກະຕິຈະສູງກວ່າ ລາຄາ ຂອງ ບ/ສ ທີ່ໄດ້ໃຫ້ໄວ້) | ຕາມຄວາມເຂົ້າໃຈຂອງ ບ/ສ ວິໄລຄູນ ແລະ DAFEO<br>• ພໍ່ຄ້າຄົນອື່ນ ເປັນຄົນສວຍໂອກາດ ໃນນັ້ນ, ພວກເຂົາ ໄດ້ກໍາ ໄລ ເຖິງແມ່ນວ່າ ພວກເຂົາບໍ່ໄດ້ລົງທືນ ປູກກົ່ວເຫຼືອງ ກໍ່ຕາມ.<br>• ສິ່ງທີ່ພວກເຂົາເຮັດ ແມ່ນຜິດກົດໝາຍ ເພາະວ່າພວກເຂົາ ຊື້ພືນຜະລິດ ໂດຍບໍ່ມີ ການຊໍາລະພາສີ ແລະ ອາກອນ ທີ່ເໝາະສົມ ໃຫ້ແກ່ລັດ.<br><br>ດັ່ງທີ່ສັງເກດໄດ້ ໂດຍຊາວກະສິກອນ<br>• ພໍ່ຄ້າອື່ນໆ ສາມາດເຮັດໃຫ້ຊາວກະສິກອນ ຂາຍໄດ້ລາຄາດີ ແລະ ໃນທີ່ສຸດ ກໍ່ຈະໄດ້ກໍາໄລ ຈາກພືນຜະລິດ ຂອງພວກເຂົາເຈົ້າ |
| ອົງການ ສຸພາບີມິດ | • ສະໜອງ ແນວພັນ<br>• ສະໜອງເຕັກນິກ ໃນການປູກກົ່ວເຫຼືອງ | ບໍ່ມີ ຂໍ້ມູນ |

ພາກສ່ວນທີ່ກ່ຽວຂ້ອງ ທີ່ແຕກຕ່າງກັນ ມີຄວາມສໍາພັນຊຶ່ງກັນ ແລະ ກັນ ໃນທາງບວກ ແລະ ທາງລົບ. ບັນຫາດັ່ງກ່າວ ກາຍເປັນເລື້ອງຂຸ້ນເຄືອງ ຍ້ອນຂາດການປະຊາສໍາພັນ ພາຍໃນໝູ່ຂອງພວກເຂົາ ເຈົ້າ. ບາງເທື່ອ ກອງປະຊຸມຮ່ວມກັນ ຫຼື ກອງປະຊຸມແລກປ່ຽນບົດຮຽນ ພາຍໃນພາກສ່ວນທີ່ກ່ຽວຂ້ອງ ທີ່ແຕກຕ່າງກັນ ສາມາດຊ່ວຍປັບປຸງການພົວພັນພາຍໃນພວກເຂົາເຈົ້າ.

ພາກສ່ວນທີ່ກ່ຽວຂ້ອງ ທີ່ແຕກຕ່າງກັນ ທີ່ມີຄວາມສໍາພັນ ຊຶ່ງກັນ ແລະ ກັນ ມີພົນຕາມມາທັງສອງ, ບັນຫາທາງດ້ານເສດຖະກິດ ແລະ ສັງຄົມ. ບັນຫາທາງດ້ານການຜະລິດ ລວມມີການຂາດຄວາມເອົາໃຈ ໃສ່ ຂອງຊາວກະສິກອນ ຈໍານວນນຶ່ງ ໃນການປູກກົ່ວເຫຼືອງ ແລະ ອີກຕື່ມ ຍ້ອນວ່າ ມີປະສົບການ ຍັງບໍ່ ທັນພຽງພໍ ແລະ ເປັນຍ້ອນລາຄາເກັບຊື້ ທີ່ໄດ້ມີໃຫ້ແກ່ ຊາວກະສິກອນ ນັ້ນມັນຕໍ່າ. ເຖິງຢ່າງໃດກໍ່ຕາມ ຍັງມີຊາວກະສິກອນ ຜູ້ທີ່ມຸ່ງຫວັງທີ່ຈະທົດລອງຕື່ມອີກ ໃນປີນີ້.

ບັນຫາສັງຄົມ ລວມມີຄວາມຮູ້ສຶກໃນເລື້ອງທີ່ບໍ່ເຊື່ອໝັ້ນພາຍໃນ ລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງ. ອີກດ້ານນຶ່ງ, ຊາວກະສິກອນ ມີຄວາມຮູ້ສຶກວ່າ ພວກເຂົາເຈົ້າ ຖືກກົດຂີ່-ຂູດຮີດ ຍ້ອນລາຄາເກັບຊື້ ຕໍ່າໂພດ ແລະ ພວກເຂົາຖືກກັກຫ້າມບໍ່ໃຫ້ຂາຍໃຫ້ພໍ່ຄ້າຄົນອື່ນ. ດ້ານນຶ່ງ, ບ/ສ ວິໄລຄູນ ຄິດວ່າ ຊາວ ກະສິກອນ ບໍ່ປະຕິບັດຕາມສັນຍາ ມີອັນຄາໃຈ ສົງໄສວ່າ ຊາວກະສິກອນ ໄດ້ແຈ້ງໃຫ້ຊາບວ່າ ພືນເກັບ ກ່ຽວ ແມ່ນພໍ ແຕ່ສະເພາະໃຊ້ແທນແນວພັນ ທີ່ກູ້ຢືມເທົ່ານັ້ນ. ພວກເຂົາບໍ່ແຈ້ງພືນເກັບກ່ຽວທັງໝົດ ຊຶ່ງ ມີແນວໂນ້ມຢາກຈະເອົາໄປຂາຍໃຫ້ພໍ່ຄ້າຄົນອື່ນ ທີ່ໃຫ້ລາຄາດີກວ່າ. ການປະກອບການທາງດ້ານເສດ ຖະກິດ ແມ່ນໄດ້ຊີ້ແຈງເປັນອັນລະອຽດ ຢູ່ໝວດລຸ່ມນີ້:

## *8.2 ໂຄງຮ່າງ ການຕະຫຼາດ*

ຮູບສະແດງທີ 2 ນຳສະເໜີ ການຊື້ເຂົ້າ-ຂາຍອອກ ຂອງພາກສ່ວນທີ່ກ່ຽວຂ້ອງ ຊຶ່ງມີໜ້າທີ່ຮ່ວມໃນບັນ ຫາການຕະຫຼາດ ຂອງກົ່ວເຫຼືອງ ຢູ່ເມືອງຊຽງເງິນ. ວັດຖຸນຳເຂົ້າ (Inputs) ເປັນແນວພັນ ທີ່ຖືກສະ ໜອງຕົ້ນຕໍ ໂດຍ ບ/ສ ວີເລຄູນ ແລະ ອົງການສຸພານິມິດ ໄດ້ມອບໃຫ້ແກ່ຫົວໜ້າກຸ່ມຜູ້ຜະລິດ. ຈາກນັ້ນ ກໍ່ຖືກແຈກຢາຍໃຫ້ແກ່ຊາວກະສິກອນ ທີ່ຖືກມອບໝາຍ. ຊາວກະສິກອນຈຳນວນນຶ່ງ ມີແນວພັນພື້ນ ເມືອງ ຂອງເຂົາເຈົ້າເອງ. ໃນຊ່ວງສຸດທ້າຍ ຂອງລະດູການປູກຝັງ ພົນຮັບ (Outputs) ຫຼື ພົນເກັບ ກ່ຽວຂອງກົ່ວເຫຼືອງ ຈາກຊາວກະສິກອນ ແມ່ນຖືກເຕົ້າໂຮມ ໂດຍຫົວໜ້າກຸ່ມຜູ້ຜະລິດ. ຫ້ອງການ DAFEO ປະກາດແຈ້ງການ ກ້າຫາກກົ່ວເຫຼືອງ ກຽມພ້ອມແລ້ວ ຈະມາຮັບເອົາ.

ບັນຫານີ້ ແມ່ນຈະຕ້ອງປະສານງານໃນຂັ້ນຕໍ່ໄປກັບ ບ/ສ ວີເລຄູນ ທີ່ຈະຈັດສົ່ງລົດບັນທຸກ ມາແກ່ເອົາພົນ ເກັບກ່ຽວ. ໃນປີ 2004 ພົນເກັບກ່ຽວເຫຼົ່ານີ້ ມີແນວໂນ້ມທີ່ຈະຖືກຂາຍອອກໄປຕະຫຼາດສາກົນ ໃນປະເທດ ໄທ. ແຕ່ເຖິງປານນັ້ນ, ຍ້ອນສາຍເຫດ ບໍລິມາດໜ້ອຍ ບ/ສ ວີເລຄູນ ສາມາດຂາຍອອກໄດ້ ໃນຕະຫຼາດພາຍ ໃນ ທີ່ວຽງຈັນ ແລະ ຫຼວງພະບາງ.

ເຖິງແມ່ນວ່າ ບໍ່ມີການສາລະພາບແບບເປີດເຜີຍ ມັນຄ້າຍກັບວ່າ ມັນເປັນເລື້ອງທຳມະດາ ທີ່ຊາວກະສິກອນ ໄດ້ຂາຍສ່ວນໃດສ່ວນນຶ່ງ ໃຫ້ແກ່ພໍ່ຄ້າ (ທີ່ບໍ່ຂຶ້ນທະບຽນ) ບໍ່ແມ່ນພໍ່ຄ້າທາງການ ຊຶ່ງພວກເຂົາເຈົ້າ ເຂົ້າມາໃນ ບ້ານ ແລະ ຊື້ໂດຍກົງ ຈາກປະຊາຊົນ ເນື້ອແທ້ຂອງການຂາຍດັ່ງກ່າວ ມັນເປັນເລື້ອງຫຍຸ້ງຍາກ ທີ່ຈະກຳນົດ ໄດ້ວ່າ ບໍລິມາດຂອງກົ່ວເຫຼືອງຕາມຕົວຈິງທີ່ໄດ້ຊື້ຂາຍນຳກັນ.

ພາລະບົດບາດ ຂອງພະແນກການຄ້າແຂວງ ທີ່ອອກໃບທະບຽນປະຈຳປີ ແລະ ເກັບພາສີ ແລະ ອາກອນ ໂດຍອີງຕາມພົນກຳໄລ. ອີກດ້ານນຶ່ງ ຫ້ອງການ ການຄ້າເມືອງ ເກັບພາສີ ແລະ ອາກອນ ໂດຍອີງຕາມ ມູນຄ່າ ຂອງກົ່ວເຫຼືອງ ທີ່ເຄື່ອນຍ້າຍອອກຈາກເມືອງ. ມູນຄ່າດັ່ງກ່າວ ແມ່ນອີງຕາມທີ່ໄດ້ລາຍງານ ໃຫ້ການຄ້າເມືອງ ໂດຍບໍລິສັດວີເລຄູນ.

## *8.3 ກົດລະບຽບ ການຕະຫຼາດ*

ກົດລະບຽບ ການຕະຫຼາດ ໃນຮູບຂອງພາສີ ແລະ ລະບົບອານຸຍາດ ໃຊ້ເປັນຂໍ້ຫ້າມທາງກົດໝາຍ ສຳລັບ ການເຂົ້າມາເຮັດທຸລະກິດ ຢູ່ໃນເມືອງຊຽງເງິນ ຂອງພໍ່ຄ້າຜູ້ອື່ນໆ ໂດຍສອດຄ່ອງກັບ ຫ້ອງການ DAFEO. ບັນຫານີ້ ໄດ້ເຮັດຂື້ນສຳລັບ ບ/ສ ຜູ້ເປັນເຈົ້າການລົງທືນ. ບໍ່ມີໃຜຈັກຄົນ ທີ່ຈະຕ້ອງການເຮັດການລົງທືນ ໃດນຶ່ງ ແລະ ຍ້ອນແນວນັ້ນ ມັນອາດບໍ່ມີສິນຄ້າ ທີ່ຈະເວົ້າເຖິງ; ອັນນຶ່ງ, ລະບົບການອອກໃບອານຸຍາດ ຊ່ວຍ ຊີ້ນຳ-ກວດກາ ລາຍຮັບຕ່າງໆ ໃຫ້ແກ່ລັດຖະບານ.

### 8.3.1 ລະບົບການ ອອກໃບອານຸຍາດ (ໃບທະບຽນ)

ໃນກໍລະນີ ຢູ່ເມືອງຊຽງເງິນ, ຫ້ອງການ ການຄ້າ ປະຈຳແຂວງຫຼວງພະບາງ ອອກໃບອະນຸຍາດ ເພື່ອປະຕິ ບັດງານ. ໃບອານຸຍາດໃໝ່ ຈະຕ້ອງໄດ້ຕໍ່ (ຂໍຕໍ່ໃບທະບຽນ) ໃນແຕ່ລະປີ ແລະ ມູນຄ່າ ຂອງທະບຽນ ແມ່ນພົວ ພັນເຖິງຂະໜາດ (ບໍລິມາດ-ມູນຄ່າ). ໃນປີ 2004, ບໍລິສັດວີເລຄູນ ໄດ້ຈ່າຍ 5.000.000 ກີບ ເພື່ອເຮັດໃບ ອະນຸຍາດ. ນອກຈາກນັ້ນ, ຄ່າພາສີ 35% ຂອງກຳໄລສຸດທິ ຈະຕ້ອງໄດ້ຈ່າຍ ໂດຍ ບ/ສ ວີເລຄູນ ໃນໄລຍະ ຊ່ວງທ້າຍ ຂອງການ ຊື້-ຂາຍ.

ບ/ສ ວີເລຄູນ ຍອມຮັບເອົາ ລະບົບການດັ່ງກ່າວ ເພາະວ່າ ໃນທາງກັບ (ກັບຄືນ) ມັນໄດ້ໃຫ້ສິດແກ່ ບ/ສ ເກັບ ຊື້ທັງໝົດ ພົນຜະລິດ ຂອງກົ່ວເຫຼືອງ ໃນເມືອງຊຽງເງິນ ຫຼື ກໍ່ມາຈາກການປູກພາຍໃຕ້ສັນຍາ ກັບຜູ້ປູກ ຫຼື ບໍ່?




ຮູບສະແດງ 2: ໂຄງຮ່າງ ການຕະຫຼາດ ກ່ຽວກັບ ກົ່ວເຫຼືອງ ຢູ່ ເມືອງຊຽງເງີນ

### 8.3.2 ລະບົບການເສຍພາສີ ແລະ ອາກອນ

ນອກຈາກ ການຈ່າຍເສຍຄ່າ ໃບອານຸຍາດ ແລະ ພາສີ ຢູ່ລະດັບ ຂັ້ນແຂວງ, ຂັ້ນເມືອງ ກໍ່ມີການເສຍຄ່າພາສີ ຄືກັນ. ບ/ສ ວິໄລຄູນ ຈະຈ່າຍຄ່າພາສີ 2% ຂອງການຂາຍກົ່ວເຫຼືອງທັງໝົດ ທີ່ທາງ ບ/ສ ໄດ້ເກັບຊື້ຈາກເມືອງ. ໃນກໍລະນີ ກ້າຫາກ ບ/ສ ວິໄລຄູນ ໄດ້ສົ່ງກົ່ວເຫຼືອງອອກ ໄປປະເທດໄທ, ບ/ສ ຈະຕ້ອງຈ່າຍ 15 ກີບ / ກິໂລ ບ່ອນ ຂ້າມຊາຍແດນ.

ຄຽງຄູ່ກັບການເສຍພາສີທາງການ, ກໍ່ຍັງມີທາງເລືອກ ຊຶ່ງແມ່ນສິ່ງກະຕຸ້ນ ແບບບໍ່ເປັນທາງການ ທີ່ ບ/ສ ຈະໄດ້ ຈ່າຍ. ບັນດາຫົວໜ້າກຸ່ມຜູ້ຜະລິດ ຈະໄດ້ຮັບ 50 ກີບ / ກິໂລ ຂອງກົ່ວເຫຼືອງ ທີ່ຜະລິດ ໂດຍກຸ່ມຂອງພວກເຂົາເຈົ້າ ຕາມລໍາດັບ. ທາງເມືອງ ຈະໄດ້ 20 ກີບ / ກິໂລ ຂອງກົ່ວເຫຼືອງທັງໝົດ ທີ່ຊື້ໂດຍບໍລິສັດ. ທັງໝົດ ເຂົ້ານໍາ ກັນ, ພາສີ ແລະ ອາກອນ ລວມເຂົ້າຕື່ມ ຈະປະມານ 200 ກີບ/ກິໂລ. ມານໍາໃຊ້ຕົວເລກ 200 ໂຕນ ຂອງກົ່ວເຫຼືອງ ຊື້-ຂາຍ ໃນ ປີ 2004 ຊຶ່ງແມ່ນຄວາມຕ້ອງການຂອງ ບ/ສ ວິໄລຄູນ, ບັນຫານີ້ ມີຄວາມໝາຍວ່າ 40 ລ້ານ ກີບ ແມ່ນໄດ້ຈ່າຍ ໂດຍ ບໍລິສັດວິໄລຄູນ.

ບັນຫາ ອາດເປັນພາລະໜັກ ໃຫ້ແກ່ ບ/ສ. ບັນຫານີ້ ອາດບອກເຂົ້າເປັນຄ່າ ແລະ ເປັນເຫດຜົນທີ່ພໍ່ຄ້າຄົນອື່ນ ເຄັດຫຼາບ ບໍ່ຂຶ້ນທະບຽນເກັບຊື້ ແລະ ຍັງເປັນພໍ່ຄ້າສວຍໂອກາດລັກລອບເອົາ.

ການຄົ້ນພົບຄວາມດຸ່ນດ່ຽງທີ່ຖືກຕ້ອງ ລະຫວ່າງການສ້າງລາຍໄດ້ຈາກການເກັບພາສີ ທີ່ບໍ່ມີການກ່ວງດຶງກິດຈະການທຸລະກິດຂອງພໍ່ຄ້າ ເປັນວຽກງານທີ່ບໍ່ງ່າຍຢ່າງແນ່ນອນ. ພາສີນໍາເອົາລາຍຮັບມາສູ່ເມືອງ ຊຶ່ງເປັນຄວາມຕ້ອງການຢ່າງສູງ. ອີກດ້ານນຶ່ງ, ຖ້າຫາກວ່າ ອັດຕາການເສຍພາສີ ແລະ ອາກອນ ຫາກສູງກວ່າ ລະດັບອັນແນ່ນອນໃດນຶ່ງ, ມັນຈະບໍ່ມີສິ່ງຈູງໃຈ ໃຫ້ພໍ່ຄ້າຂະຫຍາຍທຸລະກິດ ຫຼືວ່າ ໃຫ້ພໍ່ຄ້າຜູ້ອື່ນເຂົ້າມາມີສ່ວນຮ່ວມ ໃນ ຕະຫຼາດ. ພາສີສູງ ອາດຈະເປັນການກະຕຸກ-ຊຸກຍູ້ ພໍ່ຄ້າ ເຊື່ອງຕົວເລກ ກ່ຽວກັບບໍລິມາດ ທີ່ພວກເຂົາເຈົ້າ ຄ້າ- ຂາຍໃນຕະຫຼາດໄດ້ຄືກັນ. ໃນໄລຍະຍາວນານ, ມັນອາດເປັນປັດໃຈ ທີ່ພາໃຫ້ລາຍຮັບພາສີຂອງເມືອງຫຼຸດລົງ.

## *8.4 ການແຂ່ງຂັນ ການຕະຫຼາດ ແລະ ປະສິດທິພາບ*

ຮູບສະແດງ 3 ສະເໜີພາວະຂອງການພັດທະນາ ສໍາລັບການຕະຫຼາດທາງການກະເສດ ຈາກ monopsony (ຜູກຂາດແຕ່ຜູ້ດຽວ) ໄປສູ່ ໄລຍະການແຂ່ງຂັນຕະຫຼາດແບບສົມບູນ ທີ່ເນັ້ນຜົນປະໂຫຍດຂອງຊາວກະສິກອນ ພາຍໃຕ້ monopsony ບໍ່ມີການຊ່ວງຊີງ.




ຮູບພາບ 3. ໄລຍະຂອງ ການພັດທະນາການຕະຫຼາດ ດ້ານການກະເສດ ຈາກຜູກຂາດຜູ້ດຽວ ກ້າວໄປສູ່ການແຂ່ງຂັນແບບສົມບູນແບບ

ໂດຍທົ່ວໄປ ຜະລິດຕະພາບ ແລະ ປະສິດທິພາບ ຂອງຕະຫຼາດ ແມ່ນຕໍ່າກວ່າທ່າແຮງສູງສຸດຂອງມັນຫຼາຍ. ການ ພັດທະນາຈາກການແຂ່ງຂັນແບບ monosonistic ສູ່ການແຂ່ງຂັນສົມບູນແບບທາງດ້ານອຸດົມການ ພາໃຫ້ເກີດອໍານາດການຊື້-ຂາຍ ແບບແລກປ່ຽນ ແລະ ລາຍຮັບທີ່ເພີ່ມຂຶ້ນໃຫ້ແກ່ຊາວກະສິກອນ. ມັນເລີ່ມຕົ້ນເປີດສິ່ງທີ່ເປັນໄປໄດ້ ໃຫ້ແກ່ພໍ່ຄ້າຜູ້ໃໝ່ ທີ່ຈະເຂົ້າມາຫາຕະຫຼາດ. ສະນັ້ນ, ຜະລິດຕະພາບ ແລະ ປະສິດທິພາບ ຂອງ ຕະຫຼາດຈຶ່ງສູງຂຶ້ນ.

| | | |
|---|---|---|
| ຜູກຂາດຄົນດຽວ<br>Monopsony | ການແຂ່ງຂັນຜູກຂາດ<br>ແບບມີຫຼາຍຄົນ<br>Monopsonistic Competition | ການແຂ່ງຂັນການຕະຫຼາດ<br>ທີ່ສົມບູນແບບ<br>Perfect Market Competition |

| | | |
|---|---|---|
| 1. ພໍ່ຄ້າຜູ້ດຽວ ແລະ ມີຊາວກະສິກອນຫຼາຍຄົນ | 1. ຈໍານວນພໍ່ຄ້າເພີ້ມຂື້ນແລະມີຊາວກະສິກອນຫຼາຍຄົນ | 1. ມີພໍ່ຄ້າ ແລະ ຊາວກະສິກອນຫຼາຍຄົນ |
| 2. ພໍ່ຄ້າ ກໍານົດລາຄາຕໍ່າ | 2. ພໍ່ຄ້າ ມີຄວາມກົດດັນລາຄາຕໍ່າ ໄດ້ແຕ່ໜ້ອຍດຽວ | 2. ພໍ່ຄ້າ ແລະ ຊາວກະສິກອນຫຼາຍຄົນ ມີອິດທິພົນຊັກຈູງຫຼາຍກວ່າ ຕໍ່ກັບລາຄາ |
| 3. ຊາວກະສິກອນ ມີອໍານາດໃນການຕໍ່ລອງ ຊື້-ຂາຍ ຕໍ່າ | 3. ຊາວກະສິກອນ ມີອໍານາດເພີ້ມຂື້ນ ໃນການຊື້ - ຂາຍແລກປ່ຽນ | 3. ຊາວກະສິກອນ ແລະ ພໍ່ຄ້າ ມີອໍານາດໃນການຊື້ຂາຍ ແລກປ່ຽນ ເທົ່າທຽມກັນ |
| 4. ພໍ່ຄ້າໄດ້ກໍາໄລ ສູງໂພດ | 4. ກໍາໄລຂອງພໍ່ຄ້າ ຫຼຸດລົງ | 4. ກໍາໄລສໍາລັບພໍ່ຄ້າ ແມ່ນຫຼຸດລົງ |
| 5. ຊາວກະສິກອນບໍ່ໄດ້ພົນປະໂຫຍດ ຫຼື ບາງເທື່ອ ຫຼຸບທຶນ | 5. ຊາວກະສິກອນມີກໍາໄລເພີ້ມຂື້ນ | 5. ພົນປະໂຫຍດຂອງຊາວກະສິກອນ ເພີ້ມຂື້ນ |
| 6. ຜະລິດຕະພາບ ແລະ ປະສິດຕິພາບ ຂອງຕະຫຼາດ ໂດຍລວມຕໍ່າກວ່າທ່າແຮງສູງສຸດຂອງ ມັນ | 6. ຜະລິດຕະພາບ ແລະ ປະສິດຕິພາບ ຂອງຕະຫຼາດ ໂດຍລວມເພີ້ມຂື້ນ ແຕ່ຍັງຕໍ່າກວ່າທ່າແຮງສູງສຸດຂອງມັນ | 6. ຜະລິດຕະພາບ ແລະ ປະສິດຕິພາບ ຂອງຕະຫຼາດໄດ້ສືບຕໍ່ເພີ້ມຂື້ນ ແລະ ດໍາເນີນໄປດ້ວຍລະດັບທ່າແຮງສູງສຸດຂອງມັນ |

ການຜູກຂາດຜູ້ດຽວ ແມ່ນສະພາບການ ການຕະຫຼາດອັນນຶ່ງ ຢູ່ບ່ອນທີ່ມີຜູ້ເກັບຊື້ພຽງຜູ້ດຽວ ແຕ່ມີຄົນຂາຍ ຫຼາຍ. ໃນກໍລະນີນີ້, ບ/ສ ວີໄລຄູນ ເປັນຜູ້ເກັບຊື້ ໃນຂະນະດຽວກັນນັ້ນ ຊາວກະສິກອນຫຼາຍຄົນ ເປັນຜູ້ຂາຍ. ໃນ ສະພາບການຢູ່ບ່ອນມີພຽງຜູ້ຊື້ ແຕ່ຜູ້ດຽວ, ຊຶ່ງຜູ້ຊື້ ສາມາດບົ່ງການລາຄາ. ຄື ບ/ສ ວີໄລຄູນ ເປັນຜູ້ເກັບຊື້ ແຕ່ ຜູ້ດຽວ, ດ້ວຍວິທີການໃດນຶ່ງ ບ/ສ ບົ່ງການລາຄາ ໂດຍວິທີການລະບຸລາຄາໄວ້ໃນສັນຍາ ຊຶ່ງຊາວກະສິກອນ ໄດ້ ລົງລາຍເຊັນ. ຊາວກະສິກອນ ຈະຕ້ອງຍອມຮັບເອົາ ບໍ່ວ່າອັນໃດກໍ່ຕາມ ພວກເຂົາເຈົ້າຖືກປະຕິບັດຕາມທີ່ໄດ້ ລະບຸໄວ້ໃນສັນຍາ. ຖ້າຫາກປະຕິເສດເອົາໄດ້ ແຕ່ສ່ວນໃດ-ສ່ວນນຶ່ງ ໃນເວລານັ້ນ, ພວກເຂົາເຈົ້າຈະບໍ່ໄດ້ສິນ ເຊື່ອ ຊຶ່ງເປັນສິ່ງນໍາເຂົ້າ (Inputs). ມັນສັບສົນສໍາລັບສິ່ງນັ້ນທັງໝົດ ເອົາໄປວ່າກັນຕອນເວລາເກັບກ່ຽວ. ຊາວກະສິກອນ ທຸກຄົນ ໃນເມືອງຊຽງເງິນ ແມ່ນມີພັນທະທີ່ຈະຕ້ອງຂາຍໃຫ້ແກ່ ບ/ສ ວີໄລຄູນ ແຕ່ຜູ້ດຽວ ໂດຍ ບໍ່ໄດ້ຄໍານຶງວ່າ ມີ ຫຼື ບໍ່ມີ ສັນຍາ ກັບ ບ/ສ. ຊາວກະສິກອນ ຜູ້ທີ່ນໍາໃຊ້ແນວພັນພື້ນເມືອງຂອງຕົນ ຫຼື ໄດ້ແນວພັນ ຈາກອົງການສຸພານິມິດ ແມ່ນຍັງຖືກຮຽກຮ້ອງໃຫ້ຂາຍໃຫ້ແກ່ບໍລິສັດວີໄລຄູນ.

ພະນັກງານເມືອງ ຈໍານວນນຶ່ງຈົ່ມວ່າ ການຄ້າຂາຍບໍ່ແມ່ນຜູກຂາດໃຫ້ແຕ່ບໍລິສັດວີໄລຄູນ, ພໍ່ຄ້າຄົນອື່ນໆ ສາມາດປະກອບການຂໍດໍາເນີນທຸລະກິດ ຄ້າ-ຂາຍ ຢູ່ເມືອງຊຽງເງິນໄດ້. ເຖິງຢ່າງໃດກໍ່ຕາມ, ຖ້າຫາກມີພໍ່ຄ້າ ທີ່ຕ້ອງການຢາກເຂົ້າຮ່ວມໃນຕະຫຼາດ, ພ/ງ ສົ່ງເສີມຂອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແນະນໍາໃຫ້ວ່າ ຕະ

ຫຼາດຄວນຈະແບ່ງປັນພູມກາບພື້ນທີ່ ອອກເປັນ 2 ພື້ນທີ່ ລະຫວ່າງພໍ່ຄ້າທັງສອງ. ຊາວກະສິກອນ ຜູ້ທຳການພະລິດກົ່ວເຫຼືອງ ທຸກຄົນ ໃນເຂດ 1 ຈະຕ້ອງຂາຍໃຫ້ພໍ່ຄາ 1 ແລະ ຊາວກະສິກອນຜູ້ທຳການພະລິດກົ່ວເຫຼືອງ ທຸກຄົນ ໃນເຂດ 2 ຈະຕ້ອງຂາຍ ໃຫ້ພໍ່ຄ້າ 2. ກັ່ງຕິດຕາມຢ່າງໃກ້ຊິດ, ສະພາບດັ່ງກ່າວ ມີຜົນກ້າວໄປສູ່ monopsony. ໃນ ແກ່ນແທ້ຂອງຄວາມເປັນຈິງ, ບັນຫານີ້ ຍັງເປັນສະພາບຢູ່ບ່ອນວ່າ ມີຜູ້ຊື້ຄົນດຽວ ແລະ ຍັງແມ່ນຫຼາຍຄົນຂາຍ ໃນພື້ນທີ່ທີ່ໄດ້ຈັດໃຫ້. ສະພາບການທີ່ເປັນຄວາມຕ້ອງການຢູ່ບ່ອນວ່າ ຊາວກະສິກອນ ສາມາດຂາຍໃຫ້ ພໍ່ຄ້າຄົນ ໃດກໍ່ໄດ້ຜູ້ທີ່ໃຫ້ລາຄາດີໃຫ້ແກ່ເຂົາເຈົ້າ.

ນີ້ແມ່ນຄວາມເຊື່ອໃນໝູ່ ພ/ງ ເມືອງ ຊຶ່ງປ້ອງກັ ພໍ່ຄ້າຜູ້ນຶ່ງ ຜູ້ດຽວ ແມ່ນວິທີການທີ່ຈະບັນລຸລັດ ແຫ່ງປະສິດຕິຜົນ ສູງ ແລະ ສະຫວັດດີການ ສຳລັບຜູ້ມີບົດບາດການຕະຫຼາດ. ໃນທາງກົງກັນຂ້າມ ການແຂ່ງຂັ້ນຈະເປັນປັດໃຈ ແຫ່ງການກະຕຸກຊຸກຍູ້. ການແຂ່ງຂັນ ແມ່ນຫຼາຍປັດໃຈທີ່ຈະມີຜົນບັງຄັບເຮັດໃຫ້ ບ/ສ ທີ່ມີປະສິດຕິພາບ ແລະ ມີ ຄວາມເຂັ້ມແຂງໃນໄລຍະຍາວ. ໃນລະບົບການຕະຫຼາດນຶ່ງ ຊຶ່ງມີລະບຽບການທີ່ເຂັ້ມງວດ, ຜົນກຳໄລໄດ້ຕິດພັນ ກັບການແຂ່ງຂັນທີ່ບໍ່ອາດຈະເປັນແບບກົນຈັກ. ເຖິງແມ່ນວ່າ, ການຕະຫຼາດຈະຕາຍຕົວ ໃນສະພາວະ monopsony ດ້ວຍເນື່ອງຈາກທາງດ້ານສະກາບະພາບ ທີ່ເປັນຜົນລົບໃຫ້ແກ່ຊາວກະສິກອນ ແລະ ຂອງເສດ ກະກິດ ເວົ້າລວມ.

## *8.5 ບໍລິມາດການພະລິດ ແລະ ການຄ້າຂາຍ ແບບບໍ່ເປັນທາງການ*

ອີງຕາມກົດລະບຽບທີ່ມີຢູ່ໃນປະຈຸບັນ ໃນເມືອງຊຽງເງິນ. ມີ 2 ຂໍ້ຄົງຄ້າງ ເພື່ອເຄື່ອນໄຫວການຕະຫຼາດ ຊຶ່ງຈຳແນກອອກໄດ້ ຄື:

1. ບໍລິມາດຂອງກົ່ວເຫຼືອງ ຊຶ່ງຊາວກະສິກອນໄດ້ຂາຍໃຫ້ແກ່ ບ/ສ ວິໄລຄູນ ໃນປີ 2004 ແມ່ນຍັງຫ່າງໄກມັນເປັນຕົວເລກຕ່ຳ ອັນທີ່ພາໃຫ້ ບ/ສ ໃຫ້ລາຄາຕ່ຳ ເມື່ອຄິດໄລ່ເປັນ ຫົວໜ່ວຍ ແລະ ກ້າວໄປເຖິງເສດກະກິດ ຂອງສັດສ່ວນ (ຂະໜາດ).

2. ການປູກພາຍໃຕ້ສັນຍາ ຊາວກະສິກອນໄດ້ຝ່າຝືນສັນຍາທີ່ມີໄວ້ກັບ ບ/ສ ວິໄລຄູນ ແລະ ໄດ້ຂາຍຜົນພະລິດ ຂອງພວກເຂົາເຈົ້າຢ່າງຜິດກົດໝາຍ ຂ້ອນຂ້າງຫຼວງຫຼາຍ ໃຫ້ແກ່ພໍ່ຄ້າຄົນອື່ນໆ ແບບບໍ່ເປັນທາງການ.

ສະພາວະການແບບ monopsony, ຄືມີການບັງຄັບກັນດ້ວຍສັນຍາເຮັດໃຫ້ ບ/ສ ຕັ້ງລາຄາລະດັບຕ່ຳ ແລະ ເອົາກຳໄລໃນໄລຍະສັ້ນສູງສຸດ. ຜົນເນື່ອງໃນທາງລົບ ຂອງບັນຫາດັ່ງກ່າວ ແມ່ນວ່າ: ບ/ສ ວິໄລຄູນ ບໍ່ສາມາດເກັບໄດ້ບໍລິມາດຕາມທີ່ຄາດໝາຍໄວ້ ຊຶ່ງຈະພາໃຫ້ບັນລຸຕາມຂະໜາດ ຫຼື ສັດສ່ວນທາງດ້ານເສດກະກິດ. ກ່ອນອື່ນໝົດ ບັນຫາລາຄາຕ່ຳນີ້ ມີຜົນພາໃຫ້ເກີດການຄ້າ-ຂາຍ ທີ່ຜິດກົດໝາຍ. ມັນບໍ່ແມ່ນການຊຸກຍູ້ຊາວກະສິກອນ ບໍ່ໃຫ້ໄປ ຂາຍໃຫ້ ບ/ສ ວິໄລຄູນ ໃນຂະນະດຽວກັນນັ້ນ ມັນແມ່ນການກະຕຸກຊຸກຍູ້ພວກເຂົາເຈົ້າໃຫ້ໄປຂາຍໃຫ້ພໍ່ຄ້າໃນຕະ ຫຼາດທີ່ບໍ່ເປັນທາງການ. ທ່າມກາງບັນຫາດັ່ງກ່າວ ພິຈາລະນາໄດ້ວ່າ ແມ່ນການຝ່າຝືນສັນຍາ ແລະ ແມ່ນການກະທຳທີ່ຕ້ານກັບກົດໝາຍ. ຊາວກະສິກອນຕົວຈິງແລ້ວ ແມ່ນສະແດງເຖິງຄວາມເຊື່ອໝັ້ນໃນແງ່ເສດກະກິດແບບມີເຫດ-ມີຜົນ. ຄວາມມີເຫດຜົນໃດນຶ່ງຂອງມະນຸດ ອາດຕ້ອງການຜົນຮັບກັບຄືນສູງສຸດ ຈາກສິ່ງນຳເຂົ້າ (Inputs) ຂອງຕົນ. ບັນຫານີ້ ດັ່ງທີ່ເອີ້ນວ່າ ການຄ້າ-ຂາຍ ທີ່ຜິດກົດໝາຍ ອາດຈະເຂົ້າໃຈໄດ້ ເປີເຊັນແມ່ນການຕໍ່ສູ້-ດີ້ນລົນຂອງຊາວກະສິກອນ ທີ່ຢາກໄດ້ລາຍຮັບໃຫ້ພຽງພໍຈາກຜົນພະລິດຂອງເຂົາເຈົ້າ.

ບັນຫາທີ 2. ລາຄາຕ່ຳ ເຮັດໃຫ້ໝົດກຳລັງໃຈ, ໃນການປູກກົ່ວເຫຼືອງໃນຕໍ່ໜ້າຂອງໝູ່ຊາວກະສິກອນ, ພວກເຂົາເຈົ້າອາດຈະກ້າວໄປສູ່ກິດຈະກຳການສ້າງຮັບແບບມີຜົນກຳໄລກວ່ານີ້ດີກວ່າ. ໃນພາກປະຕິບັດ ໃນໄລຍະຍາວ, ບ/ສ ວິໄລຄູນ ອາດຈະບໍ່ໄດ້ພົບສິ່ງທີ່ມີຜົນກຳໄລອີກຕື່ມໄດ້ ທີ່ຈະສືບຕໍ່ທຸລະກິດນີ້. ບໍລິມາດໜ້ອຍຂອງກົ່ວເຫຼືອງ ທີ່ໄດ້ເກັບຊື້ ໂດຍ ບ/ສ ວິໄລຄູນ ອາດຈະໜ້ອຍສຳລັບ ບ/ສ ແລະ ບໍ່ກຸ້ມກັບທຶນຄົງທີ່ ແລະ ບໍ່ສາມາດບັນລຸປະສິຕິ ຜົນຂອງການພະລິດ.

ບັນຫາດັ່ງກ່າວ ຈາກນີ້ໄປກາຍເປັນສະພາບ ທີ່ເສຍກັບເສຍ: ຊາວກະສິກອນເສຍຄວາມ ໄວ້ວາງໃຈກັບຜູ້ເກັບຊື້ ແລະ ລັດຖະບານ ກໍ່ເສຍແຫຼ່ງລາຍຮັບ.

ອີກດ້ານນຶ່ງ ຖ້າຫາກມີການແຂ່ງຂັນ ທີ່ອະນຸຍາດໃຫ້ເພີ້ມຈໍານວນໃນໝູ່ພໍ່ຄ້າ ບ/ສ ວີເລຄູນ ອາດຈະຖືກບັງຄັບ ໃຫ້ລາຄາສູງສໍາລັບພົນຜະລິດແກ່ພວກເຂົາເຈົ້າ. ພົບກະທົບໃນທາງບວກ ຖືກຄາດການໄວ້.

ກ່ອນອື່ນໝົດ, ລາຄາສູງອາດຈະເຮັດໃຫ້ເກີດສິ່ງກະຕຸ້ນ ໃຫ້ແກ່ຊາວກະສິກອນໃນການຂະຫຍາຍການຜະລິດ ກົ່ວເຫຼືອງ. ຊາວກະສິກອນຜູ້ອື່ນໆ ອາດຈະຖືກກະຕຸກຊຸກຍູ້ ໃຫ້ເລີ້ມປູກກົ່ວເຫຼືອງ. ບັນຫາດັ່ງກ່າວ ອາດເພີ້ມ ບໍລິມາດທັງໝົດຂອງການຜະລິດທັງໝົດ ໄດ້ເກືອງທີ່ສຸດ. ດັ່ງນັ້ນ, ບ/ສ ວີເລຄູນ ຄວນຈະແບ່ງພົນຜະລິດທັງໝົດ ກັບການແຂ່ງຂັນພໍ່ຄ້າມັນເປັນແນວທີ່ວ່າ ພວກເຂົາເຈົ້າອາດຈະສະໜອງດ້ວຍບໍລິມາດທີ່ໃຫຍ່ໂຕ ໃຫ້ໄດ້ຫຼາຍ ກວ່າດັ່ງທີ່ເຮົາໄດ້ພົບໃນກໍລະນີເຊັ່ນນີ້.

ອັນທີສອງ ການຄ້າຂາຍຜິດກົດໝາຍ ຂອງຊາວກະສິກອນ ອາດຈະຫຼຸດຜ່ອນຂ້ອນຂ້າງຫຼາຍ ຖ້າຫາກມີ ຫຼື ບໍ່ມີຄວາມແຕກຕ່າງ ລະຫວ່າງ ລາຄາເກັບຊື້, ສິ່ງທີ່ກະຕຸ້ນຕ່າງໆ ສໍາລັບຊາວກະສິກອນ ຈະເອົາສ່ວນໃດ-ສ່ວນນຶ່ງຂາຍແບບຜິດກົດໝາຍນັ້ນ ຈະລົດນ້ອຍຖອຍລົງ. ສິ່ງທີ່ໄດ້ ເລັກໆນ້ອຍໆ ຈາກການກະທໍາຢ່າງຜິດກົດໝາຍຂອງພວກເຂົາເຈົ້າ ຈະຕ້ອງຖືກປະຕິເສດ ໂດຍຄວາມສ່ຽງຂອງການຈັບໄດ້ (ຈັບໄດ້ ໄລ່ທັນ) ແລະ ຈະຕ້ອງຖືກຈ່າຍກັບການປັບໃໝຕ່າງໆ. ດັ່ງນັ້ນ, ການຂ້າມຜ່ານການຕະຫຼາດແບບ monsopny ປັດຈຸບັນໄປສູ່ການເພີ້ມທະວີການແຂ່ງຂັນແບບມີການກໍານົດພາຍໃນໝູ່ພໍ່ຄ້າ ຄາດຫວັງວ່າຈະເຮັດໃຫ້ການຄ້າຂາຍແບບຜິດກົດໝາຍນີ້ ຫຼຸດລົງ. ເພີ້ມພົນປະໂຫຍດ ໃຫ້ແກ່ຊາວກະສິກອນ ແລະ ເກີດເປັນຊ່ອງທາງເຮັດໃຫ້ມີການຜະລິດຫຼາຍຂື້ນ ກ້າວໄປສູ່ການເປັນພໍ່ຄ້າ ທີ່ຖືກຕ້ອງຕາມກົດໝາຍຫຼາຍຂື້ນ. ຊ່ວຍເຮັດໃຫ້ພວກເຂົາເຈົ້າສາມາດບັນລຸຂະນາດ ຫຼື ສັດສ່ວນເສດຖະກິດ (ວິທີການທາງດ້ານເສດຖະກິດ) ແບບມີການແບ່ງເປັນສ່ວນໆ.

## *8.6 ໂຄງຮ່າງດ້ານການປະຊາສໍາພັນ*

### 8.6.1 ການສະໜອງ ຄວາມຮູ້ກ່ຽວກັບເຕັກໂນໂລຍີ

ການຕອບສະໜອງ ດ້ານຂໍ້ມູນ ຂ່າວສານ ກ່ຽວກັບພາກປະຕິບັດທີ່ດີສຸດໃນການປູກພືດໃໝ່ ແລະ ເປັນພືດທີ່ ອ່ອນໄຫວເຊັ່ນ: ປູກກົ່ວເຫຼືອງຢູ່ເມືອງຊຽງເງິນ ແມ່ນບັນຫາທີ່ຊີ້ຂາດ ແລະ ຮັບປະກັນໃຫ້ມີພົນເກັບກ່ຽວດີ. ປາສະຈາກພົນເກັບກ່ຽວທີ່ດີ ກໍ່ຈະບໍ່ມີຫຍັງໃຫ້ ຄ້າ-ຂາຍ ກັນ. ຈະໃຫ້ຂໍ້ມູນ ທີ່ມີປະສິດຕິພາບ ຄືແນວໃດ ແລະ ກືກ ກັບເວລາ ຊຶ່ງເປັນເລື້ອງທີ່ທ້າທາຍ.

ຮູບພາບທີ 4 ໄດ້ນໍາສະເໜີ ເທັກໂນໂລຍີ ດ້ານຂໍ້ມູນ ຂ່າວສານ ສະໜອງໃຫ້ແກ່ຊາວກະສິກອນ ເມືອງຊຽງເງິນໄດ້ແນວໃດ? ບ/ສ ວີເລຄູນ ໄດ້ຈ້າງສາດສະດາຈານຊາວໄທ ຜູ້ທີ່ໄດ້ໃຫ້ການອົບຮົມໃຫ້ແກ່ ພ/ງ DAFEO ເປັນຜູ້ກ່າຍທອດໃຫ້ແກ່ຊາວກະສິກອນຕໍ່ໄປ. ການອົບຮົມ ກ່າຍທອດຄວາມຮູ້ ໄດ້ໃຊ້ເວລາເຄິ່ງມື້ ສໍາລັບບ້ານນຶ່ງ. ໃນ ບາງບ້ານການອົບຮົມຕອນທັງໆນີ້ ໃຊ້ເວລາພຽງແຕ່ 2 ຊົ່ວໂມງ. ການອົບຮົມສ່ວນຫຼາຍ ແມ່ນເຮັດແບບໂອ້ລົມ ປຶກສາຫາລືດີກວ່າໃຫ້ການອົບຮົມແບບທົ່ວໄປ. ບັນຫາຕ່າງໆ ທີ່ພົວພັນໃນການປູກກົ່ວເຫຼືອງ ການຮັບມື ຈັດ ການແກ້ໄຂບັນຫາ. ແຜ່ນພັບການແນະນໍາພາກປະຕິບັດຕົວຈິງ ກ່ຽວກັບການປູກກົ່ວເຫຼືອງ ໄດ້ສະ ໜອງໃຫ້ ໂດຍ: ທ່ານ ສາດສະດາຈານຊາວໄທ ໃນຊ່ວງການອົບຮົມ.

ອີກດ້ານນຶ່ງ, ອີງການສຸພາບີມິດ ໄດ້ວ່າຈ້າງຊາວກະສິກອນຕົວແບບ ຜູ້ທີ່ເຄີຍໄດ້ຮັບພົນສໍາເລັດໃນການປູກກົ່ວ ເຫຼືອງຈາກແຂວງໄຊຍະບູລີ ແລະ ພະນັກງານ ວິຊາການ ຄົນໄທ 1 ທ່ານ, ຜູ້ທີ່ໄດ້ໃຫ້ການອົບຮົມໃຫ້ແກ່ຫົວໜ້າ ຫ້ອງການສົ່ງເສີມກະສິກໍາ-ປ່າໄມ້, ຫົວໜ້າກຸ່ມຜູ້ຜະລິດກົ່ວເຫຼືອງ ຜູ້ທີ່ຈະກ່າຍທອດການອົບຮົມ ໃນຂັ້ນຕໍ່ໄປ ໃຫ້ແກ່ຊາວກະສິກອນ. ມັນຄວນຈະບັນທຶກໄວ້ວ່າ ມີຊາວກະສິກອນຈໍານວນນຶ່ງ ມີປະສົບການມາໂດຍກໍາເນີດ ກ່ຽວກັບການປູກກົ່ວເຫຼືອງ.

ເຖິງຢ່າງໃດກໍ່ຕາມ, ການປູກຂອງເຂົາເຈົ້າ ໄດ້ເຮັດໃນໄລຍະຜ່ານມາ ແມ່ນເຮັດ ຂະໜາດຈຳກັດ ໂດຍມີແນວໂນ້ມສຳລັບການບໍລິໂພກພາຍໃນຄອບຄົວ.

ໂດຍແລເຫັນສິ່ງໃດຈະເກີດຂື້ນກໍ່ຕາມ, ຊາວກະສິກອນ ສາມາດຮຽນໄດ້ຢ່າງມີປະສິດທິພາບ ຈາກການອົບຮົມ ຫຼື ອັນໃດກໍ່ຊ່າງ ພວກເຂົາສາມາດປະກອບການຈາກສິ່ງທີ່ພວກເຂົາເຈົ້າໄດ້ຮຽນມາ ທີ່ອາດສາມາດວັດແທກ ຄວາມຮູ້ເລີກ ຕື້ນ ໄດ້. ເຖິງຢ່າງໃດກໍ່ຕາມ, ການວິນິດໄສ ຈາກການລາຍງານກ່ຽວກັບເຫດຜົນທີ່ເປັນໄປໄດ້ ຂອງການປູກພືດທີ່ລົ້ມເຫຼວ. ບັນຫານີ້ງ ການເລີ້ມຕົ້ນຈະຕ້ອງຄິດກ່ຽວກັບປະສິດທິພາບ ຂອງການອົບຮົມທີ່ສະ ໜອງມາໃຫ້ນັ້ນ, ໄດ້ມີການດຳເນີນແນວໃດ? ຮູບການຄືແນວໃດແທ້? ເປັນຂໍ້ມູນເອົາໃຫ້.

ອີງຕາມການສຳພາດ, ຊາວກະສິກອນບໍ່ປະຕິບັດຕາມຄຳແນະນຳ ເພາະວ່າພວກເຂົາເຈົ້າຮູ້ວ່າ ມັນເປັນ ຄື ແນວໃດ? ແຕ່ອີງຕາມຊາວກະສິກອນ ມີການອົບຮົມທີ່ໄດ້ສະໜອງໃຫ້. ຮຽນເອົາບົດຮຽນຈາກປະສົບການ ດັ່ງ ກ່າວ ຊາວກະສິກອນ ຄວນຈະໄດ້ຜົນປະໂຫຍດຫຼາຍກວ່ານີ້ ຖ້າເຂົາເຈົ້າເຂົ້າຮ່ວມການອົບຮົມ ທີ່ໄດ້ດຳເນີນ ເປັນຊຸດຕໍ່ເນື່ອງກັນ ຕັ້ງແຕ່ຕົ້ນຈົນຈົບລະດູການ ແລະ ລົງນຳພາປະຕິບັດຕົວຈິງຢູ່ພາກສະໜາມ ແລະ ໄດ້ໃຫ້ ການພິສູດ. ການອົບຮົມຄັ້ງດຽວ ດັ່ງທີ່ໄດ້ເຮັດຢູ່ທີ່ເມືອງຊຽງເງິນ ເຫັນວ່າຍັງບໍ່ທັນພຽງພໍເທື່ອ.




**ຮູບສະແດງ 4 ກະແສ ການໄຫຼວຽນ ຂອງເຕັກໂນໂລຍີ ດ້ານຂໍ້ມູນຂ່າວສານ ໄປສູ່ຊາວກະສິກອນ**

### 8.6.1.1 ເຕັກໂນໂລຍີ ດ້ານການປູກຝັງ

ຊະນິດຂອງຂໍ້ມູນຂ່າວສານ ທີ່ໄດ້ໃຫ້ແກ່ຊາວກະສິກອນ ຈຳເປັນຕ້ອງໄດ້ທົບທວນຄືນ. ຕົວຢ່າງ ສັນຍາຂອງບໍລິ ສັດວິໄລຄູນ ທີ່ແນະນຳໃສ່ແນວປູກ ຕາມອັດຕາ 60 ກິໂລ/ຮຕ; ດ້ວຍເຫດທີ່ບ່ອນອື່ນ ໃສ່ໃນອັດຕາ 20-25 ກິ ໂລ/ຮຕ. ການໃຫ້ອັດຕາແນວພັນສູງ ເປັນເຫດພາໃຫ້ເກີດຕົ້ນກົ່ວເຫຼືອງບຽດກັນຫຼາຍ, ເກີດ ຫົ່ມໂພດ, ເກີດການ ຊ່ວງຊີງທາດອາຫານ ແລະ ໃນທີ່ສຸດ ເຮັດໃຫ້ຜົນຜະລິດຫຼຸດລົງ. ຈາກທັດສະນະທາງດ້ານເສດຖະກິດ ການໃຫ້ອັດ

ຕາແນວພັນສູງ ແມ່ນອນເປັນເຫດພາໃຫ້ເກີດມີສິ່ງນຳເຂົ້າ Inputs ສູງ. ໃນກໍລະນີເຊັ່ນນີ້, ໝາຍວ່າ ຊາວກະສິ ກອນ ໄດ້ຮັບການກູ້ຢືມເກີນກວ່າຄວາມຕ້ອງການ.

ຂໍ້ມູນ ຂ່າວສານ ໃນການປູກກົ່ວເຫຼືອງ ຈຳເປັນຕ້ອງຈັດແບ່ງຕື່ມອີກ ໂດຍມີເປົ້າໝາຍໃຫ້ສອດຄ່ອງກັບລະບົບ ການປູກຝັງ. ການປູກຢູ່ໄຮ່ (ບ່ອນເນີນສູງ) ແຕ່ຕອນເລີ່ມລະດູຝົນ ແມ່ນຮຽກຮ້ອງເຖິງພາກປະຕິບັດງານແບບ ເປັນຊຸດ ຈາກບ່ອນທີ່ໄດ້ຖືກປູກມາແລ້ວໃນນາເຂົ້າ ພາຍຫຼັງທີ່ເກັບກູ້ເຂົ້າອອກແລ້ວ ກໍ່ຄືການເລີ່ມຕົ້ນຂອງລະ ດູແລ້ງ. ມັນອາດຈະເປັນເລື່ອງທີ່ດີ ທີ່ຈະໃຫ້ຄຳແນະນຳ ສະເພາະເຈາະຈົງແກ່ຊາວກະສິກອນ.
ບ່ອນປູກທີ່ແຕກຕ່າງກັນ ຄວນແຍກປະເພດດິນ ແລະ ຄວາມອຸດົມສົມບູນຂອງດິນ. ມັນເປັນເລື່ອງທີ່ສຳຄັນ ຊຶ່ງ ຊາວກະສິກອນໄດ້ຖືກນຳພາໃຫ້ເລືອກເອົາດິນ ບ່ອນທີ່ກົ່ວເຫຼືອງຈະຖືກປູກໃສ່. ມັນປຽບສະເໝືອນເປັນພືດຕະກຸນ ກົ່ວ ດ້ວຍຄວາມສາມາດທີ່ດຶງດູດເອົາທາດໄນໂຕເຈນ N ດ້ວຍຕົວເອງ, ກົ່ວເຫຼືອງບໍ່ຈຳເປັນສ່ວນເພີ່ມ ເຖິງ ແມ່ນວ່າມັນຖືກປູກຢູ່ບ່ອນດິນທີ່ຈືດຈາງ. ເຖິງຢ່າງໃດກໍ່ຕາມ, ກົ່ວເຫຼືອງຍັງຕ້ອງການທາດຟົດຟໍລັດ P ແລະ ໂປ ຕາຊຽມ K ຢ່າງພຽງພໍ. ພວກມັນມີຄວາມຕ້ອງການ P, K. ປູນຂາວ ອາດຈະຕ້ອງໃສ່ກ້ຳຫາກເປັນກົດຫຼາຍ. ການຕັດສິນໃຈ ທີ່ຈະເພີ່ມທາດມູນຄືນີໃດນຶ່ງໃສ່ດິນ ຕ້ອງອີງຕາມສິ່ງທີ່ໝັ້ນໃຈ ແລະ ພົນຂອງການວິເຈດິນ ທັງວິ ນີເສ ແທ້ໆ.

ແນວພັນກົ່ວເຫຼືອງແຕກຕ່າງກັນ ຈະຮຽກຮ້ອງເຕັກນິກໃນການປູກທີ່ແຕກຕ່າງກັນ. ການຈັດສັນຄຸ້ມຄອງນ້ຳໃຕ້ ດິນ, ການໃສ່ຝຸ່ນ ແລະ ໄລຍະເວລາຂອງການເກັບກູ້. ຊາວກະສິກອນ ຈະຕ້ອງໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ຄວາມແຕກຕ່າງຂອງແນວພັນນັ້ນໆ, ຊຶ່ງຈະເຮັດໃຫ້ເຂົາເຈົ້າຮັບຮູ້ວ່າ ຈະເຮັດຄືແນວໃດໃນການແກ້ໄຂຕ່າງໆ.

### 8.6.1.2 ການປ້ອງກັນ ແລະ ຈຳກັດສັດຕູພືດ

ໃນລະດູການປູກຝັງທີ່ມີພົນສຳເລັດ ເມື່ອເວລາມີການປູກກົ່ວເຫຼືອງ ຈະມີສ່ວນຮ່ວມຂອງຊາວກສິກອນຈຳ ນວນຫຼາຍ ໃນເນື້ອທີ່ກວ້າງຂວາງ ຄວນເອົາໃຈໃສ່ ກົນໄກ-ເຄື່ອນທີ່ ເພື່ອປ້ອງກັນ. ກົ່ວເຫຼືອງຖືກທຳລາຍ ດ້ວຍ ສັດຕູພືດ ແລະ ພະຍາດພືດ ເກີດຂື້ນນັບຕັ້ງແຕ່ ໄລຍະສັກກ້າ, ກ່ອນການອອກດອກ, ການປະກອບການເປັນຝັກ, ການພັດທະນາການຂອງແກ່ນຢູ່ໃນຝັກ. ຊາວກະສິກອນ ແລະ ພະນັກງານ DAFEO ຈຳເປັນຕ້ອງຮັບຮູ້ລ່ວງໜ້າ ກ່ອນວ່າ: ອັນໃດແມ່ນສັດຕູພືດ ແລະ ອັນໃດແມ່ນພະຍາດພືດຂອງກົ່ວເຫຼືອງ ແລະ ມາດຕະການອັນໃດ ປ້ອງກັນ ໄດ້ດີ. ການຄວບຄຸມ ແລະ ກຳຈັດສັດຕູພືດແບບປະສົມປະສານ (IPM): ທາງເລືອກ ຈະເລືອກເອົາສິ່ງທີ່ຖືກຕ້ອງ ເພື່ອປ້ອງກັນດ້ວຍການນຳໃຊ້ຢາປາບສັດຕູພືດແບບບໍ່ມີການຈຳແນກ (ທົ່ວໄປແບບບໍ່ເຈາະຈົງ) ສານເຄມີ ທີ່ ເປັນຄວາມສ່ຽງແບບອັນຕະລາຍ.

### 8.6.1.3 ເຕັກໂນໂລຊີ ຫຼັງການເກັບກ່ຽວ

ນອກເໜືອຈາກການສະໜອງຂໍ້ມູນຂ່າວສານ ກ່ຽວກັບພາກປະຕິບັດຕົວຈິງດ້ານການປູກພືດ, ມັນເປັນເລື້ອງ ສຳຄັນໃຫ້ແກ່ຊາວກະສິກອນ ທີ່ຈະຕ້ອງຮຽນເອົາສິ່ງທີ່ຖືກຕ້ອງ ພາຍຫຼັງການເກັບກ່ຽວ ແລະ ເຕັກໂນໂລຊີ ດ້ານການເກັບມ້ຽນຂື້ນເລົ້າ. ການຖືກທຳລາຍ ໂດຍສັດຕູພືດ ຫຼື ຖືກຊຶມເຊື້ອ ໂດຍເຊື້ອລາ ຊື່ Asperguillus ທີ່ພະລິດສານເບື່ອຈາກເຊື້ອລາເກີດເປັນວົງມະເຮັງ ທີ່ເປັນເຫດໃຫ້ເກີດເປັນທາດເບື່ອ ອາດຈະຫຼຸດໜ້ອຍ ກອຍລົງ ຫາກມີການເກັບກູ້ ທີ່ຖືກແບບ, ຖືກເວລາ ແລະ ຕາກແດດພົນພະລິດໃຫ້ທັນ ພາຍຫຼັງທີ່ເກັບກູ້.

### 8.6.2 ການສະໜອງຂໍ້ມູນຂ່າວສານການຕະຫຼາດ

ຂໍ້ມູນຂ່າວສານການຕະຫຼາດ ລວມມີລາຄາຕ່າງໆ, ມາດຕະການດ້ານຄຸນນະພາບ, ບໍລິມາດທີ່ຕ້ອງການ ແລະ ການຕະຫຼາດ. ມັນແມ່ນການກຳໜົດພົນພະລິດ ເຊັ່ນດຽວກັນ: ຜູ້ຂາຍ, ຜູ້ຊື້ ແລະ ການວາງແຜນທີ່ ທີ່ຕັ້ງຊ່ອງ ຂອງການຕະຫຼາດ ເຊັ່ນ: ຜູ້ພະລິດຕົ້ນຕໍ ຊາວກະສິກອນຄວນໄດ້ຮັບຂ່າວສານ ທີ່ຊັດເຈນກ່ຽວກັບຂໍ້ມູນການ ຕະຫຼາດ. ມັນແມ່ນເລື້ອງທີ່ສຳຄັນສຳລັບຊາວກະສິກອນຕ້ອງຮັບຮູ້ເຂົ້າໃຈວ່າ ວິທີການພະລິດ ແລະ ການເກັບ ກ່ຽວ ຂອງເຂົາເຈົ້າມີພົນກະທົບໂດຍກົງຕໍ່ຄຸນນະພາບພົນພະລິດ. ສະນັ້ນ, ລາຄາພົນພະລິດ ແລະ ລາຍໄດ້ຂອງ ເຂົາເຈົ້າຈະມີພົນກະທົບ ໂດຍຂື້ນກັບຄຸນນະພາບຂອງພົນພະລິດດັ່ງກ່າວ.

ຍົກຕົວຢ່າງ, ມາດຖານຕະຫຼາດສາກົນ ຮັບຮອງຄວາມຊຸ່ມ 12% ແລະ ລະດັບຂອງເຊື້ອ Aflatoxin ບໍ່ກາຍ 20 ppb (ອະນຸພາກ ຕໍ່ ພັນລ້ານ) (ARPRODUC 2005). ເຊື້ອ Afflatoxin ແມ່ນສານເຄມີຊະນິດນຶ່ງ ທີ່ພາໃຫ້ ເກີດໂຣກມະເຮັງ ທີ່ເກີດຈາກເຊື້ອລາ Aspergillus flavus ຊຶ່ງຂະຫຍາຍຕົວຢ່າງໄວວາໃນເມັດ ທີ່ມີຄວາມຊຸ່ມ ສູງ ປະມານ 13-32%. ການຕາກເມັດໃຫ້ແຫ້ງ ທີ່ມີຄວາມຊຸ່ມ 12% ແມ່ນລົດຜ່ອນການເກີດເຊື້ອ Aflatoxin ນີ້ໄດ້.

ທາງ ບ/ສ ເກັບຊື້ກົ່ວເຫຼືອງ ທີ່ມີຄວາມຊຸ່ມສູງໃນລາຄາຖືກ ເພາະວ່າ ບ/ສ ຈະຕ້ອງຈ່າຍຄ່າອົບແຫ້ງເພື່ອເຮັດໃຫ້ຜະລິດຕະພັນເປັນທີ່ຍອມຮັບຂອງຕະຫຼາດສາກົນ. ນີ້ແມ່ນສາຍເຫດນຶ່ງ ທີ່ເຮັດໃຫ້ຄວາມຊຸ່ມຂອງເມັດກະທົບ ລາຄາ. ຍ້ອນແນວນັ້ນ, ບ/ສ ວິໄລກຸນ ຈຶ່ງເກັບຊື້ກົ່ວເຫຼືອງທີ່ມີຄວາມຊຸ່ມ 18-19% ໃນລາຄາ 2.000 ກີບ/ກິໂລ, ສ່ວນຄວາມຊຸ່ມມາດຕະຖານ 12% ແມ່ນເກັບຊື້ໃນລາຄາ 2.500 ກີບ/ກິໂລ (ລາຄາ ປີ 2005).

ໃນກໍລະນີ ຂອງຊາວກະສິກອນບາງຄົນ ຢູ່ເມືອງຊຽງເງິນ ທີ່ບໍ່ຂາຍກົ່ວເຫຼືອງເທື່ອ ແມ່ນລໍຖ້າຂາຍເມື່ອກົ່ວເຫຼືອງມີລາຄາດີຂຶ້ນ. ໃນຂະນະດຽວກັນ ເຂົາເຈົ້າສັງເກດເຫັນວ່າ ກົ່ວເຫຼືອງທີ່ເກັບກ່ຽວມານັ້ນກໍາລັງກືກແມງໄມ້ທໍາ ລາຍ ແຕ່ບໍ່ຮູ້ຈັກຈະແກ້ໄຂແນວໃດ. ຊາວກະສິກອນຜູ້ນຶ່ງເວົ້າວ່າ ລາວໄດ້ໃຊ້ຝຸ່ນ ໄຮໂຊບຽມ ທີ່ຍັງເຫຼືອ ໃສ່ກົ່ວເຫຼືອງທີ່ເກັບຮັກສາໄວ້ ຍ້ອນເຊື່ອວ່າ ຝຸ່ນໄຮໂຊບຽມ ດັ່ງກ່າວ ເປັນຢາປາບສັດຕູພືດ ຫຼື ເປັນຢາຂັບໄລ່ແມງໄມ້. ການສະໜອງຄວາມຮູ້ໃຫ້ແກ່ຊາວກະສິກອນກ່ຽວກັບເຕັກນິກການເກັບຮັກສາທີ່ຖືກຕ້ອງ ສາມາດເຮັດໃຫ້ເຂົາເຈົ້າຮັກສາຜົນຜະລິດໄວ້ໄດ້ຢ່າງປອດໄພ.

ຊາວກະສິກອນ ຈໍາເປັນຕ້ອງຮູ້ຈັກລາຄາຕົວຈິງຂອງຜົນຜະລິດ, ພໍ່ຄ້າ, ຊ່ອງທາງການຕະຫຼາດ ແລະ ຂໍ້ມູນ ຂ່າວສານອື່ນໆ ເຊັ່ນດຽວກັນ, ຊຶ່ງອີງຕາມຂໍ້ມູນດັ່ງກ່າວ ຊາວກະສິກອນສາມາດຕັດສິນໃຈວ່າ ເຂົາເຈົ້າຈະຂາຍເວ ລາໃດ ຫຼື ຂາຍຢູ່ໃສ ຫຼື ຈະປູກພືດຊະນິດໃດ ທີ່ເຂົາເຈົ້າຄິດວ່າຈະມີລາຍຮັບດີກວ່າ. ຄວາມອາດສາມາດໃນການເຈລະຈາຕໍ່ລອງຂອງເຂົາເຈົ້າຈະໄດ້ຮັບການປັບປຸງ ຖ້າເຂົາເຈົ້າໄດ້ຮັບຂໍ້ມູນການຕະຫຼາດທີ່ຖືກຕ້ອງ ແລະ ທັນກັບສະພາບການ.

### 8.6.3 ການຊີ້ນໍາ ກວດກາ ຕິດຕາມ ແລະ ການລາຍງານ

ຮູບສະແດງ 5: ສະແດງໃຫ້ເຫັນເຖິງລະບົບການຊີ້ນໍາ ກວດກາ ຕິດຕາມ ພາຍໃນໝູ່ພາກສ່ວນທີ່ກ່ຽວຂ້ອງ ກັບການຜະລິດກົ່ວເຫຼືອງ ໃນເມືອງຊຽງເງິນ. ການຊີ້ນໍາ ກວດກາ ຕິດຕາມ ໃນໄຮ່ຂອງຊາວກະສິກອນ ແມ່ນໄດ້ເຮັດໂດຍລໍາພັງ ຂອງ ພ/ງ DAFEO (ໄດ້ສະແດງ ໃນຮູບພາບ ເປັນເສັ້ນໃຫຍ່ເຂັ້ມ) ຫຼື ບາງເທື່ອກໍ່ຮ່ວມກັບ ພ/ງ ຂອງ ບ/ສ ວິໄລຄູນ ຫຼື ພ/ງ ຂອງອົງການສຸພານິມິດ. ວິໄລຄູນ ແລະ ສຸພານິມິດ ກໍ່ເຫັນວ່າມີຄວາມຈໍາເປັນຈະຕ້ອງໄດ້ລົງສະໜາມຢ່າງເປັນປະຈໍາ ເພື່ອຊີ້ນໍາ ກວດກາ ຕິດຕາມ ກິດຈະກໍາ ຕ່າງໆ ຂອງຊາວກະສິກອນ ແຕ່ຫາກ ມີ ພຽງແຕ່ ກວດກາ ຮ່ວມກັບ ພ/ງ DAFEO ພວກເຮົາ ມີຄວາມຂັດແຍ່ງດ້ານຂໍ້ມູນຂ່າວສານ ກ່ຽວກັບຄວາມຖີ່ຂອງການລົງຢ້ຽມຢາມ ຊີ້ນໍາ ກວດກາ ຕິດຕາມ. ອີງຕາມການລາຍງານ ຂອງ ພ/ງ ວິໄລຄູນ ແລະ ພ/ງ DAFEO ພວກເຂົາເຈົ້າ ໄດ້ຊີ້ນໍາ ກວດກາ ຕິດຕາມ ຮ່ວມກັນ ຢ່າງເປັນປະຈໍາ ກັບຫົວໜ້າກຸ່ມຜູ້ຜະລິດ, ແຕ່ອີງຕາມການລາຍງານຂອງຊາວກະສິກອນ ບັນຫານີ້ ບໍ່ແມ່ນຄືທີ່ໄດ້ກ່າວມາ. ການຊີ້ນໍາ ກວດກາ ຕິດຕາມ ໂດຍ ພະນັກງານເມືອງ ແມ່ນໜ້ອຍຫຼາຍ (ຈະເປັນເສັ້ນຂາດ).




ຮູບສະແດງ 5: ລະບົບການຊີ້ນຳ ກວດກາ ຕິດຕາມ ພາຍໃນພາກສ່ວນທີ່ກ່ຽວຂ້ອງ ໃນການຜະລິດ ກົ່ວເຫຼືອງ ທີ່ເມືອງຊຽງເງິນ.

ມາເຖິງປະຈຸບັນ ມີພຽງ ພ/ງ ຫ້ອງການສົ່ງເສີມ ກະສິກຳ-ປ່າໄມ້ ພຽງແຕ່ 5 ຄົນ ຢູ່ໃນເມືອງຊຽງເງິນ. ພ/ງ DAFEO 1 ຄົນ ແມ່ນແຕ່ງຕັ້ງໃຫ້ຮັບຜິດຊອບ 1 ເຂດ (ການແບ່ງເຂດພັດທະນາ) ແຕ່ລະເຂດ ລວມມີ 6 -14 ໝູ່ບ້ານ. ພ/ງ DAFEO ບໍ່ສະເພາະແຕ່ລົງຊີ້ນຳ ກວດກາ ຕິດຕາມ  ການຜະລິດກົ່ວເຫຼືອງ ແຕ່ຫາກ ຊີ້ນຳ ກວດ ກາ ຕິດຕາມ ການປູກພືດອື່ນໆ ນຳອີກ. ອັດຕາສ່ວນທີ່ບໍ່ເໝາະສົມ ຂອງ ພ/ງ DAFEO ຕໍ່ກັບຈຳນວນ ຂອງຊາວ ກະສິກອນ ຊຶ່ງພວກເຂົາເຈົ້າທີ່ບໍລິການຮັບໃຊ້ຈຳນວນການປູກພືດຊະນິດອື່ນໆ ທີ່ເຂົາເຈົ້າ ຊີ້ນຳ ກວດກາ ຕິດ ຕາມ ແລະ ສະພາບທາງລົດຂອງພື້ນທີ່ຕ່າງໆ ຊຶ່ງເຂົາເຈົ້າຈະລົງຢ້ຽມຢາມ. ມັນອາດເປັນເລື້ອງທີ່ເຂົ້າບໍ່ ໄດ້ ຊຶ່ງ ການຊີ້ນຳ ກວດກາ ຕິດຕາມ ບໍ່ພຽງພໍ ແລະ ການສະໜັບສະໜູນ ທາງດ້ານເຕັກນິກ ທີ່ຈະສາມາດສະໜອງໃຫ້ແກ່ ຊາວກະສິກອນໄດ້.

ກົນໄກການລາຍງານແບບຕໍ່ເນື່ອງ ແມ່ນໄດ້ສະແດງໄວ້ ໃນ ຮູບສະແດງ 6. ຊາວກະສິກອນລາຍງານໃຫ້ແກ່ຫົວໜ້າກຸ່ມຜູ້ທຳການຜະລິດ ກ່ຽວກັບບັນຫາຕ່າງໆ ກ່ຽວພັນກັບການຜະລິດກົ່ວເຫຼືອງຂອງພວກເຂົາເຈົ້າ. ຫົວໜ້າອາດຈະນຳເອົາຂໍ້ມູນຕ່າງໆ ຈາກກຸ່ມຊາວກະສິກອນຂອງຕົນສົ່ງຕໍ່ ໄປໃຫ້ ພ/ງ DAFEO. ໃນທາງກັບພະນັກງານ DAFEO ຈະສົ່ງຕໍ່ກ່ຽວກັບ ຂໍ້ມູນຂ່າວສານກັບຄືນໄປໃຫ້ແກ່ ວິໄລຄູນ ແລະ ສຸພານິມິດ. ເວລາໃດ ແລະ ເຮັດແນວ ໃດ ທີ່ວິໄລຄູນ ຫຼື ສຸພານິມິດ ຈະຮັບຜິດຊອບຕໍ່ກັບບັນຫາເຫຼົ່ານັ້ນ ຍັງເປັນເລື້ອງທີ່ຍັງບໍ່ທັນແຈ່ມແຈ້ງ.

ອີງຕາມປະສົບການຂອງຊາວກະສິກອນຈຳນວນນຶ່ງ ຜູ້ມີແນວປູກທີ່ບໍ່ອອກ, ເຂົາເຈົ້າກໍ່ໄດ້ລາຍງານທັນທີ ທັນໃດໃຫ້ແກ່ຫົວໜ້າກຸ່ມຜູ້ຜະລິດກ່ຽວກັບສະພາບະການຂອງເຂົາເຈົ້າ. ພວກເຂົາແມ່ນຄາດການວ່າ ແນວປູກທີ່ຈະມາ ທົດແທນ ບ/ສ ວິໄລຄູນນີ້ ອາດຈະສະໜອງໃຫ້ໄດ້. ແຕ່ບໍ່ເປັນແຕ່ບຸນ, ບໍ່ມີການທົດແທນແນວປູກມາໃຫ້ເລີຍ. ມັນ

ເປັນເລື້ອງທີ່ບໍ່ແຈ້ງຂາວ ຫຼືວ່າ ບັນຫາໃດໄປຮອດແລ້ວ ຜູ້ຮັບຫາກເຣັດຄືວ່າເສີຍໄວ້ ຫຼືວ່າ ຂ່າວຄາວ ແມ່ນໄດ້ ຮັບແລ້ວ ແຕ່ຫາກບໍ່ມີຄວາມເອົາໃຈໃສ່ຫົວຊາ. ການລາຍງານແບບຕໍ່ເນື່ອງ ແລະ ລະບົບຄວາມຮັບຜິດຊອບ ມີ ປະສິດທິພາບ, ການແກ້ໄຂທີ່ເປັນໄປໄດ້ ຕໍ່ກັບບັນຫາການຜະລິດຄວນຈະກືກສະໜອງໃຫ້ທັນເວລາ.




ຮູບສະແດງ 6: ກະແສການໄຫຼວຽນ ພາຍໃນພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຜະລິດກົ່ວເຫຼືອງ ທີ່ເມືອງຊຽງເງີນ

# 9. ຜົນກະທົບ ທີ່ເປັນໄປໄດ້ ກ່ຽວກັບການຜະລິດກົ່ວເຫຼືອງ

ຜົນກະທົບຮອບດ້ານກ່ຽວກັບການຜະລິດກົ່ວເຫຼືອງ ສາມາດສັງເຂບໄດ້ໂດຍອີງຕາມ 4 ບັນຫາຕົ້ນຕໍ. ທ່າມກາງ ນັ້ນ, ພວກເຂົາກືກນຳສະເໜີແບບແຍກເພື່ອຄວາມກະຈ່າງແຈ້ງ, ມັນຄວນຈະບັນທຶກໄວ້ວ່າ ບັນຫາຫຍຸ້ງຍາກ ສັບສົນຕົວຈິງ ແມ່ນມີການພົວພັນພາຍໃນ. ແຕ່ລະບັນຫາ ອາດຈະສົ່ງຜົນສະທ້ອນໂດຍທາງກົງ ຫຼື ທາງອ້ອມ ໃຫ້ກັນ ແລະ ກັນ.

## *9.1 ຜົນກະທົບນິເວດ ທາງດ້ານການກະເສດ*

ເປັນຍ້ອນວ່າ ກົ່ວເຫຼືອງເປັນພືດຕະກຸນກົ່ວ ທີ່ສາມາດດຶງດູດເອົາທາດ ໄນໂຕຣເຈນ ມັນຈຶ່ງມີຜົນກະທົບໃນທາງ ບວກ ຕໍ່ກັບຄວາມອຸດົມສົມບູນຂອງດິນໃນຊ່ວງໄລຍະຍາວ. ແຕ່ແນວໃດກໍ່ຕາມ, ມັນຂື້ນຢູ່ກັບການໂພສະນາການ ຂອງດິນ ທີ່ມີມາແຕ່ກຳເນີດ, ຊຶ່ງກົ່ວເຫຼືອງຕ້ອງການໃສ່ຝຸ່ນ ໂປຕາຊຽມ K ຫຼື ຟົດຟໍລັດ P ເພີ້ມເຕີມອີກ.

ການປະສົມປະສານຂອງກົ່ວເຫຼືອງ ຕາມລະບົບທີ່ມີຢູ່ໃນປະຈຸບັນ ຈະເປັນການນຳໃຊ້ສູງສຸດກໍ່ຄືການສະໜອງ ລາຍຮັບເພີ້ມໃຫ້ແກ່ຊາວກະສິກອນ. ກັບກາຍເປັນລະບົບການປູກພືດໝູນວຽນ, ການປູກກົ່ວເຫຼືອງພາຍຫຼັງ

ການເກັບກູ້ເຂົ້ານາແລ້ວ ຈະເປັນຜົນກະທົບໃຫ້ແກ່ການປູກເຂົ້າໃນປີຖັດໄປ ກໍ່ຍ້ອນວ່າ ມີການປັບປຸງດິນ ແລະ ການຮັກສາຄວາມຊຸ່ມຂອງດິນ. ບັນຫານີ້ ແມ່ນຄວາມນິຍົມທີ່ສຸດ ເມື່ອຕໍເຟືອງຂອງຕົ້ນເຂົ້າຈາກລະດູການປູກ ໄດ້ຖືກນໍາໃຊ້ ເປັນເຟືອງກົບປົກອ້ອມກົ່ວເຫຼືອງ. ການກົບປົກດ້ວຍເຟືອງ ຍັງເປັນການຄວບຄຸມການເຕີບໃຫຍ່ ຂອງສັດຕູພືດ. ໃນໄຮ່ (ບ່ອນເນີນສູງ) ກົ່ວເຫຼືອງ ອາດຈະປະສົມປະສານ ໃນລະບົບການປູກພືດໝູນວຽນແບບ ເປັນພືນໃຫຍ່ ຫຼື ເປັນຕອນນ້ອຍຫຼາຍບ່ອນ ສໍາລັບການປັບປຸງດິນ. ກົ່ວເຫຼືອງ ຍັງສາມາດປູກສະຫຼັບກັບສາລີ ໂດຍບໍ່ມີຜົນເສຍ ຫຼື ບໍ່ໄດ້ເຮັດໃຫ້ສະມັດຕະພາບ ຂອງສາລີຫຼຸດລົງແຕ່ປະການໃດ.

ການປູກພືດກົ່ວເຫຼືອງ ແຕ່ຊະນິດດຽວອາດຈະງ່າຍດາຍໃນການຈັດການ ແຕ່ພວກເຮົາຄວນຈະລະມັດລະວັງ ທີ່ຈະພິຈາລະນາເຖິງການນໍາໃຊ້ເຄມີການກະເສດແບບຟຸມເຟືອຍ. ການລະບາດຂອງສັດຕູພືດຕ່າງໆ ເປັນ ເລື້ອງທີ່ເປັນໄປໄດ້ທີ່ຈະລະບາດໃນລະບົບການປູກພືດແບບຊະນິດດຽວ. ການຮັບຮູ້ວ່າ ກົ່ວເຫຼືອງມີການເສຍ ຫາຍຂອງສັດຕູຢ່າງຫຼວງຫຼາຍໃນທຸກໆສະພາວະການ ການເຕີບໃຫຍ່ນັບຕັ້ງແຕ່ກ່ອນການປູກ ຈົນໄປເຖິງການ ເກັບກ່ຽວ, ຊາວກະສິກອນອາດຈະຖືກຍົວະຍວນຢ່າງງ່າຍດາຍ ໃຫ້ນໍາໃຊ້ ຢາປາບສັດຕູພືດ. ໃນຂະນະດຽວ ເຊັ່ນນີ້ ຍັງເປັນເລື້ອງທີ່ຫາກໍ່ເປັນ, ພາກປະຕິບັດຕົວຈິງແບບຍືນຍົງກ່ຽວກັບການຄວບຄຸມ ແລະ ກໍາຈັດສັດຕູ ພືດແບບປະສົມປະສານ (IPM) ແລະ ການຈັດສັນໂພສະນາການແບບປະສົມປະສານ (INM) ສົມຄວນທີ່ຈະຕ້ອງ ໄດ້ສົ່ງເສີມ.

ການປູກພືດໝູນວຽນ, ປູກພືດສະຫຼັບ ແລະ ການນໍາໃຊ້ແນວພັນທີ່ທົນທານຕໍ່ກັບພະຍາດພືດ ແມ່ນພາກປະຕິບັດ ທີ່ດີຈໍານວນນຶ່ງ. ການນໍາໃຊ້ເຄມີ ການກະເສດ ທີ່ບໍ່ຮູ້ຈັກແຍກແຍະ ອາດຈະຂັດຂວາງນັບຕັ້ງແຕ່ ເປັນເລື້ອງ ຂົ່ມຂູ່ໃຫ້ແກ່ສະພາບແວດລ້ອມ ທັງເປັນການຫຼຸດຜ່ອນຜົນປະໂຫຽດຂອງຈຸດລາຍໄດ້ຕໍ່າສຸດ ໃຫ້ແກ່ຊາວກະສິ ກອນ. ເຄມີການກະເສດ ຢູ່ ສປປ ລາວ ໃນປັດຈຸບັນ ແມ່ນແພງຫຼາຍ ແລະ ສ່ວນໃຫຍ່ ແມ່ນຖືກນໍາເຂົ້າ ຊຶ່ງມີ ການກ່ຽວພັນຕໍ່ກັບການແຮເງິນໂດລາ ໄວ້ໃນປະເທດ.

ການຜະລິດກົ່ວເຫຼືອງ ອາດຈະມີຜົນກະທົບໃນແງ່ລົບ ຕໍ່ກັບການເຊາະເຈື່ອນຂອງດິນ ຖ້າຫາກປູກຢູ່ບ່ອນທີ່ມີ ຄວາມຄ້ອຍຊັນ ໂດຍປາສະຈາກມາດຕະການການຄວບຄຸມ. ດ້ວຍເຫດນີ້ ມັນຈຶ່ງເປັນເລື້ອງທີ່ສໍາຄັນທີ່ຈະລວມ ເອົາເຕັກນິກໃນເຊີງອານຸລັກ (ຮັກສາ) ເຊັ່ນ: ການປູກຕາມແລວຄັນຄູ ຫຼື ປູກເປັນແລວພືດແບບຮົ້ວທາງຂວາງ ເມື່ອເວລາທີ່ຈະສົ່ງເສີມການປູກກົ່ວເຫຼືອງໃຫ້ແກ່ຊາວກະສິກອນ.

ມັນອາດຈະມີຄວາມລອບຄອບດ້ານການກົດດັນ ທາງດ້ານເສດຖະກິດ ທີ່ຈະເຂັ້ມຂຸ້ນຫຼາຍຂຶ້ນກ່ຽວກັບການ ຜະລິດກົ່ວເຫຼືອງທົ່ວປະເທດ ບໍ່ສົມຄວນສົ່ງເສີມການຜະລິດແບບແຜ້ວຖາງ ແລະ ຈູດ ຊຶ່ງມີບົດຮຽນໃຫ້ຮູ້ ຢູ່ທີ່ ປະເທດອາເມລິກາໃຕ້, ປະເທດບຣາຊິນ ແລະ ປາລາກວາຍ. ບໍລິເວນກວ້າງຂວາງຂອງປ່າຝົນຖືກທໍາລາຍກ້ຽງ ເພື່ອເຮັດໃຫ້ເປັນບ່ອນທໍາການຜະລິດກົ່ວເຫຼືອງ. ລັດຖະບານ ປະເທດບຼາຊິນ, ໃນເລື້ອງທີ່ຕາມອັດຕາເຄື່ອນ ໄຫວຂອງປ່າຝົນທີ່ເສຍຫາຍ ເຂດແມ່ນໍ້າ Amazon, ໄດ້ຮັບສັນຍາເຕືອນຂອງສຽງກະດິງ. ມັນເຕືອນບອກວ່າ ພາຍໃນ 12 ເດືອນ ໄປເຖິງ ເດືອນ 8 ປີ 2004. ອັດຕາເຄື່ອນໄຫວທີ່ເສຍຫາຍ ຕາມລະດັບ 10 ປີ ແມ່ນເສຍ ຫາຍສູງ ແລະ ມັນໃຫ້ເຫດຜົນ ຄວາມເສຍຫາຍ ໃຫ້ແກ່ປະເທດບຣາຊິນ ກ່ຽວກັບການຄົ້ນພົບທາງດ້ານເສດ ຖະກິດ ເວົ້າລວມ ແລະ ການສົ່ງອອກ ກົ່ວເຫຼືອງຂອງປະເທດບຣາຊິນ ແມ່ນດັ່ງສະນັ້ນຫວັ່ນໄຫວ ແບບຜິດທໍາ ມະດາ. (Monahan 2005).

## *9.2 ຜົນກະທົບ ທາງດ້ານເສດຖະກິດ*

ລາຄາປາກສາງ ຂອງຟາມ 2.000-3.000 ກີບ/ກິໂລ ຂອງກົ່ວເຫຼືອງ ມີຄ່າສູງກວ່າລາຄາເຂົ້ານາ 1.200- 1.500 ກີບ/ກິໂລ ຫຼື ສາລີ 1.000-2.000 ກີບ/ກິໂລ (ລາຄາ ປີ 2004 ທີ່ເມືອງຊຽງເງິນ). ເມື່ອມີການປະສົມ ປະສານກັບລະບົບການ ທີ່ມີຢູ່ແລ້ວ. ກົ່ວເຫຼືອງອາດຈະສະໜອງ ແຫຼ່ງລາຍຮັບເພີ້ມ. ທີ່ບ້ານຫ້ວຍໂຄດ ເມືອງ ຊຽງເງິນ, ລູງຈັນດີ ມີລາຍຮັບສຸດທິ 120.000 ກີບ ຕໍ່ແປງ ທີ່ມີຂະນາດເນື້ອທີ່ 500 ມ$^2$ ທີ່ລາວໃຊ້ປູກກົ່ວເຫຼືອງ ພາຍຫຼັງທີ່ລາວເກັບກູ້ເຂົ້ານາອອກແລ້ວ.

ໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ - ຊູແອດ ໄດ້ທົດລອງສຶກສາປຽບທຽບ ໃນບ້ານຄັດເລືອກ ຢູ່ເມືອງໂພນໄຊ ແຂວງຫຼວງພະບາງ ແລະ ເມືອງນາໝໍ້ ແຂວງອຸດົມໄຊ ໄດ້ສະແດງໃຫ້ ເຫັນວ່າ ສະມັດຕະພາບຂອງສາລີ ບໍ່ໄດ້ບົ່ງບອກເຖິງການຫຼຸດລົງ ເມື່ອເວລາປູກສະຫຼັບກັບກົ່ວເຫຼືອງ. ສິ່ງທີ່ ໄດ້ປຽບ ຂອງຜົນຜະລິດກົ່ວເຫຼືອງ ເຮັດໃຫ້ມີລາຍຮັບເພີ້ມ ແຕ່ 1,3 ລ້ານ ປຽບທຽບ 0.6 ລ້ານ ຈາກການປູກ ພືດສາລີ. ຍິ່ງໄປກວ່ານັ້ນ, 7 ຈາກ 15 ຄົນ ທີ່ເປັນຊາວກະສິກອນວ່າ ປູກພືດສະຫຼັບໄດ້ຫຼຸດຜ່ອນຈຳນວນເທື່ອ ຂອງການເສຍຫຍ້າ ຊຶ່ງເຄີຍເສຍຫຍ້າ 3 ເທື່ອ ຫຼຸດລົງມາເປັນ 2 ເທື່ອ ຕໍ່ກັບລະດູການປູກຝັງ (Sisavath et al 2005). ນີ້ມີຄວາມໝາຍວ່າ ແມ່ນການປະຢັດກ່ຽວກັບແຮງງານ ເປັນສິ່ງນຳເຂົ້າ (Inputs) ໂດຍສະເພາະແຮງ ງານຂອງເພດຍິງຜູ້ທີ່ໃຊ້ແຮງງານ ໂດຍປົກກະຕິແລ້ວ ເພື່ອການເສຍຫຍ້າບ່ອນທີ່ປູກສາລີ.

ເປັນພືດສ້າງລາຍຮັບ ຊຶ່ງຕັ້ງໃຈວ່າ ເພື່ອການສົ່ງອອກ, ກົ່ວເຫຼືອງເປັນພືດທີ່ມີຄວາມຮູ້ສຶກອ່ອນໄຫວ ຕໍ່ກັບລາ ຄາ ຂື້ນໆ ລົງໆ ໃນຕະຫຼາດສາກົນ. ລາຄາ ແມ່ນກົກບົງການໂດຍພໍ່ຄ້າລາຍໃຫຍ່, ນີ້ເປັນກໍລະນີ ຢູ່ທີ່ປະເທດໄທ. ມັນເປັນເລື້ອງທີ່ເກີດຂື້ນ ຖ້າວ່າຕະຫຼາດສາກົນຫາກປະຕິເສດທີ່ຈະຊື້ ດັ່ງທີ່ເຄີຍມີປະສົບການກັບໝາກເດືອຍ ໃນ ຕົ້ນປີ 2000. ການປ້ອງກັນ ຄວນຈະເຮັດຢ່າງເອົາຈິງເອົາຈັງ ຊຶ່ງຊາວກະສິກອນຈະບໍ່ກັບກາຍເປັນຄົນໝົດກຳ ລັງໃຈຕໍ່ກໍລະນີ. ການປູກພືດແບບທະວີຄູນຫາກຫຼາຍ ເມື່ອທຽບກັບການປູກພືດແບບຊະນິດດຽວ ມີຄວາມໄດ້ປຽບ ທາງດ້ານເສດຖະກິດ. ຖ້າກຫາກລາຍຮັບ ຈາກກົ່ວເຫຼືອງຫາກລົ້ມເຫຼວ, ການປູກພືດ ອື່ນໆ ສາມາດເພິ່ງພາລາຍຮັບ ແບບກົງໄປກົງມາໄດ້.

ມັນເປັນເລື້ອງທີ່ຫຍຸ້ງຍາກ ໃຫ້ແກ່ຊາວກະສິກອນລາວ ທີ່ຈະແຂ່ງຂັນກັບຟາມຂະໜາດໃຫຍ່ ນຳໃຊ້ກົນຈັກທີ່ທັນ ສະໄໝ ໃນປະເທດບຣາຊິນ, ອາເມຣິກາ ແລະ ບັນດາປະເທດເອີຣົບ ຊຶ່ງເປັນປະເທດ ທີ່ມີຄວາມສາມາດຜະລິດ ພືດດ້ວຍຕົ້ນທຶນຕ່ຳ. ຊາວກະສິກອນລາວເຮົາ ສາມາດຍາດເອົາທ່າໄດ້ປຽບຂອງຄວາມເໝາະສົມທາງດ້ານ ການຕະຫຼາດ ໄດ້ບໍ່? ປັດຈຸບັນ ມັນມີຄວາມສຳນຶກປູກເພື່ອສຸຂະພາບເກີດຂື້ນ ພາຍໃນໝູ່ສາທາລະນະ ໂດຍສະ ເພາະ ໃນບັນດາປະເທດເອີຣົບ ແລະ ອາເມຣິກາ. ການອ້າງອີງ ປູກເປັນທາດອາຫານຢ່າງເປັນອົງການ ແລະ ຫຼຸດຜ່ອນການບໍລິໂພກຊີ້ນ ໃຫ້ຫັນມານັກອາຫານປະເພດເຈ ແມ່ນຄວາມມຸ້ງຫວັງຊຶ່ງພໍ່ຄ້າລາວເຮົາ ແລະ ລັດຖະ ບານ ຄວນຈະເອົາທ່າໄດ້ປຽບດັ່ງກ່າວ.

ການຄ້າຂາຍກົ່ວເຫຼືອງຄວນພິຈາລະນາ ບໍ່ແມ່ນສົ່ງກົ່ວເຫຼືອງແບບເປັນວັດຖຸດິບ ແຕ່ຫາກແມ່ນເຄິ່ງແບບເຄິ່ງ ການປຸງແຕ່ງ ຫຼື ຜະລິດຕະພັນສຳເລັດຮູບ ເພື່ອສະໜອງມູນຄ່າເພີ້ມຂື້ນ. ການປຸງແຕ່ງແບບທ້ອງຖິ່ນຈະຊ່ວຍ ຫຼຸດຜ່ອນຄວາມຕ້ອງການອັນເປັນພື້ນຖານຜະລິດຕະພັນຫຼັກ ເຊັ່ນ: ນ້ຳມັນພືດ ເພື່ອໃຊ້ແຕ່ງກິນ ແລະ ນ້ຳຊອດ ກົ່ວເຫຼືອງ ຊຶ່ງເປັນເລື້ອງທີ່ຂາດບໍ່ໄດ້ສຳລັບຄົນລາວ.

ຜະລິດຕະພັນທີ່ເຮັດດ້ວຍກົ່ວເຫຼືອງ ເຊັ່ນ: ອາຫານ ຫຼື ເຂົ້າໜົມປັງ ແມ່ນເປັນອາຫານທີ່ມີສ່ວນປະສົມຂອງກົ່ວ ເຫຼືອງປະກອບດ້ວຍໂພສະນາການສູງສຸດ. ນີ້ແມ່ນທ່າແຮງອັນນຶ່ງ ສຳລັບການປັບປຸງຄຸນນະພາບອາຫານແກ່ສັດ ຖ້າຫາກນຳໃຊ້ໂດຍກົງ. ມັນອາດສາມາດກະຕຸກຊຸກຍູ້ສັນຫຼັງຂອງທຸລະກິດໂຮງສີອາຫານສັດເພື່ອປຸງແຕ່ງສ່ວນ ປະສົມນັ້ນ. ຄວາມໄດ້ປຽບທາງດ້ານເສດຖະກິດມີເປົ້າໝາຍເພື່ອກຸ້ມຕົນເອງໂດຍພື້ນຖານ. ຜະລິດຕະພັນກົ່ວ ເຫຼືອງ ແລະ ຜະລິດຕະພັນທີ່ເຮັດດ້ວຍກົ່ວເຫຼືອງ ສົມຄວນທີ່ຈະໄດ້ຮັບຂອງການສຶກສາຄັ້ງນີ້. ການຊົມໃຊ້ທ້ອງ ຖິ່ນທີ່ເພີ້ມຂື້ນ ຫຼຸດຜ່ອນຄວາມໄວ້ວາງໃຈກ່ຽວກັບຕະຫຼາດການສົ່ງອອກ.

## *9.3 ຜົນກະທົບທາງດ້ານວັດທະນະທຳ-ສັງຄົມ*

ກົ່ວເຫຼືອງ ປຽບສະເໝືອນເປັນແຫຼ່ງລາຍຮັບ ມີຜົນກະທົບໃນແງ່ບວກທີ່ເປັນທ່າແຮງແຫ່ງການຫຼຸດຜ່ອນຄວາມ ທຸກຈົນພາຍໃນໝູ່ຊາວກະສິກອນ. ເຖິງຢ່າງໃດກໍ່ຕາມ, ມັນເປັນເລື້ອງສຳຄັນທີ່ຊາວກະສິກອນຜູ້ທີ່ໄດ້ຮັບອຳນາດ ຈະເປັນຜູ້ເຂົ້າຮ່ວມທີ່ຫ້າວຫັນໃນບັນຫາການຄ້າຂາຍ. ພວກເຂົາເຈົ້າອາດສາມາດຕໍ່ລອງໃຫ້ໄດ້ລາຄາດີ ໂດຍສະ ເພາະ ພາຍໃຕ້ໂຄງການປູກແບບມີສັນຍາ. ໂອກາດຕ່າງໆ ສຳລັບການຕັ້ງສະຫະກອນລວມໝູ່ດ້ານການຜະລິດ ແລະ ການຕະຫຼາດ

ມີຄວາມຈຳເປັນທີ່ຈະຕ້ອງຄົ້ນພົບ. ສະໜອງຄວາມໄວ້ເນື້ອເຊື່ອໃຈ ແລະ ໃຫ້ຂໍ້ມູນ ຂ່າວສານ ທາງດ້ານການຕະຫຼາດ ບວກກັບເຕັກໂນໂລຢີທີ່ຮູ້ເຮັດຮູ້ທຳ ແມ່ນວຽກງານການສົ່ງອອກ.

ກົ່ວເຫຼືອງ ເປັນອາຫານໃຫ້ແກ່ມະນຸດດ້ວຍທາດໂປຣຕີນ ການສົ່ງເສີມໃຫ້ຄົວເຮືອນບໍລິໂພກຈະຊ່ວຍປັບປຸງດ້ານ ໂພສະນາການ  ແລະ ສົ່ງຜົນສະທ້ອນອັນດີແກ່ສຸຂະພາບໃຫ້ແກ່ຜູ້ທຳການ ນອກຈາກນັ້ນ, ຜະລິດຕະພັນທີ່ເປັນ ສ່ວນປະສົມຂອງກົ່ວເຫຼືອງ ເປັນທາດອາຫານໂພສະນາການໃຫ້ແກ່ສັດ. ດ້ວຍການໃຫ້ອາຫານທີ່ມີຄຸນນະພາບແກ່ ສັດລ້ຽງພື້ນບ້ານ, ສັດມີສຸຂະພາບດີຂື້ນ, ເຕີບໂຕ ແລະ ການສືບພັນ ແມ່ນກົກຕ້ອງຕາມທີ່ຄາດຫວັງໄວ້. ການຜະ ລິດສັດທີ່ດີຂື້ນນຳໄປສູ່ການເຮັດໃຫ້ແຫຼ່ງລາຍຮັບເພີ້ມມຂື້ນ ແລະ ຊັບສົມບັດຄົງທີ່ໃຫ້ແກ່ຟາມຂອງຄົວເຮືອນ. ເຖິງຢ່າງໃດກໍ່ຕາມ, ການລະມັດລະວັງ ຈຳຕ້ອງໃຫ້ມີກ່ຽວກັບທາດເຊື້ອລາເປັນເບື່ອ ແລະ ມີຜົນສະທ້ອນ ຕໍ່ມະນຸດ.

ຄວນຈະແຈ້ງໃຫ້ຊາວກະສິກອນຮັບຮູ້ຢ່າງລະອຽດລະອໍ ເພື່ອປ້ອງກັນ ຫຼື ລົດໜ້ອຍຖອຍລົງສານເຈືອປົນຂອງ ເຊື້ອລາທີ່ເປັນທາດເບື່ອຂອງກົ່ວເຫຼືອງ ໃນຊ່ວງເກັບກູ້ ແລະ ເກັບຂື້ນເລົ້າ. ຄົນຊົນເຜົ່າສ່ວນນ້ອຍມີບົດບາດ ໃນການສົ່ງເສີມການປູກກົ່ວເຫຼືອງເປັນພືດສ້າງລາຍຮັບບໍ່?  ອີງຕາມການລາຍງານຂອງໂຄງການຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ເຂດພູດອຍ ຮ່ວມມື ລາວ - ຊູແອດ (ຄກ ຄກປຂ ລຊ ) ການທົດລອງ ສັງເກດ ປຽບທຽບ ໂດຍ ສີສະຫວາດ et al 2005, ກົ່ວເຫຼືອງ ໄດ້ປູກແບບພື້ນເມືອງມາແລ້ວ ໂດຍຊາວກະສິກອນ ເຜົ່າມົ້ງ, ດັ່ງນັ້ນ, ມັນກໍ່ເປັນເລື້ອງທີ່ງ່າຍຂື້ນ ທີ່ຈະສົ່ງເສີມການປູກກົ່ວເຫຼືອງພາຍໃນກຸ່ມຜູ້ຜະລິດຂອງຊົນເຜົ່າ.

ແມ່ຍິງ ໂດຍປົກກະຕິແລ້ວ ໄດ້ປຸງແຕ່ງກົ່ວເຫຼືອງສຳລັບການບໍລິໂພກຂອງຄອບຄົວ ແລະ ສາມາດປຸງແຕ່ງກົ່ວ ເຫຼືອງເປັນນໍ້າເຕົາຮູ້ ແລະ ເຮັດເປັນຜະລິດຕະພັນດອງ. ພວກເຂົາຮູ້ຕະຫຼາດວັດຖຸດິບຂອງກົ່ວເຫຼືອ ກໍ່ຄືຜະລິດ ຕະພັນຊຶ່ງແມ່ນສ່ວນປະສົມເປັນນໍ້າບົດຂອງກົ່ວເຫຼືອງ. ເຖິງຢ່າງໃດກໍ່ຕາມ, ປະຊາຊົນພາຍໃນໝູ່ບ້ານໄຊສຳພັນ ເມືອງນາໝໍ້ ແຂວງອຸດົມໄຊ ເວົ້າວ່າ ກົ່ວເຫຼືອງບໍ່ໄດ້ແມ່ນພືດຕົ້ນຕໍສຳລັບຄອບຄົວ. ມັນເປັນເລື້ອງທຳອິດທີ່ປູກ ກົ່ວເຫຼືອງ ໃນປີ 2004 ຕອນທີ່ ຄກ ຄກປຂ ລຊ ສະເໜີໃຫ້ປູກກົ່ວເຫຼືອງ. ມີຊາວກະສິກອນຈຳນວນແຕ່ໜ້ອຍ ດຽວໃຫ້ຄວາມສົນໃຈ ທີ່ຈະປູກອີກຕື່ມໃນປີຕໍ່ໄປ. ສ່ວນພວກທີ່ບໍ່ຢາກສືບຕໍ່ປູກກົ່ວເຫຼືອງ ໄດ້ກ່າວວ່າ ພວກເຂົາ ບໍ່ຮູ້ວ່າຕະຫຼາດກົ່ວເຫຼືອງນັ້ນ ຢູ່ໃສ? ຄຽງຂ້າງກັນນັ້ນ ພວກເຂົາບໍ່ມັກກິນ ແລະ ອ້າງວ່າມັນບໍ່ແຊບ. ບາງເທື່ອ ການໃຫ້ຂໍ້ມູນການຕະຫຼາດ ແລະ ສອນພວກເຂົາເຈົ້າດ້ວຍຫຼາຍວິທີການກ່ຽວກັບການແຕ່ງອາຫານ ແລະ ຊ່ວຍ ເຮັດໃຫ້ເຂົາເຈົ້າເຫັນໄດ້ຄຸນຄ່າຂອງພືດຊະນິດຊັ່ນນີ້.

ການກະຕຸກຊຸກຍູ້ ໃຫ້ໄປເຫັນນໍ້ານົມກົ່ວເຫຼືອງ, ເຕົ້າຮູ້, ຜະລິດຕະພັນກົ່ວເຫຼືອງດອງ ທີ່ຊື້ຂາຍໃນຕະຫຼາດໃຫຍ່ ຢູ່ ສປປ ລາວ ແລະ ຕາມເສັ້ນທາງຂອງກຳແພງນະຄອນວຽງຈັນ. ມັນໄດ້ໃຫ້ລາຍຮັບແກ່ແມ່ຍິງທີ່ຂາຍມັນ. ມັນ ເປັນເລື້ອງທີ່ອ້າງໂດຍຊາວກະສິກອນ ອັນທີ່ເອີ້ນວ່າ ຜູ້ຊື້ກົ່ວເຫຼືອງທີ່ຊອບກົດໝາຍໃນເມືອງຂອງພວກເຂົາເຈົ້າ ຕົວຈິງແລ້ວ ແມ່ນພໍ່ຄ້ານ້ອຍ ຜູ້ທີ່ຊື້ຜະລິດຕະພັນປຸງແຕ່ງຂອງກົ່ວເຫຼືອງ.

## *9.4 ຜົນກະທົບ ທາງດ້ານນະໂຍບາຍ ຂອງສະການບັນ*

ລະບົບການເສຍພາສີ ແລະ ການອອກໃບອານຸຍາດ (ທະບຽນ) ຄວນຈະໄດ້ທົບທວນຄືນ ເພື່ອເປັນການກະຕຸກ ຊຸກຍູ້ການລົງທືນຕື່ມອີກ ແລະ ຄ້າຂາຍແບບເສລີ.  ຕະຫຼາດສາກົນຕັ້ງລາຄາພື້ນຖານ ຊຶ່ງພໍ່ຄ້າທ້ອງຖິ່ນບໍ່ສາ ມາດຈະສົ່ງຜົນສະທ້ອນໄດ້. ເພື່ອໃຫ້ໄດ້ກຳໄລທີ່ໜ້າເພິ່ງພໍໃຈ, ບ/ສ ມີແນວໂນ້ມອຽງເກັບຊື້ກົ່ວເຫຼືອງດ້ວຍລາຄາ ຕໍ່າ ທີ່ຈະຊົດເຊີຍຄ່າປະຕິບັດງານ (ບໍລິຫານ) ແລະ  ໃນຄວາມເປັນຈິງ, ຊາວກະສິກອນແບກຮັບພາລະໜ້າທີ່ ຂອງພາສີ ຕ່າງໆ. ວິໄລຄູນ ເວົ້າວ່າ ຖ້າຫາກການເສຍພາສີ ຫາກຕໍ່າ ຫຼື ຍົກເວັ້ນ ພວກເຂົາສາມາດຂື້ນລາຄາ ເກັບຊື້ກົ່ວເຫຼືອງໄດ້ ຈາກຊາວກະສິກອນ.

ການກຳນົດ ລະດັບພາສີ ແລະ ອາກອນ ທີ່ສົມມາພາຄວນໃຫ້ແກ່ຕະຫຼາດກົ່ວເຫຼືອງ ຢູ່ເມືອງຊຽງເງິນ ແມ່ນຢູ ໃນກອບຂອງການສຶກສາເທື່ອນີ້. ເມືອເບິ່ງແບບຜີວເຜີນ ຄ່າອາກອນ ແລະ ຄ່າພາສີ ສຳລັບ ບ/ສ ວິໄລຄູນແລ້ວ

ຄ້າຍກັບວ່າ ເປັນສາລະທີ່ສຳຄັນ. ສຳລັບເຫດຜົນ, ມັນເປັນເລື່ອງທີ່ສຳຄັນສຳລັບຜູ້ອອກນະໂຍບາຍ ທີ່ຈຳແນກ ອອກໄດ້ວ່າ ຈະແບກຫາບຄ່າພາສີ ແລະ ອາກອນຄືແນວໃດ ຕໍ່ກັບປະສິດທິພາບການຕະຫຼາດທີ່ກະທົບໃສ່ຜູ້ຄ້າ ຂາຍ, ຕໍ່ຊາວກະສິກອນ ກໍ່ຄືກັບລັດຖະບານ.

ການສົ່ງເສີມປູກກົ່ວເຫຼືອງເປັນບໍລິເວນກວ້າງຂວາງ ໃຊ້ພືດຊະນິດໃໝ່ ຄືກັບກັບກົ່ວເຫຼືອງ ບ່ອນທີ່ທັງສອງ ຊາວກະສິກອນ ແລະ ພ/ງ ຫ້ອງການສົ່ງເສີມກະສິກຳເມືອງ ມີຄວາມຮູ້ພິເສດ ຮູ້ເຕັກໂນໂລຢີທີ່ຈຳກັດ ສາມາດ ບັງເກີດຜົນຕໍ່ກັບລະບົບການຜະລິດກ່ຽວກັບການທົດລອງປຽບທຽບ ແລະ ຄວາມຜິດພາດ. ໃນສະພາບການ ບ່ອນທີ່ການຢູ່ລອດຂອງຄອບຄົວທີ່ທຳຟາມ ຢູ່ລະດັບສ່ຽງບັນຫານີ້ ບໍ່ເປັນທີ່ເພິ່ງປາຖະໜາ. ດັ່ງນັ້ນ, ການລົງທຶນ ສົມຄວນທີ່ຈະຕ້ອງເຮັດ ໃນການເພີ້ມພູນຄວາມອາດສາມາດທາງດ້ານເຕັກນິກຂອງພະນັກງານ ຫ້ອງການສົ່ງ ເສີມກະສິກຳເມືອງ ຜູ້ທີ່ໃນທາງກັບ ສາມາດສະໜອງ ແລະ ສະນັບສະໜູນຊາວກະສິກອນ. ນະໂຍບາຍ ຊຶ່ງສະນັບ ສະໜູນແບບປະ ສົມປະສານ ທຽບກັບການປູກຊະນິດປະເພດດຽວ ຄວນຈະໄດ້ກະຕຸກຊຸກຍູ້.

ອັດຕາສ່ວນ ຂອງ ພ/ງ ຫ້ອງການສົ່ງເສີມກະສິກຳເມືອງ ໃນຄວາມສຳພັນຕໍ່ກັບຈຳນວນຊາວກະສິກອນ ທີ່ພວກ ເຂົາເຈົ້າຈະຕ້ອງຮັບໃຊ້ ມີຄວາມຈຳເປັນຢ່າງຍິ່ງ. ໃນກໍລະນີ ຂອງເມືອງຊຽງເງິນ, ມີນັກກະເສດສາດ ພຽງ 4 ຄົນ ຮັບໃຊ້ຊາວກະສິກອນ 54 ໝູ່ບ້ານ ຫຼື ສະເລ່ຍແລ້ວ 18-19 ໝູ່ບ້ານ ຕໍ່ກັບຫ້ອງການສົ່ງເສີມກະສິກຳເມືອງ 1 ຄົນ. ຈຳນວນ ພ/ງ ຫ້ອງການສົ່ງເສີມກະສິກຳເມືອງ ອາດຈະເພີ້ມຂື້ນໄດ້. ໃນທາງກົງໄປກົງມາ ອາດຈະເພີ້ມພູນ ຄວາມອາດສາມາດທາງດ້ານເຕັກນິກ ໃຫ້ແກ່ຫົວໜ້າກຸ່ມຜູ້ຜະລິດ. ພວກເຂົາເຈົ້າບໍ່ສະເພາະແຕ່ຮັບໃຊ້ ປຽບສະ ເໝືອນເປັນຈຸດສູນກາງແຫ່ງຄວາມຮັບຮູ້ທາງດ້ານເຕັກໂນໂລຢີ ແຕ່ຍັງຫາກເປັນຂໍ້ມູນຂ່າວສານທາງດ້ານການ ຕະຫຼາດ. ການປະສານງານທີ່ຕິດແທດ, ການຊີ້ນຳ, ກວດກາ, ຕິດຕາມ ແລະ ລະບົບການລາຍງານແບບຕໍ່ເນື່ອງ ສາມາດປັບປຸງ ໂດຍຜ່ານຫົວໜ້າກຸ່ມ ທີ່ໄດ້ຜ່ານການອົບຮົມທີ່ດີ.

ພາຍຫຼັງການເກັບກ່ຽວ ແລະ ສິ່ງທີ່ອຳນວຍຄວາມສະດວກດ້ານການຂົນສົ່ງ ບວກກັບເຄືອຂ່າຍເສັ້ນທາງທີ່ໄດ້ ຮັບການປັບປຸງ ສາມາດເປັນການລົງທຶນໄດ້ ແຕ່ລັດຖະບານ ແລະ ຂະແໜງການເອກະຊົນ ຮ່ວມກັນເຮັດໃຫ້ ເລື່ອງດັ່ງກ່າວເປັນຈິງເປັນຈັງ.

## *9.5 ເລື້ອງພິເສດ ກ່ຽວກັບການເກີດເຊື້ອລາ ທາດເບື່ອ*

ການເຈືອປົນຂອງເຊື້ອລາ ທາດເບື່ອ ມີການພົວພັນທາງດ້ານວິທະຍາສາດກ່ຽວກັບດິນ ແລະ ການປູກພືດ ຕ່າງໆ, ເສດຖະສາດ, ວັດທະນະທຳ ສັງຄົມ ແລະ ນະໂຍບາຍ ສະຖາບັນ. ຈາກຈຸດຢືນຂອງວິທະຍາສາດກ່ຽວ ກັບດິນ ແລະ ການປູກພືດຕ່າງໆ, ການເຕີບໂຕຂອງເຊື້ອລາ (ຕະກຸນເຊື້ອເຫັດ) ຊື່: Aspergillus ໃນກົ່ວເຫຼືອງ ອາດຈະລົດນ້ອຍຖອຍລົງໄດ້ ໂດຍມາດຕະການ ດັ່ງຕໍ່ລົງໄປນີ້:

(1) ນຳໃຊ້ ແນວປູກ ທີ່ມີຄຸນນະພາບດີ ຕອນເວລາປູກ.
(2) ນຳໃຊ້ແນວພັນ ທີ່ທົນທານຕໍ່ກັບເຊື້ອລາ ທາດເບື່ອ
(3) ຫຼີກເວັ້ນການກົດດັນ ຈາກຄວາມຊຸ່ມຊື່ນຫຼາຍກວ່າ 20 ວັນ ໃນຊ່ວງທ້າຍ ຂອງການປູກ (ພາຍຫຼັງເກັບກູ້)
(4) ຫຼີກເວັ້ນການທຳລາຍ ຕໍ່ກັບຝັກ ຫຼື ຖືກທຳລາຍ ຈາກກົນໄກ ຫຼື ໂດຍແມງໄມ້ ໃນເວລາເກັບກ່ຽວ
(5) ເກັບກ່ຽວໃຫ້ຖືກກັບເວລາທີ່ສຸກງອມ.
(6) ຟາດ ຕີ ແລະ ຕາກແດດ ໃນທັນທີທັນໃດ ມີການບັນຈຸ ຄວາມຊຸ່ມຊື່ນ 12%.
(7) ການສັງເກດເລົ້າ (ເຢ່ຍ).

ຈາກບັນຫາທາງດ້ານເສດຖະກິດ, ການເຈືອປົນ ຂອງເຊື້ອລາ-ທາດເບື່ອ ຈະເຮັດໃຫ້ລາຄາກົ່ວເຫຼືອງຕົກລົງ ຢ່າງຮຸນແຮງ. ລະດັບເຊື້ອລາ-ທາດເບື່ອ ສູງ ຈະເຮັດໃຫ້ກົ່ວເຫຼືອງບໍ່ສົມບູນ ໃຫ້ແກ່ການບໍລິໂພກຂອງມວນ ມະນຸດ.

ດັ່ງນັ້ນ, ອາດຈະກາຍເປັນລາຄາ ເປັນເກດຂອງອາຫານອາຫານສັດ ຊຶ່ງປົກກະຕິແລ້ວຈະຕໍ່າກວ່າເກດ ທີ່ເປັນອາຫານໃຫ້ແກ່ມະນຸດ. ຊາວກະສິກອນຜູ້ນື່ງອາດຈະສາມາດພະລິດ ສະມັດຕະພາບສູງ ແລະ ຄາດວ່າເປັນ ລາຍຮັບທີ່ດີ ແຕ່ບັນຫານີ້ ສາມາດປະຕິເສດຢ່າງງ່າຍດາຍໄດ້ ໂດຍການມີໜ້າຂອງການເກີດເຊື້ອ ລາ-ທາດ ເບື່ອ. ຊາວກະສິກອນຜູ້ທີ່ບໍ່ຂາຍໂດຍທັນທີ ທັນໄດພາຍຫຼັງການເກັບກູ້ ຍັງລໍຖ້າລາຄາດີ ອາດຈະໝົດສິດເສຍ ລາຍຮັບ ຍ້ອນການເຈືອປົນເຊື້ອລາ-ທາດເບື່ອ ຈາກການບໍ່ເອົາໃຈໃສ່ເກັບມ້ຽນຂື້ນສາງ.

ນະໂຍບາຍ ທີ່ຕົງປະເດັນ ແລະ ການສະໜັບສະໜູນ ທາງດ້ານສະກາບັນ ເປັນເລື້ອງສໍາຄັນທີ່ຫຼຸດນ້ອຍກອຍລົງ ການເກີດເຊື້ອລາ-ທາດເບື່ອ ໃນກົ່ວເຫຼືອງ. ໃຫ້ການອົບຮົມຈໍານວນນື່ງແກ່ຊາວກະສິກອນ, ດ້ານເຕັກນິກ ແລະ ຂໍ້ມູນຂ່າວສານ ແມ່ນມີຄວາມຈໍາເປັນ. ການແຕກແຫງ ແລະ ສິ່ງທີ່ອໍານວຍຄວາມສະດວກຕໍ່ການເກັບມ້ຽນແລະ ລະບົບການຂົນສົ່ງທີ່ມີປະສິດຕິພາບ ໄດ້ຖືກລົງທືນ ທີ່ລັດຖະບານ ແລະ ຂະແໜງການເອກະຊົນ ສາມາດສູນໃສ່. ຍົກຕົວຢ່າງ, ບໍລິສັດວີໄລຄູນ ໄດ້ລົງທືນສໍາລັບເຄື່ອງອົບແຫ້ງກົ່ວເຫຼືອງ ແລະ ພືດອື່ນໆ. ນີ້ແມ່ນການເພີ້ມຄ່າຊັບ ສົມບັດຄົງທີ່ ຂອງບໍລິສັດ ຊຶ່ງມີຄວາມຈໍາເປັນທີ່ຈະຊົດເຊີຍ ເທົ່າທີ່ຈະເປັນໄປໄດ້. ເຖິງຢ່າງໃດກໍ່ຕາມ, ຍ້ອນບໍລິ ມາດໜ້ອຍຂອງກົ່ວເຫຼືອງພາຍໃນປີນີ້, ມັນຈື່ງບໍ່ມີຄວາມສາມາດ ທີ່ຈະແລ່ນເຄື່ອງຈັກ ຢ່າງມີປະສິຕິພາບ ທີ່ ພຽງພໍໄດ້.

ກ່ຽວກັບບັນຫາ ວັດທະນະທໍາ-ສັງຄົມ, ແມ່ຍີງ ຜູ້ຈະທີ່ແຕ່ງກົ່ວເຫຼືອງ ແລະ ພະລິດຕະພັນຂອງກົ່ວເຫຼືອງສໍາລັບ ຄອບຄົວ ຄວນສໍານຶກກ່ຽວກັບຄວາມສ່ຽງທາງດ້ານສຸຂະພາບ ອັນເປັນຍ້ອນເຊື້ອລາ-ທາດເບື່ອ ໃນຂະນະດຽວ ກັນນັ້ນ, ການບໍລິໂພກກົ່ວເຫຼືອງ ແມ່ນໄດ້ມີການສົ່ງເສີມເພື່ອປັບປຸງດ້ານໂພສະນາການຄອບຄົວ. ມັນອາດເປັນ ພິນຮ້າຍດ້ວຍບັນຫາສຸຂະພາບ ເຊັ່ນ: ເປັນມະເຮັງໃນຕັບ ຖ້າຫາກແມ່ນບໍ່ຖືກແຈ້ງໃຫ້ຮັບຊາບ ໃນຂະນະດຽວ ກັນເຊັ່ນນີ້ ຢູ່ປະເທດອິນເດຍ ເດັກນ້ອຍເກີດໂຣກຕັບແຂງ.

## 10. ສະຫຼຸບ

ການຄ້າພືນພະລິດຂອງກົ່ວເຫຼືອງ ແມ່ນທ່າແຮງອັນນື່ງ ຂອງແຫຼ່ງລາຍຮັບໃຫ້ແກ່ຊາວກະສິກອນ, ພໍ່ຄ້າ ແລະ ລັດ ຖະບານ, ພາກສ່ວນທີ່ກ່ຽວຂ້ອງ, ປັດໄຈທາງດ້ານການຕະຫຼາດ ໂຄງປະກອບທາງດ້ານການປະຊາສໍາພັນ ກາຍ ເປັນຕົວກໍານົດຈໍານວນນື່ງ ເພື່ອຄວາມສໍາເລັດໃນການສົ່ງເສີມການປູກກົ່ວເຫຼືອງ, ເປັນພືດສ້າງລາຍຮັບ ຢູ່ໃນ ພາກເໜືອ ຂອງ ສປປ ລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ການກາຍເປັນພືດສິນຄ້າໃໝ່, ການພະລິດກົ່ວເຫຼືອງຈື່ງ ປະເຊີນກັບຄວາມທ້າທາຍຕ່າງໆ. ການສົ່ງເສີມຢ່າງວ່ອງໄວ ໃນການປູກພືດຊະນິດດຽວຢ່າງຂະໜາດກວ້າງ ຂວາງ ຈະຕ້ອງໄດ້ເຮັດຢ່າງລະມັດລະວັງ. ນະໂຍບາຍທີ່ເປັນທິດນໍາ ຊຶ່ງກະຕຸກຊຸກຍູ້ລະບົບການຈັດທໍາຟາມ ແບບປະສົມປະສານ ບວກກັບການສະນັບສະໜູນຂໍ້ມູນຂ່າສານ ທາງດ້ານການຕະຫຼາດ ສາມາດຊ່ວຍສົ່ງເສີມ ການພະລິດກົ່ວເຫຼືອງແບບຍືນຍົງ. ນອກນັ້ນ, ການທົບທວນ ນະໂຍບາຍຕ່າງໆ ກ່ຽວກັບການຄ້າຂາຍທີ່ມີຢູ່ ຈໍາ ເປັນຕ້ອງໄດ້ເຮັດເພື່ອຜັກດັນ ຊາວກະສິກອນ ແລະ ພໍ່ຄ້າ ໃຫ້ສືບຕໍ່ພະລິດກົ່ວເຫຼືອງ.

ຄວາມພະຍາຍາມຂອງລັດຖະບານ ທີ່ຈະເຮັດໄປພ້ອມໆກັນ, ຂະແໜງການເອກະຊົນ ຕົວແທນຜູ້ບໍລິຈາກ ແລະ ຊາວກະສິກອນ ຈະມີພົນກະທົບເປັນແງ່ບວກຢ່າງສຸງສຸດ ຈາກນິເວດການກະເສດ, ເສດຖະກິດ, ວັດທະນະທໍາ ສັງຄົມ ແລະ ບັນຫານະໂຍບາຍທາງດ້ານສະກາບັນ, ສ້າງຈິດສໍານຶກທີ່ເປັນພົນກະທົບໃນທາງບວກ, ຜູ້ເປັນສ່ວນ ການສາມາດກະກຽມ ແລະ ເອົາອອກມາເຮັດ ປ້ອງກັນຮັກສາແບບເຂັ້ມງວດ ຕໍ່ກັບການເປັນເບາະນວມຮອງ ຮັບການກະທົບ. ປະສົບການທີ່ໄດ້ມາຈາກການສຶກສາຄັ້ງນີ້ ສະແດງໃຫ້ເຫັນເຖິງການໃຫ້ວິຊາການຮູ້ແບບພິເສດ ຢ່າງພຽງພໍ ໃຫ້ແກ່ທັງຄູ ພ/ງ DAFEO ໃນການປູກພືດໃໝ່ ຈະຮັບປະກັນໄດ້ສະມັດຕະພາບທີ່ໄດ້ຜ່ານການປັບປຸງ.
ຈັດສ້າງການຊີ້ນໍາ-ກວດ-ຕິດຕາມ ຢ່າງເປັນປະຈໍາ ແລະ ລະບົບການລາຍງານແບບຕໍ່ເນື່ອງ ສາມາດສະໜອງ ການສະນັບສະໜູນ ຢ່າງທັນເວລາ ແລະ ການແກ້ໄຂບັນຫາທີ່ມີອ້ອມສະໜາມການພະລິດ. ມັນເປັນເລື້ອງທີ່ສໍາ ຄັນທີ່ໂຄງການ ຄກປ ຂ ລຊ ລິເລີ້ມສ້າງຕັ້ງລະບົບຂໍ້ມູນຂ່າວສານ ການຕະຫຼາດ ຊຶ່ງຈະເຊື່ອມໂຍງຜູ້ພະລິດກັບ ການຕະຫຼາດ ແລະ ກັບຂະແໜງການເອກະຊົນ ແຕ່ການຮັກສາຄວາມດຸນດ່ຽງ ດ້ານພົນປະໂຫຍດ ຂອງຜູ້ເປັນ ສ່ວນກາງ

ທຸກໆຄົນ. ເປີດການປະຊາສຳພັນພາຍໃນພາກສ່ວນ ທີ່ເປັນສ່ວນກາງ ຈະຕ້ອງໄດ້ຮັບການສົ່ງເສີມ.
ຊະນິດນຶ່ງຂອງການເຮັດ ການສຶກສາ-ຄົ້ນຄວ້າ, ການສ້າງເອກກະສານກ່ຽວກັບຂະບວນການ ແມ່ນໄດ້ລົງມືເຮັດ ດ້ວຍແຜນການ ເພື່ອສົ່ງເສີມກົ່ວເຫຼືອງເປັນທີ່ສ້າງລາຍຮັບ ແມ່ນຄວາມຈຳເປັນແທ້ຈິງ. ບັນຫາວັດທະນະ ທຳ-ສັງຄົມ ໄດ້ພົວພັນເຖິງຄວາມເຊື່ອໝັ້ນ ທີ່ຮັບຮອງເອົາໄດ້ ແມ່ນຄວາມຈຳເປັນໃຫ້ແກ່ການສຶກສາ ແລະ ສ້າງເປັນເອກກະສານ.

ມັນຄວນບັນທຶກໄດ້ວ່າ ບົດສະຫຼູບທີ່ໄດ້ນຳສະເໜີໃນທີ່ນີ້ ແມ່ນເປັນເລື້ອງຈິງສຳລັບກໍລະນີ ຂອງເມືອງຊຽງເງິນ ໂດຽສະເພາະ ກໍລະນີການສຶກສາບ້ານ. ເມືອງອື່ນໆ ອາດມີປະສົບການຄ້າຍຄືກັນ ຫຼື ແຕກຕ່າງ. ມັນອາດເປັນ ຜົນປະໂຫຍດທີ່ຈະສ້າງປະສົບການເຫຼົ່ານັ້ນ ເພື່ອວິເຄາະ ແບບມີການສົມທຽບ.

## 11. ເອກກະສານອ້າງອີງ


ARPODUC 2005, ການດຳເນີນການຄ້າ ແລະ ການສົ່ງອອກພຶດສິນຄ້າ ຂອງປະເທດອາກຊັງຕິນ

Debruyne 1, ກົ່ວເຫຼືອງ, ເອກກະສານບໍ່ໄດ້ກຳນົດວັນຜະລິດ ຂອງສະມາຄົມກົ່ວເຫຼືອງອາເມຣິກາ

ICRISAT, ສະຖາບັນຄົ້ນຄວ້າພືດນານາຊາດ ສຳລັບເຂດເຄິ່ງແຫ້ງແລ້ງຂອງເຂດຮ້ອນ

IITA, ສະຖາບັນນານາຊາດການກະສິກຳເຂດຮ້ອນ, 2000

Monahan J 2005, ການປ່ຽນສະພາບຂອງກົ່ວເຫຼືອງຂອງປະເທດປາຣາກວາຍ

Pandey RK, ສີສະຫວັດ, ນາວົງໄຊ, ສຸກຂີ ແລະ ອິນຕາ 2005

Shurtleff W ແລະ Aoyagi A 2004

Truelsen S. 2003,

USDA,